# ເລື່ອງສ່ຽວສີກັບສ່ຽວສາ ເຫລັ້ມ 3

# The Story of Two Friends, Book 3



## *ຄຳນຳ*

ພີ່ນ້ອງທີ່ຮັກແພງ

ໜັງສື *ເລື່ອງສ່ຽວສີກັບສ່ຽວສາ ເຫລັ້ມ 3* ນີ້ ເປັນເລື່ອງຕໍ່ຈາກເຫລັ້ມ 1 ເຫລັ້ມ 2 ຫາກທ່ານມາອ່ານເຫລັ້ມ 3 ໂລດ ທ່ານອາດຈະບໍ່ເຂົ້າໃຈ ຫລືເຮັດໃຫ້ສັບສົນ ຈຶ່ງຂໍແນະນຳໃຫ້ທ່ານອ່ານເຫລັ້ມ 1 ເຫລັ້ມ 2 ສາກ່ອນ ເພື່ອທ່ານຈະໄດ້ເຂົ້າໃຈຕໍ່ເນື່ອງກັນ ຖ້າອ່ານເຫລັ້ມນີ້ຈົບແລ້ວກໍຍັງມີເຫລັ້ມ 4 ຕໍ່ອີກ ຫວັງວ່າຈະໄດ້ຮັບຄວາມສົນໃຈຈາກທ່ານ

ຖ້າຫາກວ່າພີ່ນ້ອງອ່ານແລ້ວ ສົນໃຈຢາກຮູ້ເລື່ອງຕໍ່ອີກ ກໍໃຫ້ຂຽນຈົດໝາຍຕິດຕໍ່ໄດ້ທີ່

## *INTRODUCTION*

*Dear Reader:*

*The Story of Two Friends, Book 3* is a continuation of Books 1 and 2. If you have not yet read the first two books, and start reading Book 3 right away you might not understand it very well or may become confused. So please read Books 1 and 2 first so you can understand the material in the correct order. After finishing this book, we hope that you will want to read Book 4, the last book of the series, as well.

For further information, you may write to:

The funds for publishing
this book were supplied by
!!!

!!!(3-95, 5000 copies)



# ເລື່ອງສ່ຽວສີກັບສ່ຽວສາ ເຫລັ້ມ 3

# The Story of Two Friends, Book 3



ເລື່ອງສ່ຽວສີກັບສ່ຽວສາເຫລັ້ມ 1 ກັບເຫລັ້ມ 2 ເຮົາກໍອ່ານມາແລ້ວ ກໍເຫັນແລ້ວວ່າມີຄົນພວກນຶ່ງກຳລັງສົນໃຈຢາກຮູ້ຈັກວ່າ ໂລກທີ່ເຮົາອາໄສຢູ່ທຸກມື້ນີ້ລວມທັງທຸກສິ່ງທຸກຢ່າງໃນໂລກນີ້ມັນມາຈາກໃສ? ມີຜູ້ນຶ່ງຊື່ວ່າລອດ ເຂົາມີໜັງສືຂອງເພິ່ນຜູ້ແຕ່ງທີ່ບອກເຖິງການເປັນມາຂອງໂລກກັບທຸກສິ່ງທີ່ມີໃນໂລກ ແລະເຂົາກໍເປັນຜູ້ທີ່ອອກໄປບອກໃຫ້ຄົນອື່ນຮູ້ນຳກ່ຽວກັບສິ່ງຕ່າງໆ ໃນໜັງສືນັ້ນ. ໃນເຫລັ້ມທີ 3 ນີ້ກໍຈະຕໍ່ຈາກເລື່ອງທີ່ເຂົາລົມກັນຄ້າງໄວ້ໃນເຫລັ້ມທີ 2 ຖ້າພີ່ນ້ອງອ່ານເຫລັ້ມທີ 3 ນີ້ແລ້ວກໍໃຫ້ອ່ານຕໍ່ເຫລັ້ມທີ 4 ເດີມັນຈຶ່ງຈະເຂົ້າໃຈຄັກ.

In the first two books of this series we read about a group of people who were very interested in knowing where the world and everything in it came from. A man named Laud had the creator's book which gives answers to these questions. Laud liked to go around telling people what the book said. At the close of Book Two, Laud was at his friend Sii's house talking with people who were interested. The story in this book picks up from there. After you finish this book you will want to read the end of the story in Book 4 so that you do not miss anything.

# *ເລື່ອງສ່ຽວສີກັບສ່ຽວສາ ເຫລັ້ມ 3*

ພໍຮອດມື້ເຊົ້າມາ ພວກຜູ້ເຖົ້າຜູ້ແກ່ກໍພາກັນໄປເຮືອນລຸງທາ ເວົ້າລົມກັນເຖິງເລື່ອງຜີກັບເລື່ອງເພິ່ນຜູ້ແຕ່ງ ລົມກັນຢູ່ດົນເຕີບ ໃຜໆກໍເວົ້າວ່າ, ຢາກໄປຢູ່ກັບເພິ່ນຜູ້ແຕ່ງ ຍ້ອນວ່າຊັງຜີໜ່າຍຜີຫລາຍ ຖ້າແຕ່ກິນເປັດກິນໄກ່ກິນງົວຢູ່ທຸກຍາມບໍ່ໄດ້ເຮັດດີໃຫ້ຄົນເລີຍ, ມີແຕ່ເຮັດໃສ່ເຮັດໃຫ້ຢ້ານ ສໍາຫລັບເພິ່ນຜູ້ແຕ່ງນີ້ດີຫລາຍຈິບຫລາຍ ເພິ່ນແຕ່ງທຸກອັນທຸກແນວເອົາໄວ້ໃຫ້ຄົນ ເພິ່ນໄດ້ແຕ່ງທາງໄວ້ໃຫ້ຄົນຄືນດີຫາເພິ່ນ ແລ້ວຄົນທີ່ໄປໃນທາງຂອງເພິ່ນກໍຈະເຫັນເມືອງສະຫວັນບ່ອນເພິ່ນຜູ້ແຕ່ງເຮັດເອົາໄວ້ໃຫ້ຄົນ ແລ້ວໂຕເພິ່ນເອງກໍເປັນເຈົ້າຂອງສະຫວັນ.

## *The Story of Two Friends, Book 3*

The next morning the leading men of the village gathered in Uncle Thaa's house. They discussed at length whether to keep following the spirits or not. They all said that they wanted to follow the creator instead, because they were sick and tired of the spirits. The spirits never do anything good for people; they demand continual sacrifices of ducks, chickens, and cows and always cause trouble and make people afraid. But the creator isn't like this. He's wonderful and good and created everything for people. He even made a way for people to become right with him again, and those who follow his way will get to go to heaven, the place that the creator has specially prepared for people, and where the creator himself is the owner and ruler.

ແລ້ວພວກຜູ້ເຖົ້າຜູ້ແກ່ທຸກຄົນກໍເວົ້າວ່າ, "ຢາກໄປຢູ່ແທ້ໆ ເມືອງສະຫວັນນັ້ນ" ເຂົາກໍພາກັນຕົກລົງກັນວ່າ "ຈະໄປໃນທາງຂອງເພິ່ນຜູ້ແຕ່ງຄືລອດໄປນັ້ນ ແຕ່ວ່າບໍ່ຮູ້ຈັກວ່າຊິເຮັດແນວໃດ ແລ້ວທາງຜີທາງສາງກໍຍັງຢ້ານຢູ່."

ແລ້ວພວກເຂົາກໍເວົ້າກັນວ່າ, "ຊິຖາມລອດເບິ່ງກ່ອນ ວ່າຊິເຮັດແນວໃດຈຶ່ງຄ່ອຍຊິຫລົດຈາກຜີຈາກສາງໄດ້."

ພໍຄໍ່າລົງພວກຜູ້ເຖົ້າຜູ້ແກ່ນັ້ນກໍພາກັນໄປຊຸມກັນອີກ ແລ້ວລຸງທາກໍໄດ້ເວົ້າໃຫ້ລອດຟັງວ່າ, "ຕັດສິນໃຈແລ້ວວ່າຊິໄປນໍາເພິ່ນຜູ້ແຕ່ງ."

ແລ້ວເຂົາກໍຖາມລອດວ່າ, "ເວົ້າມາເບິ່ງດູ ເຮັດແນວໃດເລື້ອງຜີເລື້ອງສາງນັ້ນມັນຈຶ່ງຊິບໍ່ນໍາເຮົາທັນ."

ແລ້ວລອດກໍເວົ້າວ່າ, "ຕັ້ງແຕ່ທໍາອິດແຕ່ຕອນຂ້ອຍຢູ່ນໍາຜີນັ້ນ ຂ້ອຍກໍຢ້ານມັນຄືກັນ ຂ້ອຍຢ້ານຂ້ອຍໄປບໍ່ຮອດບໍ່ເຖິງເພິ່ນຜູ້ແຕ່ງ ຢ້ານຜີຢ້ານສາງນໍາທັນຄືກັນກັບພວກເຈົ້າຄິດນີ້ລະ."

ແລ້ວລຸງທາກໍເວົ້າວ່າ, "ແລ້ວໂຕເຮັດແນວໃດ?"

All the men said that they really wanted to go to heaven. They agreed that they wanted to go the way of the creator just as Laud did, but they were not sure how. Besides they were still afraid of the spirits.

"We're going to have to ask Laud about this, about how we can get free from the spirits," they said.

That evening after dark the village leaders gathered again. This time Laud was there. Uncle Thaa told Laud, "We have decided to follow the creator.

"But tell us," he asked, "how can we break away from the spirits without them taking revenge on us?"

"That's what I was afraid of too before I left the spirits," Laud said. "I was afraid I wouldn't quite make it to the creator– that the spirits would get me first."

"So what did you do?" Uncle Thaa asked.

ລອດກໍເວົ້າວ່າ, "ຂ້ອຍອ່ານເລື້ອຍໆ ໃນໜັງສືເພິ່ນຜູ້ແຕ່ງ ຈົນຂ້ອຍຮູ້ຈັກວ່າມັນມາຈັ່ງໃດໄປຈັ່ງໃດເລື່ອງຜີເລື່ອງສາງນີ້ ພໍຂ້ອຍຫາເບິ່ງໃນໜັງສືເພິ່ນຜູ້ແຕ່ງແລ້ວກໍຮູ້ວ່າຜີນີ້ກໍແມ່ນເທວະດາທີ່ໄດ້ກະບົດຕໍ່ເພິ່ນຜູ້ແຕ່ງ ແຕ່ວ່າເພິ່ນຜູ້ແຕ່ງມີອຳນາດໃຫຍ່ກວ່າມັນ ເມື່ອເພິ່ນສັ່ງມັນແນວໃດຫ້າມມັນແນວໃດມັນກໍຟັງ ເປັນແນວນັ້ນລະຂ້ອຍຈຶ່ງບໍ່ຢ້ານມັນອີກ."

ແລ້ວພໍ່ສີກໍເວົ້າວ່າ, "ໂອ້! ແມ່ນ ແມ່ນແທ້ ຜີນີ້ບໍ່ມີລິດເດດຄືເພິ່ນ ມັນສູ້ເພິ່ນບໍ່ໄດ້ ເພິ່ນຜູ້ແຕ່ງສັ່ງມັນແນວໃດມັນກໍຕ້ອງເຮັດແນວນັ້ນ ຖ້າເຮົາຢູ່ຝ່າຍເພິ່ນຜູ້ແຕ່ງເຊື່ອເພິ່ງເພິ່ນ ແລ້ວມັນຊິຕົວະຊິຕົ້ມແນວໃດກໍຢ່າ ເຮົາບໍ່ຕ້ອງຟັງບໍ່ຕ້ອງເຊື່ອມັນ."

ແລ້ວລຸງທາກໍເວົ້າຂຶ້ນວ່າ, "ເອົາລະບາດນີ້ ຢາກຟັງເລື່ອງປູ່ສັງກະສາຍ່າສັງກະສີຜູ້ເປັນພໍ່ເປັນແມ່ເດີມຂອງເຮົາແຕ່ກີ້ແຕ່ກ່ອນພຸ້ນ." ແລ້ວລາວກໍເວົ້າກັບລອດວ່າ, "ແລງນີ້ເຮົາຊິຕໍ່ເລື່ອງໃດ?"

"I kept reading the creator's book," Laud said, "until I understood clearly about the demon spirits. From my reading I learned that they are angels who have rebelled against the creator, but he has far greater power than they do. They have to obey his orders. And so I stopped being afraid of them."

Then Sii's father said, "You know, that really makes sense. The spirits aren't good like him. They are no match for him at all. They have to do whatever he tells them to do. So if we're on the creator's side and trust in him, we don't have to listen to them, no matter how they try to trick us, ."

"Now, Laud, would you tell us more about Adam and Eve, our first ancestors?" requested Uncle Thaa. "What are you going to tell us about tonight?"

ແລ້ວລອດກໍເວົ້າວ່າ, "ເອີ່ ບາດນີ້ຊິເບິ່ງເລື່ອງກາອິນ ຕໍ່ຈາກປູ່ສັງກະສາຍ່າສັງກະສີນັ້ນລະ ພໍກາອິນລູກກົກຂອງປູ່ສັງກະສາຂ້າອາເບັນຜູ້ນ້ອງແລ້ວ ກາອິນກໍໜີຈາກເພິ່ນຜູ້ແຕ່ງ ໜີຈາກປູ່ສັງກະສາຍ່າສັງກະສີໄປຢູ່ທາງຕາເວັນອອກ ປ່ອຍໃຫ້ເຖົ້າສອງເຖົ້າຢູ່ນໍາກັນ ແລ້ວຫລັງຈາກນັ້ນຕໍ່ມາຍ່າສັງກະສີໄດ້ລູກອີກຜູ້ນຶ່ງເປັນຜູ້ຊາຍ ແລ້ວຍ່າສັງກະສີກໍຕັ້ງຊື່ໃຫ້ວ່າເຊດ ລາວກໍເວົ້າວ່າ ເພິ່ນຜູ້ແຕ່ງໃຫ້ຜູ້ຂ້າໄດ້ລູກອີກ ແທນອາເບັນຜູ້ທີ່ກາອິນຂ້ານັ້ນ ແລ້ວປູ່ສັງກະສາກັບຍ່າສັງກະສີກໍໄດ້ແຜ່ລູກແຜ່ຫລານໄປຈົນເຕັມແຜ່ນດິນໂລກ ບາງຄົນກໍຟັງຄໍາເພິ່ນຜູ້ແຕ່ງ ແລ້ວກໍເຮັດນໍາຄໍາຂອງເພິ່ນບາງຄົນກໍບໍ່ນໍາບໍ່ຟັງ."

ແລ້ວລອດກໍເວົ້າວ່າ, "ຕໍ່ໄປນີ້ຈະເວົ້າເລື່ອງເຊື້ອສາຍຂອງເຊດ ຜູ້ເຊື່ອເພິ່ງເພິ່ນຜູ້ແຕ່ງໃຫ້ພວກເຈົ້າຟັງ ແລ້ວເຮົາຈະເຫັນວ່າເພິ່ນຜູ້ແຕ່ງບອກເຂົາວ່າແນວໃດ ໃນທາງທີ່ເພິ່ນຜູ້ແຕ່ງເຮັດໄວ້ໃຫ້ເຮົາຄືນດີຫາເພິ່ນນັ້ນ."

"Tonight we are going to continue the story of Adam and Eve," Laud replied. "After Cain, their oldest son, killed his brother Abel, Cain fled from the creator and from his parents and went to live in a land to the east. After he left his parents, they had another son, which Eve named 'Seth.' Eve said, 'The creator has given me another child to replace Abel whom Cain killed.' After this Adam and Eve had many more children who began to populate the earth. Some of their descendants obeyed the creator, but others did not.

"Now I'm going to tell you about the descendants of Seth who trusted in the creator. We will see what the creator told them about the way he made for us to get right with him."

ແລ້ວລຸງທາກໍເວົ້າວ່າ, "ເອົາເລີຍ, ເວົ້າ
ເລີຍລອດ. ເຮົາແຮ່ງຢາກຮູ້ຈັກທາງຄືນດີກັບ
ເພິ່ນຜູ້ແຕ່ງ ຢາກພາລູກພາຫລານໄປນຳ
ທາງທີ່ວ່າມັນຄັກມັນຖືກຕ້ອງພຸ້ນ ຊິເຊົາໄປ
ໃນທາງມືດທາງມົວອີກ ແລ້ວຊິມາໃນທາງ
ຮຸ່ງທາງແຈ້ງ ຍ້ອນວ່າເຄີຍຖືກມານຂີ້ຕົວະ
ມາພໍແຮງແລ້ວ ມັນໄດ້ລໍ້ລວງພາໄປທາງມືດ
ມາດົນແລ້ວ."

"Great! That's what I want to hear about." Uncle Thaa said. "I want to lead my family on the right and true path, the path of light, and get off this path of darkness. The devil has tricked us into taking the path of darkness for long enough."

ແລ້ວລອດກໍເວົ້າວ່າ, "ຜູ້ທີ່ຊື່ວ່າເຊດທີ່ຂ້ອຍ
ເວົ້າມານັ້ນລາວຟັງຄວາມເພິ່ນຜູ້ແຕ່ງ ເຮັດ
ນຳເພິ່ນຜູ້ແຕ່ງ ລາວມີລູກມີຫລານຫລາຍ
ຫລານຂອງລາວຄົນນຶ່ງຊື່ເອໂນກ ຖ້າເຮົາຈະ
ໄລ່ຈາກເຊດລູກຂອງປູ່ສັງກະສາ ນັບຕັ້ງແຕ່
ມື້ເຊດເກີດມາຈົນຮອດເອໂນກ ຫລານຂອງ
ເຊດນີ້ ກໍພໍດີໄດ້ສີ່ຮ້ອຍເກົ້າສິບສອງປີ ແຕ່
ວ່າໃນຕອນນັ້ນເຊດບໍ່ທັນຕາຍໄດ໋ ຍັງຢູ່ກັບ
ລູກກັບຫລານຢູ່ ຄົນແຕ່ກີ້ອາຍຸຍືນ
ເອໂນກລາວເຊື່ອເພິ່ນຜູ້ແຕ່ງ ໜຽວແໜ້ນ
ຕິດສະໜິດກັບເພິ່ນ ເຮັດຖືກອົກຖືກໃຈເພິ່ນ
ເອໂນກມີອາຍຸຮອດສາມຮ້ອຍຫົກສິບຫ້າປີ
ແລ້ວເພິ່ນຜູ້ແຕ່ງກໍເອົາເອໂນກຂຶ້ນໄປຢູ່ນຳ
ເພິ່ນ ຕໍ່ຈາກນັ້ນບໍ່ມີໃຜເຫັນໜ້າເອໂນກອີກ

Then Laud continued, "Seth, who I just mentioned, believed and obeyed the creator. He had many descendants. One of his descendants was named Enoch. Enoch was born 492 years after his ancestor Seth. But Seth was still living because people in those days lived a long time. Now, Enoch believed firmly in the creator and was very committed to him. The creator was very pleased with him. When Enoch was 365 years old the creator took him up to be with himself, and he was never seen again.

ໃຈຂອງເພິ່ນຜູ້ແຕ່ງກໍຢາກໃຫ້ທຸກຄົນໃນໂລກນີ້ຄືນດີຖືກກັນກັບເພິ່ນ ເພິ່ນຢາກໃຫ້ທຸກຄົນໄປຢູ່ນຳເພິ່ນ ຄືກັນກັບເອໂນກນັ້ນລະ."

ແລ້ວລອດກໍຖາມພວກຄົນທີ່ກຳລັງຟັງນັ້ນວ່າ, "ພວກເຈົ້າເດ່ ບໍ່ຢາກໄປສະຫວັນຄືເອໂນກບໍ້?"

ພໍຖາມແນວນັ້ນແລ້ວ ໝົດທຸກຄົນຢູ່ທີ່ນັ້ນກໍຕອບວ່າ, "ໂອ້ຍ! ກໍຢາກໄປນັ້ນລະ ເພາະຊິໄດ້ຢູ່ກັບເພິ່ນຜູ້ແຕ່ງ."

ແລ້ວສາກໍຖາມລອດວ່າ, "ເອໂນກບໍ່ແມ່ນລາວປ່ວຍລາວໄຂ້ຕາຍບໍ່? ເພິ່ນຜູ້ແຕ່ງຕັ້ງເອົາລາວຂຶ້ນໄປຢູ່ນຳຊື່ໆ ນີ້ບໍ່?"

ແລ້ວລອດກໍຕອບວ່າ, "ເພິ່ນຜູ້ແຕ່ງຕັ້ງເອົາຂຶ້ນໄປຊື່ໆ ນີ້ລະ ເປີດເບິ່ງໃນໜັງສືຂອງເພິ່ນຜູ້ແຕ່ງ ໃນບົດທີ 5 ດູ ບອກວ່າແນວໃດ."

ແລ້ວສາກໍອ່ານບົດທີ 5 ຂໍ້ 21 ຮອດ 24 ວ່າ,

The creator wants everyone in the world to get right with him, so we can all go to be with him like Enoch."

Then Laud asked those sitting there, "What do think? Wouldn't you like to go to heaven like Enoch?"

"We sure would," everyone responded.

Saa asked, "Are you sure Enoch didn't just get sick and die? You don't mean to say that the creator actually took him right straight up to heaven?"

"That's what I mean," Laud replied. "The creator took him right up to heaven. Open the creator's book to chapter 5. What does it say?"

So Saa read from chapter 5:21-24:

21-24 ຕອນເອໂນກອາຍຸໄດ້ 65 ປີກໍໄດ້ລູກຊາຍຊື່ວ່າເມທູເຊລາ ຫລັງຈາກໄດ້ເມທູເຊລາແລ້ວ ເອໂນກກໍໃຊ້ຊີວິດຕິດຕາມເພິ່ນຜູ້ແຕ່ງທຸກບາດຍ່າງອີກ 300 ປີ ກໍມີລູກມີເຕົ້າອີກຫລາຍຄົນ ຈົນອາຍຸຮອດ 365 ປີ ເອໂນກບໍ່ໄດ້ຕາຍ ແຕ່ເພິ່ນຜູ້ແຕ່ງຮັບເອົາໄປຢູ່ນຳເພິ່ນທັງເປັນ ຍ້ອນເອໂນກໄດ້ໃຊ້ຊີວິດຕິດຕາມເພິ່ນໝົດທຸກບາດຍ່າງ.

ແລ້ວລອດກໍເວົ້າຂຶ້ນວ່າ, "ໂອ້! ຄືຊິມ່ວນເນາະຖ້າບໍ່ຕາຍບໍ່ເຈັບບໍ່ເປັນແນວນັ້ນ ຂຶ້ນໄປຢູ່ນຳເພິ່ນໂຕຫາຍວັບໄປເລີຍ ໝູ່ພີ່ນ້ອງລູກເມຍກໍຄືຊິບໍ່ໄດ້ຍາກນຳ. ຍ້ອນວ່າເພິ່ນຜູ້ແຕ່ງເປັນເຈົ້າຂອງສະຫວັນຢູ່ແລ້ວ ກ່ອນທີ່ເພິ່ນຜູ້ແຕ່ງຊິເອົາເອໂນກຂຶ້ນໄປສະຫວັນນັ້ນ ຕອນນັ້ນລູກຫລານຂອງເອໂນກກໍມີຫລາຍ ຫລານຄົນນຶ່ງຂອງເອໂນກຊື່ວ່າໂນອາ ແລ້ວໃນຊ່ວງຂອງໂນອາຢູ່ນັ້ນຄົນກໍແຜ່ຂຶ້ນຫລາຍໃນໂລກນີ້.

21 When Enoch had
lived 65 years, he
became the father of
Methuselah. 22 And
after he became the
father of Methuselah,
Enoch walked with the
creator 300 years and
had other sons and
daughters. 23
Altogether, Enoch lived
365 years. 24 Enoch
walked with the creator;
then he was no more,
because the creator took
him away.

Then Laud said, "What a great way to go! No death, no sickness, no pain! Just disappear and go right up to be with the creator. And since heaven belongs to the creator, your family wouldn't have to worry about you at all.

"Enoch had many descendants. One of them was named Noah. During Noah's lifetime the number of people in the world was growing rapidly.

ແຕ່ວ່າຄົນສ່ວນຫລາຍບໍ່ເຊື່ອເພິ່ງເພິ່ນຜູ້ແຕ່ງ ແລ້ວພວກເຂົາກໍພາກັນເຮັດນຳຄວາມຄຶດນຳໃຈຂອງຕົນເອງ ເຮັດແຕ່ແນວບໍ່ຈິບບໍ່ດີ ພວກເຂົາຮູ້ຈັກຢູ່ເພິ່ນຜູ້ແຕ່ງນັ້ນ ແຕ່ບໍ່ຫົວຊາບໍ່ຖື ໄປແຕ່ນຳໃຈຕົນເອງ ພວກເຂົາຄຶດຢາກຊິຂາບຊິໄຫວ້ຫຍັງເຂົາກໍເຮັດໂລດ ຄຶດຢາກເຮັດຮູບອັນນັ້ນຮູບອັນນີ້ຂຶ້ນເຂົາກໍເຮັດ ແລ້ວເຂົາກໍຂາບກໍໄຫວ້ຮູບອັນທີ່ເຂົາເຮັດນັ້ນແທນເພິ່ນຜູ້ແຕ່ງ ສຳມະປິເອົາແຕ່ຄຶດຢາກເຮັດເຂົາບໍ່ນັບຖືເພິ່ນຜູ້ແຕ່ງເລີຍ."

ແລ້ວລອດກໍເວົ້າອີກວ່າ, "ພໍ່ແມ່ຂອງເຮົາສະໄໝແຕ່ກີ້ແຕ່ກ່ອນກໍຢູ່ໄກຈາກເພິ່ນຜູ້ແຕ່ງ ເຂົາບໍ່ຫ່ວງບໍ່ຄຶດເຫັນເພິ່ນເລີຍ ມີແຕ່ຄຶດຢາກໄດ້ຢາກມ່ວນທໍ່ນັ້ນ ແຕ່ວ່າເພິ່ນຜູ້ແຕ່ງກໍຄຶດຫາທາງໄວ້ໃຫ້ເຂົາແລ້ວເພື່ອພວກຄົນຈະຍ່າງນຳທາງນັ້ນໄປຫາເພິ່ນ ແຕ່ວ່າພວກເຂົາບໍ່ນຳທາງນັ້ນເລີຍ."

ແລ້ວບາດນີ້ພໍ່ສີກໍເວົ້າວ່າ, "ພວກເຂົາບໍ່ຟັງບໍ່ເຊື່ອເພິ່ງເພິ່ນແນວນັ້ນ ເຂົາກໍຢູ່ໃນທາງມືດແມ່ນບໍ່ລະ?"

But most of them did not obey the creator. They just did whatever they wanted, and they did all kinds of evil. They knew about the creator, but couldn't care less about him. They just followed their own desires. They worshiped whatever they pleased. They made all sorts of idols and worshiped these useless things they had made instead of worshiping the creator.

"Our ancestors," Laud went on, "had strayed far from the creator. They were completely unconcerned and unaware about him, just living selfishly for their own pleasure. The creator had come up with a way for them to return to him, but no one took that path."

"Then that means that they were on the path of darkness, right?" Sii's father asked.

ແລ້ວລອດກໍຕອບວ່າ, "ແມ່ນຄວາມເຈົ້າເວົ້ານັ້ນລະ ພວກຄົນທີ່ບໍ່ເຊື່ອຟັງເພິ່ນນັ້ນແຮ່ງເຮັດບໍ່ຈົບບໍ່ດີຂຶ້ນຫລາຍຢ່າງ."

ແລ້ວສີກໍຖາມວ່າ, "ເມື່ອຄົນເຮັດແນວນັ້ນແລ້ວ ເພິ່ນຜູ້ແຕ່ງຈະເຮັດແນວໃດ?"

ລອດກໍເວົ້າວ່າ, "ອ່ານບົດທີ 6 ຂໍ້ 3 ເບິ່ງດູເພິ່ນວ່າແນວໃດ."

ແລ້ວສີກໍອ່ານວ່າ,

*3* ເພິ່ນຜູ້ແຕ່ງກໍເລີຍເວົ້າວ່າ, "ເຮົາ
ເມື່ອຍຫ້າມໄວ້ແລ້ວ ພະວິນຍານ
ຂອງເຮົາໄດ້ບອກໄດ້ເຕືອນພວກ
ຄົນພໍແຮງແລ້ວ ແຕ່ມັນກໍຍັງບໍ່
ເຊື່ອຟັງ ມັນເປັນແຕ່ຊາດເນື້ອໜັງ
ແນວຢູ່ບໍ່ໄດ້ດົນ ເຮົາຈະໃຫ້ເວລາ
ມັນອີກພຽງ 120 ປີ."

ພໍອ່ານແລ້ວລອດກໍໃຫ້ອ່ານຂໍ້ 6 ຮອດ 7 ຕໍ່ອີກວ່າ,

*6-7* ເພິ່ນກໍເລີຍເວົ້າວ່າ, "ກະເທີນ
ແລ້ວທີ່ເຮົາໄດ້ສ້າງຄົນຂຶ້ນມາແຕ່
ທຳອິດ ເຮົາອຸກໃຈຫລາຍກັບຄົນ
ພວກນີ້ ຈຳເປັນລະ ທີ່ເຮົາຈະ

"That's right," responded Laud. "And those who didn't obey the creator just got worse and worse."

"So what did the creator do?" Sii asked.

"Look at chapter 6 verse 3, Sii," Laud said. "See what the creator said."

Sii began to read:

*3* Then the creator said,
"My Spirit will not
contend with man
forever, for he is mortal;
his days will be a
hundred and twenty
years."

Then Laud asked him to read verses 6 and 7 too:

*6* The creator was
grieved that he had
made man on the earth,
and his heart was filled
with pain. *7* So the
creator said, "I will

ຕ້ອງລົບລ້າງຄົນກັບສັດອອກຈາກແຜ່ນດິນໂລກໃຫ້ໝົດບໍ່ໃຫ້ເຫລືອເລີຍ ມັນບໍ່ເປັນຕາສ້າງຂຶ້ນມາຈັກໜ່ອຍເລີຍຄົນນີ້."

wipe mankind, whom I have created, from the face of the earth; men and animals, and creatures that move along the ground, and birds of the air; for I am grieved that I have made them."

ແລ້ວລຸງທາກໍເວົ້າວ່າ, "ເພິ່ນກໍອຸກເປັນຄືກັນເນາະ."

"So the creator can get upset too," Uncle Thaa remarked.

ແລ້ວລອດກໍຕອບວ່າ, "ຍ້ອນຄົນລຸ້ນນີ້ບໍ່ເຮັດນຳ ບໍ່ເຊື່ອຟັງເພິ່ນ ເປັນຄົນບໍ່ຈົບບໍ່ດີນີ້ລະເພິ່ນຜູ້ແຕ່ງຈຶ່ງເສຍດາຍຄົນທີ່ເພິ່ນໄດ້ແຕ່ງຂຶ້ນມາແລ້ວ ເພິ່ນຜູ້ແຕ່ງກໍຮູ້ກໍເຫັນໝົດແນວທີ່ຄົນເຮັດນັ້ນ ພໍເພິ່ນເຫັນດັ່ງນັ້ນເພິ່ນກໍເວົ້າວ່າ ເຮົາເບິ່ງບໍ່ໄດ້ແລ້ວຄົນພວກນີ້ ພະວິນຍານຂອງເຮົາໄດ້ບອກໄດ້ເຕືອນຄັກແລ້ວ ແຕ່ມັນຫາກບໍ່ເຊື່ອຟັງ ເຮົາຈະໃຫ້ເວລາເຂົາອີກຮ້ອຍຊາວປີທໍ່ນັ້ນລະ ເພິ່ນວ່າແນວນີ້ຍ້ອນເພິ່ນເສຍດາຍທີ່ຄົນບໍ່ຟັງເພິ່ນ ເພິ່ນຢາກໃຫ້ຄົນເປັນອັນນຶ່ງອັນດຽວກັນກັບເພິ່ນ ຄົນເຮົາຫາກຫັນໜ້າໜີ ແລ້ວກໍຂາບກໍໄຫວ້ແນວອື່ນ ດັ່ງນັ້ນລະເພິ່ນຈຶ່ງຄຶດນຳ

"Yes," Laud replied, "the creator was disappointed by the people he had made because of their disobedience and wickedness. The creator, who knew everything they were doing, finally said, 'I can't allow these people to go on like this. They refuse to listen even though my Spirit has warned them clearly. I'll give them another 120 years and that's it.' He felt bad that people wouldn't listen to him, and he wanted everyone to return to him. But people just turned away and worshiped other things. And that's why he was sad.

“ແຕ່ວ່າຄົນທັງໝົດໃນລຸ້ນນີ້ເພິ່ນກໍເຫັນວ່າມີ
ຜູ້ດຽວທີ່ນັ້ນທີ່ຟັງເພິ່ນ ຜູ້ນັ້ນກໍຊື່ວ່າໂນອາ
ໂນອາຜູ້ນີ້ກໍແມ່ນລູກແມ່ນຫລານຂອງ
ເອໂນກ ຄົນທີ່ເພິ່ນຜູ້ແຕ່ງເອົາຂຶ້ນໄປນັ້ນ
ລະ.”

ພໍເວົ້າຊໍ່ານັ້ນແລ້ວສາກໍຖາມວ່າ, “ແຕ່ກີ້ເພິ່ນ ໃຫ້ເວລາຄົນຮ້ອຍຊາວປີ ແລ້ວເພິ່ນເຮັດ ແນວໃດອີກ?”

ແລ້ວລອດກໍເບິ່ງໃນບົດທີ 6 ຕໍ່ ມັນເວົ້າວ່າ, “ຂ້ອຍຊິອ່ານໃຫ້ຟັງເດີ.” ແລ້ວມັນກໍອ່ານຂໍ້ 8 ຮອດ 13 ວ່າ,

8 ມີແຕ່ໂນອາທີ່ໄດ້ຮັບຄວາມເມດຕາ ຈາກເພິ່ນຜູ້ແຕ່ງ.

9 ຄືຊີວິດຂອງໂນອາເປັນດັ່ງນີ້
ໂນອາເປັນຄົນເຂົ້າທ່າເຂົ້າທີກັບເພິ່ນ
ຜູ້ແຕ່ງແຕ່ຄົນດຽວໃນຕອນນັ້ນ ຍ້ອນ
ໂນອາເປັນຄົນຊື່ມີໃຈເປັນທຳ ໂນອາ
ໄດ້ເຊື່ອໃຈເພິ່ນຜູ້ແຕ່ງ ໃຊ້ຊີວິດ
ຕິດຕາມເພິ່ນຢູ່ທຸກຍາມ.

“Of all the people alive at that time he saw only one man who obeyed him, a man named ‘Noah.’ Noah was a descendant of Enoch, the man that the creator had taken to heaven.”

“When the 120 years was up, what did he do?” Saa asked.

“I'll read chapter 6:8-13,” Laud said in reply:

8 But Noah found favor in the eyes of the creator.

9 This is the account of Noah. Noah was a righteous man, blameless among the people of his time, and he walked with
the creator. 10 Noah
had three sons: Shem, Ham and Japheth.

10 ໂນອາໄດ້ລູກຊາຍສາມຄົນຊື່
ວ່າ ເຊມ ຢາເຟດ ກັບຮາມ. 11-
12 ແຕ່ເພິ່ນຜູ້ແຕ່ງຫລຽວເບິ່ງ
ແຜ່ນດິນໂລກກໍເຫັນວ່າເສື່ອມຊາມ
ໄປໝົດ ມີແຕ່ຄວາມໂຫດຫ້ຽມ
ຊົ່ວຊ້າເລວຊາມ ຂ້າຟັນລັນແທງ
ກັນ ຍ້ອນໃຈຂອງຄົນເສື່ອມຊາມ
ປ່ຽນໄປໃນທາງບໍ່ດີໝົດ.

13 ເພິ່ນຜູ້ແຕ່ງກໍເລີຍເວົ້າກັບ
ໂນອາວ່າ, "ໂພດແລ້ວທາງຂອງຄົນ
ພວກນີ້ ສຸດທໍ່ນີ້ແລ້ວ ໂລກກໍມີແຕ່
ຄວາມຫ້ຽມໂຫດເຕັມໄປໝົດ
ຍ້ອນເຂົາເຮັດຊົ່ວແນວບໍ່ດີ ບໍ່ເຫິງ
ເຮົາຊິລົບລ້າງເຂົາອອກຈາກ
ແຜ່ນດິນໂລກໃຫ້ມັນຕາຍຈິບຫາຍ
ໄປໝົດ."

11 Now the earth was
corrupt in the creator's
sight and was full of
violence. 12 The creator
saw how corrupt the
earth had become, for
all the people on earth
had corrupted their
ways.

13 So the creator said
to Noah, "I am going to
put an end to all
people, for the earth is
filled with violence
because of them. I am
surely going to destroy
both them and the
earth."

ແລ້ວລອດກໍເວົ້າວ່າ, "ເພິ່ນຜູ້ແຕ່ງເຫັນໝົດແນວທີ່ຄົນເຮັດ ເພິ່ນຮູ້ຮອດຄວາມຄຶດທີ່ຢູ່ໃນໃຈຂອງຄົນ ໃຜຊິເຊື່ອງຫຍັງລີ້ຫຍັງໃຫ້ຫລີດຈາກເພິ່ນກໍບໍ່ໄດ້ ແນວບໍ່ຈົບບໍ່ດີຂອງຄົນນັ້ນເພິ່ນບໍ່ມັກ ເພິ່ນຍັງບໍ່ທັນລົງໂທດ ຍ້ອນວ່າເພິ່ນຢາກໃຫ້ຄົນມີເວລາປ່ຽນຈິດປ່ຽນໃຈມາຫາເພິ່ນທຸກຍາມ

Then Laud said, "The creator sees everything people do. He even knows our thoughts. No one can hide a thing from him. The bad things that people do displease him greatly. But he doesn't punish us immediately because he always wants to give us time to repent and return to him. But that time has a limit.



ແຕ່ມີເວລາຈຳກັດ ຄືດັ່ງລຸ້ນຂອງໂນອາ ນັ້ນລະ ເພິ່ນກໍໃຫ້ເວລາຢູ່ຮ້ອຍຊາວປີທໍ່ ນັ້ນ ພໍຄົບຮ້ອຍຊາວປີແລ້ວພວກຄົນກໍຍັງ ບໍ່ປ່ຽນຈິດປ່ຽນໃຈ ເພິ່ນຈຶ່ງໄດ້ລົງໂທດ ເຂົາ."

ແລ້ວສາກໍຖາມວ່າ, "ເພິ່ນລົງໂທດແບບ ໃດຮື? ເພິ່ນຊິໃຫ້ຫຍັງເກີດຂຶ້ນກັບຄົນ?"

ແລ້ວລອດກໍຕອບວ່າ, "ເບິ່ງໃນຂໍ້ 14 ຮອດ 17 ດູ ເພິ່ນບອກໂນອາວ່າແນວ ໃດ."

ແລ້ວສາກໍເວົ້າວ່າ, "ຂ້ອຍອ່ານກ່ອນ ເດີ!" ແລ້ວມັນກໍອ່ານວ່າ,

It won't go on forever. It's like during Noah's time, when he gave the people 120 years to change. And when the 120 years was up the people still hadn't repented, so he punished them."

"How'd he punish them?" Saa asked. "What happened to them?"

"Take a look at verses 14-17," Laud replied. "What did the creator tell Noah?"

"I'll read it," Saa said, and began reading:

*14-16* ແຕ່ສ່ວນເຈົ້າ ເຮົາບໍ່ໃຫ້ເປັນ
ຫຍັງດອກໂນອາເອີຍ ໃຫ້ເຈົ້າໄປ
ບັກເອົາໄມ້ເນື້ອແຂງມາເຮັດເຮືອ
ລຳໃຫຍ່ໆ ໄວ້ເດີ ເຮັດໃຫ້ມັນຍາວ
300 ສອກ ກວ້າງ 50 ສອກ ສູງ
30 ສອກ ແລ້ວທາງໃນໃຫ້ເຮັດ
ເປັນສາມຊັ້ນ ຊັ້ນເປັນຫ້ອງໆ
ແລ້ວເຮັດປະຕູເຂົ້າປ່ອງນຶ່ງຢູ່ທາງ
ຂ້າງເຮືອ ແລ້ວໃຫ້ມີຊ່ອງລົມສູງ
ນຶ່ງສອກອ້ອມເຮືອຢູ່ທາງຫລັງຄາ
ເຮັດແລ້ວກໍເອົາຢາງໄມ້ຢາຂ້າງໃນ
ກັບຂ້າງນອກເຮືອບໍ່ໃຫ້ນ້ຳເຂົ້າ.
*17* ຄືຈັກໜ່ອຍເຮົາຈະເຮັດໃຫ້ນ້ຳ
ຖ້ວມໂລກ ທຸກອັນທຸກແນວທີ່ມີ
ລົມຫັນໃຈກໍຈະຕາຍຈົບຫາຍໄປ
ໝົດ ບໍ່ໃຫ້ເຫລືອໄວ້ຈັກແນວ.

ສາກໍເວົ້າວ່າ, "ໂອ້! ເພິ່ນວ່າຊິໃຫ້ນ້ຳຖ້ວມໂລກເນາະ."

ແລ້ວລອດກໍເວົ້າວ່າ, "ເອີ່ ເພິ່ນບອກໂນອາວ່າຊິໃຫ້ນ້ຳຖ້ວມໂລກ ແລ້ວເພິ່ນກໍບອກໂນອາໃຫ້ເອົາໄມ້ເຮັດເຮືອລຳໃຫຍ່ໆ

*14* So make yourself an
ark of cypress wood;
make rooms in it and
coat it with pitch inside
and out. *15* This is how
you are to build it: The
ark is to be 450 feet
long, 75 feet wide and
45 feet high. *16* Make a
roof for it and finish the
ark to within 18 inches
of the top. Put a door in
the side of the ark and
make lower, middle and
upper decks. *17* I am
going to bring
floodwaters on the earth
to destroy all life under
the heavens, every
creature that has the
breath of life in it.
Everything on earth will
perish.

"Wow!" exclaimed Saa, "the creator said he was going to send a world flood."

"That's right," said Laud. "He told Noah that he was going to flood the whole world. And he told him to build a huge boat out of wood.

ພວກຄົນທີ່ເຊື່ອເພິ່ງເພິ່ນຟັງເພິ່ນກໍໄດ້ເຂົ້າໄປຢູ່ໃນເຮືອຈຶ່ງຊິບໍ່ຕາຍ."

ແລ້ວສາກໍຖາມວ່າ, "ຄົນອື່ນເດ ເພິ່ນຜູ້ແຕ່ງໄດ້ບອກເຂົາຢູ່ບໍ່ວ່ານໍ້າຊິຖ້ວມໂລກ?"

ແລ້ວລອດກໍຕອບວ່າ, "ບອກຢູ່ ເຂົາຫາກບໍ່ຟັງບໍ່ເຊື່ອເພິ່ນ ມີແຕ່ໂນອາທີ່ຟັງທີ່ເຊື່ອເພິ່ນ ແນວໃດກໍຢ່າ ແມ່ນຄົນຊິບໍ່ຟັງກໍຕາມ ເພິ່ນກໍຍັງຮັກແພງ ເພິ່ນກໍຍັງຮັກຄົນຢູ່ ເພິ່ນໄດ້ບອກໂນອາເຖິງແນວທີ່ຈະເກີດຂຶ້ນ ແລ້ວກໍໄດ້ໃຫ້ໂນອາໄປບອກໃຫ້ພວກຄົນໃຫ້ຮູ້ຈັກ ໃຫ້ໄດ້ຍິນຄືດັ່ງກັບໂນອາໄດ້ຍິນນັ້ນ."

ພໍລອດເວົ້າດັ່ງນັ້ນແລ້ວ ລຸງທາກໍເວົ້າຂຶ້ນວ່າ, "ເພິ່ນຜູ້ແຕ່ງຮັກແພງຄົນຫລາຍເນາະ ແຕ່ວ່າຄົນຫາກດື້ ບໍ່ຢາກຟັງເພິ່ນບໍ່ຢາກເຊື່ອເພິ່ນ ພໍເພິ່ນຜູ້ແຕ່ງບອກໃຫ້ເຮັດແນວນຶ່ງຄົນກໍຊັດໄປເຮັດອີກແນວນຶ່ງ ແນວໃດກໍຢ່າເພິ່ນຜູ້ແຕ່ງກໍຍັງຢາກໃຫ້ທຸກຄົນຫລີດຈາກບາບຈາກໂທດ ຫລີດຈາກຄວາມຕາຍ ເພິ່ນອົດທົນແລະຫວັງດີຕໍ່ຄົນເຮົາແທ້ໆ ລະ."

Then everyone who trusted and obeyed the creator could go into the boat to be saved."

"What about the others?" Saa asked. "Did the creator let them know that the world was going to flood?"

"He told them alright," said Laud, "but they wouldn't listen. Only Noah believed the creator. Even so, the creator still loved and cared for people. He told Noah what was going to happen and had Noah tell everyone else."

Uncle Thaa spoke up, "The creator really cares about people, doesn't he? But we're so stubborn; we refuse to listen to him or obey him. When he tells us to do one thing, we charge off in another direction and do something else. Even so the creator still wants everyone to escape from sin and punishment and not have to die. He sure is patient with us."

ແລ້ວລອດກໍເວົ້າວ່າ, "ເອີ່ ເພິ່ນອິດທິນແທ້ ແຕ່ຍາມໃດມາເພິ່ນກໍຮັກແພງແລະຫວັງດີຕະຫລອດມາ."

ແລ້ວລຸງທາກໍຖາມລອດອີກວ່າ, "ສັດສາວາສິ່ງນັ້ນເດ່ ເຮັດແນວໃດມັນຈຶ່ງບໍ່ຕາຍເມື່ອນໍ້າຖ້ວມໂລກນັ້ນ?"

ແລ້ວລອດກໍບອກລຸງທາວ່າ, "ໃຫ້ເຈົ້າອ່ານຂໍ້ 18 ຮອດ 22 ເບິ່ງດູ."

ແລ້ວລຸງທາກໍອ່ານວ່າ

18 "ແຕ່ໂຕເຈົ້ານັ້ນເຮົາສັນຍາ
ໄວ້ກັບເຈົ້າຮັບຮອງບໍ່ໃຫ້ເປັນ
ຫຍັງ ເມື່ອເຮັດເຮືອໃຫຍ່ສຳ
ເລັດແລ້ວ ໃຫ້ເຈົ້າເຂົ້າໄປຢູ່ໃນ
ນັ້ນ ທັງລູກທັງເມຍກັບລູກໄພ້
ພ້ອມ. 19 ແລ້ວເຮົາຈະໃຫ້ເຈົ້າ
ເອົາພວກສັດໝົດທຸກແນວເຂົ້າຢູ່
ໃນເຮືອນຳເຈົ້າແນວລະຄູ່ໆ
ທັງໂຕຜູ້ໂຕແມ່ ເພື່ອລ້ຽງຊີວິດ
ຂອງພວກມັນໄວ້ໃຫ້ສືບໜໍ່ແທນ
ແນວຕໍ່ໄປ.

"He sure is," Laud replied. "And he has always lovingly cared for us like this from the beginning."

"What about all the animals?" Uncle Thaa asked Laud. "How were they going to stay alive during the flood?"

In reply Laud asked Uncle Thaa to read verses 18-22:

18 "But I will establish
my covenant with you,
and you will enter the ark;
you and your sons and
your wife and your sons'
wives with you. 19 You
are to bring into the ark
two of all living creatures,
male and female, to keep
them alive with you.

20 ເຮົາຈະໃຫ້ພວກສັດທຸກແນວ
ແນວລະຄູ່ໆ ມາຢູ່ນຳເຈົ້າເດີ
ທັງສັດບິນສັດບົກກັບທຸກແນວທີ່
ໄຕ່ໄປເຕັ້ນມາເທິງແຜ່ນດິນໂລກ
ເພື່ອໃຫ້ເຈົ້າເບິ່ງແຍງຮັກສາມັນ
ໄວ້ໃນເຮືອຍາມນ້ຳຖ້ວມໂລກ.
21 ໃຫ້ເຈົ້າໄປເອົາອາຫານແນວຢູ່
ແນວກິນໝົດທຸກແນວມາເກັບ
ມ້ຽນໄວ້ໃນເຮືອເດີ ເພື່ອພວກ
ເຈົ້າກັບພວກສັດຈະມີພໍຢູ່ພໍກິນ
ຍາມນ້ຳຖ້ວມນັ້ນ."

22 ພໍເພິ່ນຜູ້ແຕ່ງບອກແລ້ວ
ໂນອາກໍເຮັດຕາມຄຳສັ່ງຂອງ
ເພິ່ນທັງໝົດ.

ພໍລຸງທາອ່ານແລ້ວລອດກໍເວົ້າວ່າ, "ເຮືອທີ່ເພິ່ນບອກໃຫ້ໂນອາເຮັດນັ້ນກໍບໍ່ແມ່ນພໍຊ່ຳໃດຊ່ຳນຶ່ງໄດ໋ ມັນໃຫຍ່ສົມຄວນ ໃຫຍ່ຈົນເອົາທຸກແນວເຂົ້າໃນນັ້ນໄດ້ ແລ້ວເພິ່ນຜູ້ແຕ່ງກໍບອກວ່າ ໃຫ້ເຮັດເປັນຫ້ອງໆ ຫ້ອງຂອງຄົນ ຫ້ອງຂອງສັດ ແລ້ວເພິ່ນກໍບອກໃຫ້ເອົາແນວຢູ່ແນວກິນຂອງຄົນຂອງສັດເຂົ້າໄວ້ໃນເຮືອນຳ

20 Two of every kind of
bird, of every kind of
animal and of every kind
of creature that moves
along the ground will
come to you to be kept
alive. 21 You are to take
every kind of food that is
to be eaten and store it
away as food for you and
for them."

22 Noah did everything
just as the creator
commanded him.

When Uncle Thaa finished, Laud said, "The boat he told Noah to make wasn't just an ordinary one. It was huge, so big they could put everything into it that they needed. And the creator told Noah to make rooms in it, rooms for people and stalls for animals. Then he said to gather food for people and animals and store it in the boat too.

ເຮືອໃຫຍ່ແນວນີ້ໃນຕອນນັ້ນບໍ່ມີໃຜເຄີຍເຫັນ ໂນອາເຮັດນຳຄຳເພິ່ນບອກ ເຮັດເຮືອແລ້ວກໍໄປບອກຄົນນຳ ພວກຄົນຫາກບໍ່ຟັງບໍ່ເຊື່ອຄຳບອກຄຳເວົ້ານັ້ນ ສ່ວນໂນອານັ້ນລາວກໍຟັງ ແລ້ວກໍເຮັດນຳແນວທີ່ເພິ່ນຜູ້ແຕ່ງບອກທຸກສິ່ງທຸກຢ່າງ ຄືກັນກັບຂໍ້ 22 ນັ້ນລະ ບອກວ່າເພິ່ນຜູ້ແຕ່ງບອກແລ້ວໂນອາກໍເຮັດຕາມຄຳສັ່ງຂອງເພິ່ນຜູ້ແຕ່ງທັງໝົດ."

ແລ້ວລອດກໍເວົ້າວ່າ, "ໂນອານີ້ເພິ່ນເຊື່ອຟັງແທ້ໆ ລະ ຍ້ອນລາວຟັງຄຳຂອງເພິ່ນຜູ້ແຕ່ງ ລາວຈຶ່ງຖືກອົກຖືກໃຈເພິ່ນຜູ້ແຕ່ງ ແລ້ວໃນຕອນນັ້ນກໍຫວິດຈາກນ້ຳຖ້ວມ."

ພໍລອດເວົ້າດັ່ງນັ້ນແລ້ວ ພໍ່ສີກໍເວົ້າວ່າ, "ໂນອານີ້ຄືຊິມີບຸນຫລາຍເນາະ ຈຶ່ງຄ່ອຍຫວິດຈາກນ້ຳຖ້ວມໃນຕອນນັ້ນ."

ແລ້ວລອດກໍຕອບພໍ່ສີວ່າ, "ບໍ່ແມ່ນ ບໍ່ແມ່ນລາວອາໄສບຸນຄຸນຂອງຕົນເອງໄດ໋ ໂນອາລາວກໍເປັນເຊື້ອສາຍຂອງຄົນບາບຄືກັນ ຈິດໃຈກໍຄືກັບຄົນອື່ນນັ້ນລະ

In those days no one had ever seen such a big boat, but Noah just did what the creator told him to do. He worked away on the boat, and kept warning people too, but they paid no attention to what he said. Noah, in contrast, paid attention to everything the creator told him. As it says in verse 22: 'Noah did everything just as the creator commanded him.'

"Noah really believed the creator," Laud continued, "so he paid attention to what the creator said. That's why the creator was pleased with him. As a result he didn't die in the flood."

"Noah sure must have had a lot of merit to escape the flood," remarked Sii's father.

"No, that's not right," Laud replied. "Noah was not saved by trusting in his own merit. Noah was a sinner by birth and had a sinful heart the same as everybody else.

ລາວຫວິດລາວພົ້ນກໍຍ້ອນພະຄຸນຂອງ ເພິ່ນຜູ້ແຕ່ງ ບໍ່ແມ່ນລາວເຮັດເອົາເອງ ໂນອານີ້ກໍອາໄສເພິ່ນຜູ້ແຕ່ງ ເຊື່ອຟັງ ເພິ່ນ ເຮັດນໍາເພິ່ນ ຍ້ອນພະຄຸນຂອງ ເພິ່ນລາວຈຶ່ງຄ່ອຍຫວິດ.

He escaped death because of the creator's goodness, not as a result of his own efforts. Noah was trusting in the creator, obeying and following him. It was by the creator's goodness that Noah was saved.

"ໂນອາໃຊ້ເວລາເຮັດເຮືອຢູ່ຮ້ອຍຊາວປີ ຈຶ່ງຄ່ອຍແລ້ວ ກໍມີຫລາຍຄົນເຫັນໂນອາ ເຮັດເຮືອ ຜູ້ທີ່ບໍ່ເຫັນ ລາວກໍອອກໄປ ບອກ ແຕ່ວ່າບໍ່ມີໃຜເຊື່ອໃຜຟັງຄໍາເພິ່ນ ຜູ້ແຕ່ງ ໂນອາໄປບອກວ່ານໍ້າຊິຖ້ວມ ໂລກ."

"Noah took 120 years to finish the boat. A lot of people watched him working on it. And he went and spoke to those who didn't see him. But no one believed the creator's word that there was going to be a world flood.



ແລ້ວລອດກໍບອກວ່າ, "ເບິ່ງໃນພະຄຳພີຕໍ່ເດີ."
ແລ້ວລອດກໍອ່ານບົດທີ 7 ຂໍ້ 1 ຮອດ 9 ວ່າ

1 ຢູ່ມາເຮືອໃຫຍ່ກໍເຮັດແລ້ວ
ຮຽບຮ້ອຍ ເພິ່ນຜູ້ແຕ່ງກໍເລີຍບອກ
ໂນອາວ່າ, "ໃຫ້ເຈົ້າພາຄອບຄົວເຂົ້າ
ໃນເຮືອສາບາດນີ້ ເພາະໃນສາຍຕາ
ຂອງເຮົາເບິ່ງແລ້ວ ກໍມີແຕ່ເຈົ້າຜູ້ດຽວ
ໃນພວກຄົນສະໄໝນີ້ທີ່ຖືກຕ້ອງຕາມ
ທາງທຳຂອງເຮົາ. 2 ແລ້ວໃຫ້ເອົາພວກ
ສັດແນວທີ່ສົມຄວນເປັນເຄື່ອງບູຊາ
ແນວລະເຈັດຄູ່ທັງໂຕຜູ້ໂຕແມ່ເຂົ້າໄປຢູ່
ນຳ ນອກຈາກນີ້ກໍໃຫ້ເອົາພວກສັດ
ແນວອື່ນແນວລະຄູ່ເຂົ້າໄປຢູ່ໃນເຮືອນຳ
ຄືກັນ. 3 ພວກນົກກໍຄືກັນ ໃຫ້ເອົາ
ແນວລະເຈັດຄູ່ ເຂົ້າໄປຢູ່ນຳເດີ ເຮັດ
ແນວນີ້ເພື່ອຈະໃຫ້ມັນສືບໜໍ່ແທນແນວ
ຕໍ່ໄປ. 4 ຍັງອີກເຈັດມື້ເຮົາກໍຈະເຮັດ
ໃຫ້ຝົນຕົກຢ່າງແຮງຕະຫລອດຮອດ 40
ມື້ 40 ຄືນ ຈົນນ້ຳຖ້ວມໝົດ ຄືເຮົາ
ຕ້ອງລຶບລ້າງທຸກສິ່ງທຸກຢ່າງທີ່ມີຊີວິດທີ່
ເຮົາໄດ້ສ້າງຂຶ້ນມາແລ້ວນັ້ນ ໃຫ້ມັນ
ຕາຍໄປຈາກແຜ່ນດິນໂລກໃຫ້ໝົດ
ກ້ຽງ."

"Let's read on," Laud said. Then he read chapter 7:1-9:

1 The creator then
said to Noah, "Go
into the ark, you and
your whole family,
because I have
found you righteous
in this generation. 2
Take with you seven
of every kind of
clean animal, a male
and its mate, and
two of every kind of
unclean animal, a
male and its mate, 3
and also seven of
every kind of bird,
male and female, to
keep their various
kinds alive
throughout the
earth. 4 Seven days
from now I will send
rain on the earth for
forty days and forty
nights, and I will
wipe from the face
of the earth every
living creature I
have made."

5 ເພີ່ນຜູ້ແຕ່ງບອກແລ້ວໂນອາ
ກໍໄດ້ເຮັດຕາມຄຳສັ່ງຂອງເພີ່ນ
ໝົດທຸກຢ່າງ.

6 ປີນ້ຳຖ້ວມໂລກນັ້ນໂນອາ
ອາຍຸໄດ້ 600 ປີພໍດີ. 7 ໂນອາ
ກັບເມຍກັບລູກກັບລູກໄພ້ກໍພາ
ກັນເຂົ້າໄປໃນເຮືອໃຫຍ່ ເພື່ອຈະ
ຫລົບຈາກນ້ຳຖ້ວມໂລກ. 8-9
ແລ້ວພວກສັດແນວທີ່ສົມຄວນ
ເປັນເຄື່ອງບູຊາ ກັບພວກສັດ
ອື່ນໆ ແນວລະຄູ່ ໂຕຜູ້ກັບໂຕແມ່
ມັນກໍໄດ້ເຂົ້າໄປຢູ່ໃນເຮືອກັບ
ໂນອາ ຕາມທີ່ເພີ່ນຜູ້ແຕ່ງໄດ້
ບອກໂນອາໄວ້ນັ້ນ.

ແລ້ວລອດກໍເວົ້າວ່າ, "ພວກເຈົ້າຮູ້ຈັກບໍ່ວ່າແຕ່ກີ້ແຕ່ກ່ອນບໍ່ເຄີຍມີຝົນຕົກເລີຍ ມີແຕ່ໝອກທໍ່ນັ້ນທີ່ເຮັດໃຫ້ຂີ້ດິນຊຸ່ມ ໂນອາໄດ້ບອກຄົນໃນຕອນນັ້ນວ່າ ນ້ຳຊິຖ້ວມໂລກເດີ ຄົນກໍແຮ່ງບໍ່ເຊື່ອລາວ ເຂົາເຈົ້າວ່າຝົນຢູ່ໃສ ນ້ຳຢູ່ໃສຊິມາຖ້ວມ

5 And Noah did all that
the creator commanded
him.

6 Noah was six hundred
years old when the
floodwaters came on the
earth. 7 And Noah and his
sons and his wife and his
sons' wives entered the
ark to escape the waters
of the flood. 8 Pairs of
clean and unclean
animals, of birds and of
all creatures that move
along the ground, 9 male
and female, came to Noah
and entered the ark, as
the creator had
commanded Noah.

Then Laud said, "Did you know that back then it never rained? In those days there was only dew to water the ground. So when Noah told people that the whole world was going to flood, nobody believed him. 'What rain?' they mocked. 'Where's all the water going to come from?'

“ພໍເຂົາເຈົ້າເຫັນໂນອາເຮັດເຮືອໃຫຍ່ໆ ນັ້ນ ເຂົາເຈົ້າກໍແຮ່ງພາກັນຫົວເຍາະເຍີ້ຍ ລາວ ແລ້ວໃນຕອນນັ້ນຫລາຍຄົນກໍພາ ກັນເວົ້າກັນວ່າ ໂນອາເປັນແນວນັ້ນແນວ ນີ້ ໂນອາກໍບໍ່ເຊົາ ລາວກໍບອກວ່າ ເພິ່ນຜູ້ແຕ່ງໃຫ້ເວລາຄົນອີກຮ້ອຍຊາວປີທີ່ ນັ້ນ ໃຫ້ເຊື່ອຟັງຄຳເພິ່ນ ແລ້ວເຂົ້າມາ ໃນເຮືອຈຶ່ງຈະຫວິດຈາກນ້ຳຖ້ວມ ໂນອາເຄີຍບອກວ່າມີທາງດຽວເທົ່ານັ້ນເດີ ລາວບອກວ່າມີທາງດຽວເທົ່ານັ້ນຈຶ່ງຈະ ຫວິດໄດ້.”

ແລ້ວລຸງທາກໍເວົ້າວ່າ, “ເສຍດາຍທີ່ຄົນ ບໍ່ເຊື່ອບໍ່ຟັງເພິ່ນຜູ້ແຕ່ງ ເປັນຫຍັງຄົນຈຶ່ງ ພິລຶກພິລ້ຳແທ້ ໂພດແທ້ ເປັນຕາເຊື່ອກໍ ບໍ່ເຊື່ອ ເປັນຕາຟັງກໍບໍ່ຟັງຄຳຂອງເພິ່ນ ນັ້ນ.”

ແລ້ວລອດກໍເວົ້າວ່າ, “ນີ້ເຮົາກໍເຫັນວ່າ ເພິ່ນຜູ້ແຕ່ງເວົ້າແນວໃດເພິ່ນກໍເຮັດນຳ ແນວນັ້ນ ເພິ່ນບໍ່ເຄີຍຕົວະໃຜ ເພິ່ນເວົ້າ ວ່ານ້ຳຈະຖ້ວມໂລກມັນກໍຖ້ວມແທ້

“And when he started building a boat, they really began to make fun of him. They said all sorts of things about him, but he kept right on working. And he kept warning them, saying, ‘The creator is giving people only one hundred and twenty years more. You'd better listen to him and come into the boat so you don't drown in the flood.’ Noah kept telling them that this was the only way to be saved.”

“What a pity that all those people didn't listen to the creator,” Uncle Thaa remarked. “Why are people so dense? The creator's message was so believable, but still they wouldn't listen.”

“This demonstrates,” Laud went on, “that the creator does exactly what he says he will. He never lies to anyone. He said the world was going to flood, and it did.

"ພໍໂນອາເຮັດເຮືອນັ້ນແລ້ວໆ ເພິ່ນກໍໃຫ້ໂນອາທັງລູກທັງເມຍ ກັບລູກໄພ້ເຂົ້າໄປໃນເຮືອ ແລ້ວເພິ່ນກໍໃຫ້ສັດທຸກແນວແນວລະຄູ່ເຂົ້າໄປໃນເຮືອນຳໂນອາ ແຕ່ສຳຫລັບສັດແນວສິມຄວນຖະຫວາຍເພິ່ນກໍໃຫ້ເຂົ້າໄປນຳຢ່າງລະເຈັດຄູ່."

ແລ້ວລອດກໍເວົ້າວ່າ, "ຄົນເຫັນແນວນັ້ນກໍຄືຊິຕົກໃຈເນາະ ຍ້ອນວ່າບໍ່ເຄີຍເຫັນສັດໄປເປັນຄູ່ເປັນຄູ່ແບບນັ້ນ ແຕ່ວ່າບໍ່ມີຜູ້ໃດເຂົ້າເຮືອນຳໂນອາເລີຍໃນຕອນນັ້ນ ທັງໆ ທີເປັນໂອກາດສຸດທ້າຍ."

ແລ້ວລອດກໍຫລຽວໄປຫາລຸງທາບອກລາວວ່າ, "ລຸງ ໃຫ້ເຈົ້າອ່ານຂໍ້ 11 ຮອດ 22 ເບິ່ງດູ."

ແລ້ວລຸງທາກໍອ່ານວ່າ,

## *ນ້ຳຖ້ວມໂລກ*

*11-17* ເຫດການນ້ຳຖ້ວມໂລກກໍ
ໄດ້ເກີດຂຶ້ນວັນທີ 17 ເດືອນ 2
ກົງກັບປີທີ່ໂນອາມີອາຍຸຮອດ
600 ປີພໍດີ ໃນມື້ດຽວກັນນັ້ນ
ໂນອາກັບເມຍພ້ອມກັບລູກຊາຍ

"When Noah had finished the boat, the creator told Noah and his wife, his sons and daughters-in-law to go into the boat and he caused a pair of each kind of animal to go in as well. But he had seven pairs of each kind of animal used for sacrifice go in.

"I bet the people looking on were shocked to see the animals going into the boat in pairs like that, something they had never seen happen before. But none of them decided to join Noah, even though it was their very last chance."

Then Laud turned to Uncle Thaa and asked him to read verses 11- 22:

## *The Flood*

*11* In the six hundredth
year of Noah's life, on the
seventeenth day of the
second month; on that
day all the springs of the
great deep burst forth,

ຂອງລາວສາມຄົນ ຄືເຊມ
ຢາເຟດ ຮາມ ກັບລູກໄພ້ທັງ
ສາມຄົນກໍໄດ້ຢູ່ໃນເຮືອໃຫຍ່ແລ້ວ
ພ້ອມທັງສັດໝົດທຸກແນວທີ່ຍ່າງ
ໄປຍ່າງມາ ໄຕ່ໄປເຕັ້ນມາ ບິນ
ໄປບິນມາແນວລະຄູ່ຈາກທົ່ວ
ແຜ່ນດິນໂລກ ສັດທຸກແນວ ແນວ
ລະຄູ່ໆ ທີ່ມີຊີວິດຢູ່ຍ້ອນລົມຫັນ
ໃຈມັນກໍໄດ້ເຂົ້າໄປຢູ່ໃນເຮືອນໍາ
ໂນອາ ທັງໂຕຜູ້ໂຕແມ່ຕາມທີ່
ເພິ່ນຜູ້ແຕ່ງໄດ້ບອກໂນອາໄວ້. ພໍ
ເຂົ້າໄປໝົດແລ້ວ ເພິ່ນຜູ້ແຕ່ງກໍ
ອັດປະຕູເຮືອເຂົ້າ ແລ້ວນໍ້າຈາກ
ຮູນໍ້າບາດານຢູ່ໃຕ້ແຜ່ນດິນເລິກໆ
ກໍໄດ້ພຸ່ງອອກມາ ກັບນໍ້າຝົນກໍ
ໄດ້ຫົ່ງລົງມາຈາກເທິງຟ້າຢ່າງມືນ
ຫູມືນຕາບໍ່ຂຶ້ນ ຝົນກໍຫົ່ງລົງມາ
ຕະຫລອດຮອດ 40 ມື້ 40 ຄືນ
ນໍ້າກໍສູງຂຶ້ນໆ ເຮືອໃຫຍ່ກໍລອຍ
ຂຶ້ນຫວິດດິນຢູ່ເທິງນໍ້ານັ້ນ.

and the floodgates of the
heavens were opened. *12*
And rain fell on the
earth forty days and
forty nights. *13* On that
very day Noah and his
sons, Shem, Ham and
Japheth, together with
his wife and the wives of
his three sons, entered
the ark. *14* They had with
them every wild animal
according to its kind, all
livestock according to
their kinds, every
creature that moves
along the ground
according to its kind and
every bird according to
its kind, everything with
wings. *15* Pairs of all
creatures that have the
breath of life in them
came to Noah and
entered the ark. *16* The
animals going in were
male and female of every
living thing, as the
creator had commanded
Noah. Then the creator
shut him in.

18-20 ນ້ຳກໍແຮ່ງສູງ
ຂຶ້ນໆ ຈົນສູງຖ້ວມຫລັງ
ພວກພູສູງໆ ຂຶ້ນໄປ 15
ສອກ ຈົນບໍ່ມີບ່ອນໃດ
ໃນໂລກທົ່ວໃຕ້ຟ້າທີ່ນ້ຳ
ບໍ່ໄດ້ຖ້ວມ 21-22 ພວກ
ສັດກໍຕາຍ ພວກຄົນກໍ
ຕາຍ ທຸາສິ່ງທຸກຢ່າງທີ່ມີ
ຊີວິດຍ້ອນລົມຫັນໃຈທີ່
ໄປໆ ມາໆ ເທິງແຜ່ນດິນ
ໂລກກໍຕາຍໄປໝົດກ້ຽງ.

17 For forty days the flood kept coming
on the earth, and as the waters increased
they lifted the ark high above the earth. 18
The waters rose and increased greatly on
the earth, and the ark floated on the
surface of the water. 19 They rose greatly
on the earth, and all the high mountains
under the entire heavens were covered. 20
The waters rose and covered the
mountains to a depth of more than twenty
feet. 21 Every living thing that moved on
the earth perished; birds, livestock, wild
animals, all the creatures that swarm over
the earth, and all mankind. 22 Everything
on dry land that had the breath of life in
its nostrils died.



ພໍອ່ານແລ້ວລຸງທາກໍເວົ້າວ່າ, "ເພິ່ນຜູ້ແຕ່ງປິດປະຕູແລ້ວ ໝົດເວລາແລ້ວ ປະຕູເຂົ້າກໍມີປະຕູດຽວຊໍ້າ."

When Uncle Thaa stopped reading he said, "So the creator finally shut the door. The time was up. And that's the only door there was."

ແລ້ວລອດກໍເວົ້າວ່າ, "ແມ່ນແນວນັ້ນແທ້ ຍ້ອນຄົນບໍ່ເຊື່ອຟັງເພິ່ນຜູ້ແຕ່ງ ພວກເຂົາກໍຈິ່ມນໍ້າຕາຍໝົດ ໃນຕອນນັ້ນມີແປດຄົນທີ່ນັ້ນທີ່ບໍ່ຕາຍ ຄືໂນອາກັບລູກກັບເມຍກັບລູກໄພ້ຂອງລາວ ແຕ່ແປດຄົນທີ່ຫວິດຈາກນໍ້າຖ້ວມນີ້ບໍ່ແມ່ນວ່າເຂົາເປັນຄົນມີບຸນຍ້ອນເຂົາເຮັດ. ເຂົາຫາກເຊື່ອເພິ່ງເພິ່ນຜູ້ແຕ່ງ ຍ້ອນຄວາມເຊື່ອເຂົາຈຶ່ງໄດ້ເຂົ້າໃນເຮືອທີ່ເພິ່ນຜູ້ແຕ່ງໄດ້ບອກໃຫ້ເຮັດ ເຂົາຕ້ອງເພິ່ງພະຄຸນຂອງເພິ່ນເຂົາຈຶ່ງຫວິດຈາກຄວາມຕາຍ."

"Exactly," said Laud. "So they all drowned because none of them had listened to the creator. All except for eight people: Noah, his wife, his sons and their wives. But these eight who escaped during the flood did not escape because they had earned a lot of merit. Rather it was because they trusted in the creator. Because they trusted, they went into the boat which the creator had told them to build. Their lives were saved because they trusted in the creator's goodness."

ແລ້ວພໍ່ສີກໍໄດ້ເວົ້າກັບພວກຜູ້ເຖົ້າຜູ້ແກ່ຢູ່ນັ້ນວ່າ, "ເຮົາຄິດແນວນີ້ ລອດນີ້ກໍປຽບຄືດັ່ງໂນອາທີ່ເວົ້າມາຫວ່າງນຶ່ງນັ້ນລະ ຄົນທຸກມື້ນີ້ກໍຄືສະໄໝຂອງໂນອາຄືກັນ

Then Sii's father addressed the other village leaders present. "You know what I think? I think Laud here is like this man Noah that he's been telling us about. People nowadays are the same as people were in Noah's time:

ໃຜກໍບໍ່ຍອມຟັງຄຳຂອງເພິ່ນຜແຕ່ງທີ່ໄດ້ບອກເອົາໄວ ບໍ່ເຊື່ອເພິ່ງເພິ່ນ ຕັ້ງຢາກເຮັດນຳໃຈຕົນເອງ ເຮັດນຳຜີແນວມັນບໍ່ຈິບບໍ່ດີ ຄົນທຸກມື້ນີ້ກໍຄືກັນໝົດ ບໍ່ມີໃຜເຊື່ອບໍ່ມີໃຜຟັງເພິ່ນຜູ້ແຕ່ງເລີຍ ລອດນີ້ໄດ້ໄປບອກເຖິງເລື່ອງເພິ່ນຜູ້ແຕ່ງ ບອກທາງທີ່ໄປຫາເພິ່ນຜູ້ແຕ່ງໃຫ້ເຮົາຮູ້ ຄືກັນກັບໂນອາໄປບອກເລື່ອງເພິ່ນຜູ້ແຕ່ງ ກັບເລື່ອງນ້ຳຊິຖ້ວມໂລກຄືຄາວແຕ່ກີ້ນັ້ນລະ. ແຕ່ວ່າຫລາຍຄົນໃນຕອນນັ້ນກໍພາກັນຫົວເຍາະເຍີ້ຍລາວແຊວໆ ໃຜກໍບໍ່ຢາກຟັງລາວ ບໍ່ຢາກເຊື່ອລາວ ແລ້ວໃນທີ່ສຸດກໍຕາຍ ຍ້ອນບໍ່ເຊື່ອບໍ່ຟັງລາວ ພໍມາເຖິງເຮົາໃນຊ່ວງນີ້ ກໍມີຜູ້ໄປບອກຄືກັນກັບຄາວໂນອາແຕ່ກີ້ຄືກັນ.

"ຄາວແຕ່ກີ້ເພິ່ນຜູ້ແຕ່ງບອກໃຫ້ໂນອາເຮັດເຮືອໃຫ້ມີປະຕູດຽວທໍ່ນັ້ນ ຍ້ອນຢາກໃຫ້ຄົນຄຶດຮູ້ເມື່ອວ່າ ມີທາງດຽວທໍ່ນັ້ນທີ່ໃຫ້ຄົນຫວິດຈາກນ້ຳຖ້ວມ ຖ້າບໍ່ເຂົ້າປະຕູນີ້ກໍຕ້ອງຕາຍ ທາງຂອງເພິ່ນຜູ້ແຕ່ງທີ່ລອດເວົ້າໃຫ້ຟັງຢູ່ດຽວນີ້ກໍມີທາງດຽວຄືກັນ

Nobody wants to listen to what the creator has said. Nobody trusts in him. They just do whatever they please, as well as getting involved with evil spirits. People are all like this nowadays. No one listens to or obeys the creator. Laud here is going around telling people about the creator, just like Noah long ago told people about the creator and about the world flood that was coming. The people back then all scoffed at Noah; no one believed him. As a result they died. And now here's someone like Noah long ago who is going around warning people.

"Back then the creator told Noah to make the boat with only one door. This was so people would realize that there was only one way to be saved from the flood. If you didn't go in through that door you'd die. And the way of the creator that Laud is telling us about nowadays is the same: There's only one way.

ຖ້າບໍ່ຟັງບໍ່ໄປນຳເພິ່ນຜູ້ແຕ່ງທີ່ບອກໄວ້ນັ້ນ ເຮົາຊິບໍ່ເຫັນບ່ອນເພິ່ນຜູ້ແຕ່ງເຮັດໄວ້ໃຫ້ເຮົານັ້ນເລີຍ."

ແລ້ວລອດກໍເວົ້າວ່າ, "ແມ່ນຄວາມເຈົ້າເວົ້າແທ້ ທຸກມື້ນີ້ພະຍາມານໂຕທີ່ໄດ້ຫຸ້ມກັບງູ ທີ່ລໍ້ລວງແມ່ຍິງແຕ່ທຳອິດພຸ້ນ ດຽວນີ້ມັນກໍຍັງຫລອກລວງຄົນຢູ່, ໄດ້ລໍ້ໄດ້ລວງຄົນໃຫ້ໄປຫລາຍທາງ ເຮົາບໍ່ຢູ່ດີມີແຮງມັນກໍຫາວິທີເຮັດໃສ່ເຮົາ ສິງຢູ່ກັບຄົນ. ກໍເທວະດາບໍ່ຈົບບໍ່ດີນີ້ລະເປັນຜີກະດາຍ ມັນມັກເຮັດແນວນັ້ນແນວນີ້ໃຫ້ຄົນຢ້ານ ແລ້ວມັນກໍເຮັດໃຫ້ຜູ້ມັນສິງຢູ່ນຳນັ້ນເວົ້າວ່າມັນຢາກກິນໄກ່ກິນໝູ ແລ້ວມັນກໍຍັງເວົ້າອີກວ່າ ກໍກູນີ້ລະເປັນພໍ່ໃຫຍ່ແມ່ໃຫຍ່ຂອງພວກສູ ຫລືວ່າເປັນຜູ້ນັ້ນຜູ້ນີ້ ເຮັດຜ້າອຸຍຸອະຍະເຕເຊະຕະຊະ ຄືຜູ້ທີ່ຕາຍໄປແລ້ວນັ້ນ ແລ້ວລູກເຕົ້າເຫັນກໍວ່າແມ່ນພໍ່ແມ່ນແມ່ຕົນເອງຢູ່ເລື້ອຍ."

If we don't listen to the creator and go the way he tells us, we won't make it to the place the creator has prepared for us."

"That's exactly right," Laud replied. "Nowadays Satan, the one who came in a snake to deceive the first woman, is still at work to deceive people and to confuse them about the right way. When we're sick, Satan looks for ways to harm us; sometimes he has some of those bad angels, the demons, take possession of people. They do all sorts of things to scare people, and when they take possession of someone they say they want to eat a chicken or a pig. And they say things like, 'I'm your grandfather,' or 'I'm your grandmother,' or some other person. Or they appear as some scary figure covered in a sheet to make people believe that they're the ghost of a relative who died.

ແລ້ວລອດກໍເວົ້າຕໍ່ວ່າ, "ເຈົ້າຢ່າລືມເດີວ່າມັນກໍມີລິດມີອຳນາດຄືກັນ ແຕ່ມັນຫາກສູ້ເພິ່ນຜູ້ແຕ່ງບໍ່ໄດ້ ດັ່ງນັ້ນລະຖ້າໃຜບໍ່ເຊື່ອເພິ່ງເພິ່ນຜູ້ແຕ່ງ ມັນກໍເຮັດໃສ່ຫລາຍອັນຫລາຍແນວ ຖ້າມັນຢາກກິນໄກ່ເຮົາກໍເອົາໄປໃຫ້ ແລ້ວຍາມເຮົາເຢົາເຮົາສ່ຽງເບິ່ງ ຖ້າໝໍເຢົາສັ່ງແນວໃດ ເຮົາກໍເຮັດນຳແນວນັ້ນ ຍ້ອນວ່າເຮົາຢ້ານມັນ ຊິທຸກຊິຍາກປານໃດກໍຢ່າ ຖ້າໝໍເຢົາເວົ້າວ່າມີແນວເຮັດ ຖ້າມັນຢາກກິນໝູ ເຮົາກໍໄປຫາມາໃຫ້ຈົນໄດ້ ຜີສາງນີ້ມັນບໍ່ເຄີຍວ່າຊິຊ່ອຍຄົນ ມີແຕ່ຫາລາຍຊິກິນນຳຄົນທໍ່ນັ້ນ."

ແລ້ວລອດກໍຫລຽວເບິ່ງພໍ່ສີ ແລ້ວເວົ້າວ່າ, "ຫວ່າງກີ້ເຈົ້າໄດ້ເວົ້າວ່າເພິ່ນຜູ້ແຕ່ງເປັນຜູ້ປິດປະຕູເຮືອ ແລ້ວຜູ້ຟັງຜູ້ເຊື່ອເພິ່ນກໍໄດ້ຫວິດຈາກນ້ຳຖ້ວມ ຜູ້ບໍ່ເຊື່ອກໍຕາຍໝົດແມ່ນບໍ່ລະ?

"Remember," continued Laud, "that evil spirits have power, but they don't have near as much power as the creator. So whoever doesn't trust in the creator is open to all kinds of attacks from evil spirits. If the spirits want a chicken, we sacrifice one to them. And if we consult a medium, we follow whatever advice the medium gives, no matter what it costs us, because we're afraid of the spirits. If the medium says there's something we can do that will appease the spirits, like sacrificing a pig, we do it no matter what it takes. The demons aren't interested in helping people; all they ever do is look for ways to take advantage of people."

Laud turned to Sii's father and said, "A moment ago you were saying that the creator was the one who closed the door of the boat, and that those who listened to him and believed him were saved from the flood, but those who didn't believe all died, right? Well, it's still the same.

ດຽວນີ້ກໍຄືກັນ ຜູ້ຟັງຜູ້ເຊື່ອເພິ່ງເພິ່ນຜູ້ແຕ່ງກໍໄດ້ຫລີດຈາກໝໍ້ນາລົກ ຄົນທີ່ຮູ້ຈັກແລ້ວບໍ່ເຊື່ອກໍບໍ່ຫລີດ ແຕກີ້ແຕ່ກ່ອນກໍເປັນແນວນັ້ນ ດຽວນີ້ກໍເປັນແນວນັ້ນຄືກັນ ຍາມໃດກໍຢ່າເພິ່ນຜູ້ແຕ່ງກໍບອກທາງໃຫ້ພວກຄົນສະເໝີ ຜູ້ໃດຟັງເພິ່ນເຊື່ອເພິ່ນຜູ້ນັ້ນກໍຫລີດຈາກໝໍ້ນາລົກ ເພິ່ນວ່າແນວນັ້ນ ໃນພະຄໍາພີກໍບອກເຮົາໃຫ້ຮູ້ຢ່າງຈະແຈ້ງ ຖ້າພາກັນເບິ່ງພາກັນອ່ານທຸກຄົນກໍຈະຮູ້ຈັກທາງໄປເມືອງຂອງເພິ່ນ ເມືອງນັ້ນກໍຄືເມືອງສະຫວັນ."

Those who listen to the creator and trust in him will escape and not go to hell, but those who know but don't believe will go to hell. It's just like it was back at the time of the flood. The creator has always told people the way to be saved. Those who listen to him and believe him won't have to go to hell. That's what he says. The Bible tells us the way plainly. If we keep on reading it together, we'll all come to know the way to his country heaven.



ແລ້ວລອດກໍເວົ້າວ່າ, "ເອີ້ ບາດນີ້ຈະເບິ່ງເລື່ອງຂອງໂນອາຕໍ່ ເມື່ອເຂົາເຂົ້າໄປຢູ່ໃນເຮືອແລ້ວ ເພິ່ນຜູ້ແຕ່ງລືມເຂົາຫລືບໍ່? ອ່ານຂໍ້ 21 ຮອດ 24 ດູ."

ແລ້ວລຸງທາກໍອ່ານວ່າ,

*21-22* ພວກສັດກໍຕາຍ ພວກຄົນ
ກໍຕາຍ ທຸກສິ່ງທຸກຢ່າງທີ່ມີ
ຊີວິດຍ້ອນລົມຫັນໃຈທີ່ໄປໆ
ມາໆ ເທິງແຜ່ນດິນໂລກກໍຕາຍ
ໄປໝົດກ້ຽງ. *23* ເປັນດັ່ງນັ້ນ
ລະເພິ່ນຜູ້ແຕ່ງໄດ້ລຶບລ້າງທຸກ
ອັນທຸກແນວໃນແຜ່ນດິນໂລກໃຫ້
ດັບສູນໄປໝົດ ບໍ່ວ່າພວກຄົນ
ຫລືວ່າພວກສັດກໍຕາມ ບໍ່ມີ
ເຫລືອເລີຍ ມີແຕ່ໂນອາກັບ
ຄອບຄົວຂອງລາວ ແລະພວກ
ສັດທີ່ເຂົ້າອາໄສຢູ່ໃນເຮືອໃຫຍ່
ທີ່ນັ້ນ. *24* ນ້ຳກໍໄດ້ຖ້ວມໂລກ
ເປັນເວລາ 150 ມື້ ແລ້ວກໍ
ຄ່ອຍແຫ້ງລົງ.

"Now let's read more about Noah," said Laud. "After they went into the boat, did the creator just forget about them? Read verses 21-24."

Uncle Thaa read again:

*21* Every living thing that
moved on the earth
perished; birds, livestock,
wild animals, all the
creatures that swarm over
the earth, and all mankind.
*22* Everything on dry land
that had the breath of life
in its nostrils died. *23*
Every living thing on the
face of the earth was
wiped out; men and
animals and the creatures
that move along the
ground and the birds of the
air were wiped from the
earth. Only Noah was left,
and those with him in the
ark. *24* The waters flooded
the earth for a hundred and
fifty days.

ແລ້ວລຸງທາກໍເວົ້າວ່າ, "ເບິ່ງດູ ເພິ່ນຜູ້ແຕ່ງເວົ້າແລ້ວເພິ່ນກໍເຮັດແທ້ ເພິ່ນວ່າຜູ້ບໍ່ຢູ່ໃນເຮືອຈະຕາຍ ມັນກໍຕາຍໝົດແທ້ພວກນັ້ນ ນ້ຳຖ້ວມໂລກຢູ່ນັ້ນ 150 ມື້ ເພິ່ນຜູ້ແຕ່ງຄືຊິບໍ່ລືມຊຸມຢູ່ໃນເຮືອນັ້ນເນາະ."

ແລ້ວລອດກໍເວົ້າວ່າ, "ຂ້ອຍຊິອ່ານຕໍ່ເດີໃນບົດທີ 8 ຂໍ້ 1 ເພິ່ນບອກວ່າດັ່ງນີ້." ແລ້ວມັນກໍອ່ານວ່າ,

1 ເພິ່ນຜູ້ແຕ່ງບໍ່ໄດ້ລືມພວກໂນອາ ກັບພວກສັດທີ່ຢູ່ໃນເຮືອນຳລາວ.

ພໍອ່ານຊ່ຳນັ້ນແລ້ວລຸງທາກໍເວົ້າວ່າ, "ເຫັນບໍ່! ເຮົາເວົ້າແລ້ວວ່າເພິ່ນບໍ່ລືມ ເພິ່ນກໍບໍ່ລືມແທ້."

ແລ້ວລອດກໍເວົ້າວ່າ, "ແມ່ນຄວາມເຈົ້ານັ້ນລະ ເອີ່ ຂ້ອຍຊິອ່ານຕໍ່ອີກ." ແລ້ວລອດກໍອ່ານຂໍ້ 1 ຮອດ 19 ວ່າ,

"See!" exclaimed Uncle Thaa. "The creator did exactly what he said he would. He said that whoever wasn't in the boat would die, and they all did. The world was flooded for one hundred and fifty days. But I bet the creator didn't forget about the people in the boat."

"I'll read on," Laud said. "Here's what it says in chapter eight verse one:"

*1* But the creator remembered Noah and all the wild animals and the livestock that were with him in the ark, and he sent a wind over the earth, and the waters receded.

"See, what did I tell you?" Uncle Thaa interrupted. "He didn't forget them!"

"You're right, he didn't," replied Laud. "Now I'll read some more." Then Laud read verses 1-19:

1 ແຕ່ເພິ່ນຜູ້ແຕ່ງບໍ່ໄດ້ລືມ
ພວກໂນອາກັບພວກສັດທີ່ຢູ່ໃນ
ເຮືອນຳລາວ ເພິ່ນກໍເລີຍໃຫ້
ເກີດລົມພັດ ນ້ຳກໍແຫ້ງລົງ
ເລື້ອຍໆ. 2 ພວກຮູນ້ຳ
ບາດານກໍເຊົາໄຫລ ຝົນກໍເຊົາ
ຕົກນຳ. 3-4 ໃນມື້ທີ 150 ນັ້ນ
ເຮືອໃຫຍ່ກໍໄດ້ຄ້າງຢູ່ເທິງ
ພູເຂົາອາລາລັດ ກົງກັບວັນທີ
17 ເດືອນ 7. 5 ນ້ຳກໍແຫ້ງລົງ
ທຸກມື້ໆ ຈົນຮອດວັນທີ 1
ເດືອນ 10 ຈຶ່ງ ເຫັນຫລັງ
ພູເຂົາໜ່ວຍອື່ນພົ້ນຂຶ້ນຈາກ
ນ້ຳ.

1 But the creator remembered
Noah and all the wild animals and
the livestock that were with him in
the ark, and he sent a wind over the
earth, and the waters receded. 2
Now the springs of the deep and
the floodgates of the heavens had
been closed, and the rain had
stopped falling from the sky. 3 The
water receded steadily from the
earth. At the end of the hundred
and fifty days the water had gone
down, 4 and on the seventeenth day
of the seventh month the ark came
to rest on the mountains of Ararat.
5 The waters continued to recede
until the tenth month, and on the
first day of the tenth month the tops
of the mountains became visible.

6 ຢູ່ມາອີກ 40 ມື້ໂນອາກໍໄດ້
ເປີດຊ່ອງລົມເຮືອທີ່ລາວເຮັດ
ໄວ້ຫັ້ນ. 7 ແລ້ວກໍໄດ້ປ່ອຍກາ
ອອກໄປໂຕນຶ່ງ ເພື່ອຈະໄດ້ຮູ້
ຈັກວ່ານ້ຳແຫ້ງຫລືຍັງ ແຕ່ກາ
ນັ້ນບໍ່ຫລົບມາຫາໂນອາຈັກ
ເທື່ອ ມີແຕ່ບິນຫາງອຍບ່ອນ
ນັ້ນບ່ອນນີ້ຈົນນ້ຳແຫ້ງ.

6 After forty days Noah
opened the window he had
made in the ark 7 and sent
out a raven, and it kept
flying back and forth until
the water had dried up from
the earth.

8 ລາວກໍເລີຍປ່ອຍນົກເຂົາໄປ
ໂຕນຶ່ງລອງເບິ່ງອີກ. 9 ແຕ່ວ່າ
ນົກເຂົານັ້ນບໍ່ມີບ່ອນຊິຈັບ ມັນ
ກໍເລີຍບິນຫລົບມາຫາໂນອາ
ແລ້ວລາວກໍຍື່ນມືຮັບເອົາມັນ
ໄວ້ໃນເຮືອຄືເກົ່າ. 10 ຢູ່ມາ
ອີກເຈັດມື້ໂນອາກໍປ່ອຍນົກເຂົາ
ໂຕນັ້ນອອກໄປເທື່ອທີສອງ.
11 ພໍຮອດຍາມມື້ແລງນົກເຂົາກໍ
ບິນຫລົບມາ ຄາບເອົາໃບ
ໝາກກອກເທດທີ່ປົ່ງໃໝ່ມານຳ
ໂນອາຈຶ່ງຮູ້ວ່ານ້ຳແຫ້ງຫລາຍ
ເຕີບແລ້ວ. 12 ລາວກໍເລີຍຖ້າ
ອີກເຈັດມື້ຈຶ່ງຄ່ອຍປ່ອຍ
ນົກເຂົານັ້ນໄປເທື່ອທີສາມ
ແຕ່ເທື່ອນີ້ມັນບໍ່ໄດ້ຫລົບຄືນມາ
ອີກເລີຍ.

13 ພໍຮອດວັນທີ 1 ເດືອນ 1
ກົງກັບປີທີ່ໂນອາມີອາຍຸໄດ້
601 ປີ ລາວກໍຂຶ້ນໄປເປີດຊ່ອງ
ເທິງຫລັງຄາເຮືອ ຫລຽວເບິ່ງ
ເຫັນວ່ານ້ຳແຫ້ງແລ້ວ.

8 Then he sent out a dove
to see if the water had
receded from the surface of
the ground. 9 But the dove
could find no place to set
its feet because there was
water over all the surface
of the earth; so it returned
to Noah in the ark. He
reached out his hand and
took the dove and brought
it back to himself in the
ark. 10 He waited seven
more days and again sent
out the dove from the ark.
11 When the dove returned
to him in the evening, there
in its beak was a freshly
plucked olive leaf! Then
Noah knew that the water
had receded from the earth.
12 He waited seven more
days and sent the dove out
again, but this time it did
not return to him.

13 By the first day of the
first month of Noah's six
hundred and first year, the
water had dried up from the
earth. Noah then removed
the covering from the ark
and saw that the surface of
the ground was dry.

14 ຢູມາຮອດວັນທີ 27 ເດືອນ
2 ແຜ່ນດິນໂລກກໍແຫ້ງຄັກ
ແລ້ວ.

15-16 ແລ້ວເພິ່ນຜູ້ແຕ່ງກໍ
ບອກໂນອາວ່າ, “ໂນອາເອີຍ
ໃຫ້ເຈົ້າພາເມຍກັບພວກ
ລູກຊາຍລູກໄພ້ອອກມາຈາກ
ເຮືອສາ. 17 ແລ້ວກໍປ່ອຍພວກ
ສັດໝົດທຸກໂຕອອກມານຳ
ເພື່ອມັນຈະອອກແມ່ແຜ່ລູກໃຫ້
ເຕັມແຜ່ນດິນໂລກຄືເກົ່າ.”

18 ໂນອາກັບເມຍພ້ອມ
ລູກຊາຍລູກໄພ້ກໍພາກັນອອກ
ມາຈາກເຮືອ. 19 ພ້ອມທັງສັດ
ທຸກໂຕທີ່ຢູ່ໃນເຮືອນັ້ນກໍໄດ້
ອອກມາໝົດ ຕາມແນວໃຜ
ແນວມັນ.

ແລ້ວລອດກໍເວົ້າວ່າ, “ແມ່ນຄວາມ ລຸງທາເວົ້າແທ້ ເພິ່ນຜູ້ແຕ່ງເວົ້າແນວໃດເພິ່ນກໍເຮັດນຳແນວນັ້ນທຸກເທື່ອ

14 By the twenty-seventh
day of the second month
the earth was completely
dry.

15 Then the creator said
to Noah, 16 “Come out of
the ark, you and your wife
and your sons and their
wives. 17 Bring out every
kind of living creature that
is with you– the birds, the
animals, and all the
creatures that move along
the ground–so they can
multiply on the earth and
be fruitful and increase in
number upon it.”

18 So Noah came out,
together with his sons and
his wife and his sons'
wives. 19 All the animals
and all the creatures that
move along the ground and
all the birds–everything
that moves on the earth–
came out of the ark, one
kind after another.

Then Laud said, “It's like Uncle Thaa said: Whatever the creator says he is going to do, he does every time.

ເພິ່ນວ່າອີກຮ້ອຍຊາວປີນ້ຳຈະຖ້ວມໂລກ ເດີ ພໍຮອດຮ້ອຍຊາວປີມັນກໍຖ້ວມໂລດ ເພິ່ນວ່າຖ້າຜູ້ໃດເຂົ້າຢູ່ໃນເຮືອຊິຫວິດຈາກ ນ້ຳຖ້ວມເດີ ກໍຫວິດແທ້ໆ ໂນອາກໍເຊື່ອ ເພິ່ນລາວຈຶ່ງຫວິດຈຶ່ງພົ້ນ ຜູ້ບໍ່ເຊື່ອບໍ່ຟັງ ນ້ຳກໍຖ້ວມຕາຍໝົດ."

ສາກໍເວົ້າວ່າ, "ພໍໂນອາອອກຈາກເຮືອ ນັ້ນແລ້ວ ລາວຄືຊິດີໃຈຫລາຍເນາະ ຍ້ອນວ່າລາວຫວິດຈາກນ້ຳຖ້ວມ."

ແລ້ວລອດກໍເວົ້າວ່າ, "ເອີ້ ລາວກໍດີໃຈ ຫລາຍນັ້ນລະ."

ລອດກໍຖາມຕໍ່ໄປວ່າ, "ແລ້ວໂນອາເຮັດ ແນວໃດຕໍ່? ໃຫ້ໂຕອ່ານຕໍ່ຂໍ້ 20 ຮອດ 21 ເດີ ສາ."

ແລ້ວສາກໍອ່ານວ່າ,

*20* ແລ້ວໂນອາກໍໄດ້ເຮັດແທ່ນ
ບູຊາ ແລ້ວໄດ້ເອົາສັດຈາກພວກ
ສັດທຸກແນວທີ່ສົມຄວນເປັນເຄື່ອງ
ບູຊາມາເຜົາຖະຫວາຍບູຊາເພິ່ນຜູ້
ແຕ່ງຢູ່ນັ້ນ. *21* ພໍເພິ່ນຜູ້ແຕ່ງໄດ້
ກິ່ນຫອມກໍພໍໃຈນຳ...

He said there would be a world flood in 120 years and when the 120 years were up there was. He said that whoever went into the boat would be saved from the flood and they were. Noah believed the creator so he didn't die. Those who did not believe were all drowned in the flood."

"I bet when Noah got out of the boat he was very glad that he had survived the flood," said Saa.

"I'm sure he was," answered Laud.

"What do you think Noah did next?" Laud asked the group. "Saa, would you read verses 20 and 21?"

Saa began reading:

*20* Then Noah built an
altar to the creator and,
taking some of all the
clean animals and clean
birds, he sacrificed burnt
offerings on it. *21* The
creator smelled the
pleasing aroma..."

ແລ້ວລອດກໍເວົ້າວ່າ, "ເອີ່ ຂ້ອຍກໍຢາກຖາມເບິ່ງອີກຈັກແນວດຽວນີ້ ແຕ່ກີ້ຜູ້ຂ້າສັດຖະຫວາຍເພິ່ນຄົນທຳອິດແມ່ນໃຜ?"

ແລ້ວສາກໍຕອບວ່າ, "ກໍອາເບັນລູກຂອງປູ່ສັງກະສາກັບຍ່າສັງກະສີໄດ້ຂ້າຖະຫວາຍເພິ່ນ ເຂົາເຮັດແນວນັ້ນກໍຍ້ອນເພິ່ນຜູ້ແຕ່ງບອກ."

ແລ້ວລອດກໍເວົ້າວ່າ, "ເອີ່ ແມ່ນລະ ເພິ່ນຜູ້ແຕ່ງບອກໃຫ້ຂ້າສັດຖະຫວາຍເພິ່ນດັ່ງນັ້ນເພື່ອຫຍັງ?"

ແລ້ວສາກໍຕອບວ່າ, "ເພິ່ນໃຫ້ເຮັດດັ່ງນັ້ນຍ້ອນວ່າເພິ່ນຢາກເອົາຄວາມຜິດຄວາມບາບຂອງຄົນໜີ ຄືຜູ້ໃດເຮັດບາບກໍຕ້ອງຕາຍ ເລີຍຕ້ອງເອົາແນວມີຊີວິດມາຂ້າແລກຊີວິດຄົນບາບໄວ້."

ແລ້ວລອດກໍເວົ້າວ່າ, "ເອີ່ ແມ່ນລະ ເລື່ອງນີ້ສຳຄັນຫລາຍ ຄົນຄວນຈະຮູ້ຈັກເລື່ອງນີ້ ຈຶ່ງຈະຮູ້ຈັກທາງກັບຄືນເປັນອັນນຶ່ງອັນດຽວກັນກັບເພິ່ນ ຕັ້ງແຕ່ທຳອິດເພິ່ນຜູ້ແຕ່ງໄດ້ບອກປູ່ສັງກະສາຍ່າສັງກະສີພໍ່ແມ່ເດີມຂອງເຮົາວ່າ ຈະມີຜູ້

"Let me ask a question to see if you remember," said Laud. "Who was the first person to kill an animal as a sacrifice to the creator?"

"Abel, son of Adam and Eve," Saa spoke up. "He did it because that's what the creator had commanded them to do."

"Right," said Laud. "Now, why did the creator tell them to offer him animal sacrifices like this?"

Saa replied again, "He told them to do this because he wanted to take away people's sins and wrong doings. When anyone sins they have to die, so it's necessary that some living thing be killed in exchange for the life of the sinner."

"Right," said Laud. "This is very important for all of us to understand, so we can be reunited with the creator. Back in the beginning the creator told Adam and Eve, our first ancestors, that there would be someone born as a

ນຶ່ງເກີດທາງເຊື້ອສາຍແມ່ຍິງ ແລ້ວຜູ້ນັ້ນຈະຢຽບໃຫ້ຫົວງູແຕກ ກໍໝາຍຄວາມວ່າຜູ້ນັ້ນຈະເປັນຜູ້ໃຫ້ຫວິດຈາກມືຂອງພະຍາມານ ຈະໃຫ້ກັບໄປຄືນດີກັບເພິ່ນຜູ້ແຕ່ງ ເປັນດັ່ງນັ້ນລະເພິ່ນຈຶ່ງບອກເຂົາຂ້າສັດຖະຫວາຍສາກ່ອນ ເພື່ອລໍຖ້າຜູ້ນັ້ນລົງມາເກີດ ດັ່ງນັ້ນລະເພິ່ນຜູ້ແຕ່ງຈຶ່ງໄດ້ໃຫ້ທຸກຄົນຂ້າສັດຖະຫວາຍໄຖ່ບາບຕົນເອງ ນັບຕັ້ງແຕ່ສະໄໝອາເບັນຈົນຮອດສະໄໝໂນອາ ໂນອາອອກຈາກເຮືອແລ້ວ ລາວຈຶ່ງເອົາສັດຂ້າຖະຫວາຍເພິ່ນຜູ້ແຕ່ງ ເພິ່ນກໍພໍໃຈແນວທີ່ລາວເຮັດເມື່ອເພິ່ນພໍໃຈເພິ່ນບອກໂນອາວ່າແນວໃດ? ເບິ່ງບົດທີ 8 ຂໍ້ 21 ຮອດ 22 ເດີຂ້ອຍຊິອ່ານ." ແລ້ວລອດກໍອ່ານວ່າ,

*21* ພໍເພິ່ນຜູ້ແຕ່ງໄດ້ກິ່ນຫອມກໍພໍໃຈນຳ ແລ້ວກໍເວົ້າວ່າ, "ແມ່ນວ່າພວກຄົນມັກໄປຫາແຕ່ແນວຊົ່ວຕັ້ງແຕ່ນ້ອຍຈົນໃຫຍ່ກໍຕາມເຮົາກໍຈະບໍ່ສາບແຊ່ງໂລກແບບນີ້ອີກຕໍ່ໄປຈັກເທື່ອ ແລະຈະບໍ່

descendant of woman who would crush the snake's head with his foot. This means that he would bring deliverance from the devil's power and bring people back to the creator. And so the creator told people to offer animal sacrifices during the time they were waiting for that person to be born. That's why, from Abel's time all the way up to Noah, the creator told people to kill animals as offerings to pay for their sins. So after Noah came out of the boat he offered animal sacrifices to the creator, and this pleased the creator. Now, let's see what the creator said to Noah at that time. I'll read chapter 8 verses 21-22:"

*21* The creator smelled the pleasing aroma and said in his heart: "Never again will I curse the ground because of man, even though every inclination of his heart is evil from childhood. And never again will I destroy



ທຳລາຍແນວມີຊີວິດໃຫ້ໝົດແບບ
ນີ້ອີກ. 22 ໂລກນີ້ຍັງເປັນຢູ່ແນວ
ໃດ ແຕ່ນີ້ຕໍ່ໄປກໍຈະມີຍາມປູກ
ຍາມເກັບກ່ຽວ ຍາມຮ້ອນຍາມ
ໜາວ ຍາມກາງເວັນກາງຄືນ ບໍ່
ປ່ຽນແປງຈັກເທື່ອ."

ອ່ານແລ້ວລາວກໍຊວນໝູ່ອ່ານບົ
ຮອດຂໍ້ 17. ລາວກໍອ່ານວ່າ,

all living creatures, as I
have done. 22 As long as
the earth endures,
seedtime and harvest,
cold and heat, summer
and winter, day and night
will never cease."

Then Laud asked someone else to read chapter 9:7-17:

7-17 ແລ້ວເພິ່ນຜູ້ແຕ່ງກໍເຮັດໃຫ້ມີຮຸ້ງກິນນ້ຳເທິງຟ້າແລ້ວບອກໂນອາກັບພວກລູກຊາຍວ່າ, "ຕໍ່ໄປເຈົ້າບໍ່ຕ້ອງຢ້ານນ້ຳຈະຖ້ວມໂລກອີກດອກ ໃຫ້ພວກເຈົ້າມີລູກມີຫລານຫລາຍໆ ເດີ ເຮົາສັນຍາໄວ້ກັບເຈົ້າຕະຫລອດຈົນຊົ່ວລູກຊົ່ວຫລານ ຈະບໍ່ໃຫ້ຄົນກັບສັດຕາຍຍ້ອນນ້ຳຖ້ວມໂລກອີກຈັກເທື່ອ ແລ້ວເຮົາໃຫ້ມີຮຸ້ງກິນນ້ຳຂອງເຮົາຢູ່ເທິງທ້ອງຟ້າ ໄວ້ເປັນເຄື່ອງໝາຍເຖິງຄຳສັນຍາຂອງເຮົານີ້ ມື້ໃດເຈົ້າເຫັນຮຸ້ງກິນນ້ຳນັ້ນກໍໃຫ້ເຈົ້າຮູ້ໄວ້ວ່າ ເຮົາບໍ່ໄດ້ລືມຄຳສັນຍານີ້ທີ່ເຮົາໄດ້ໃຫ້ໄວ້ກັບເຈົ້າກັບຄົນທົ່ວໂລກ ທີ່ໃຫ້ຊີວິດທຸກສິ່ງທຸກຢ່າງຕາຍຈົບຫາຍຍ້ອນນ້ຳຖ້ວມໂລກອີກຕໍ່ໄປ."

7 "As for you, be fruitful and increase in number; multiply on the earth and increase upon it."

8 Then the creator said to Noah and to his sons with him: 9 "I now establish my covenant with you and with your descendants after you 10 and with every living creature that was with you–the birds, the livestock and all the wild animals, all those that came out of the ark with you–every living creature on earth. 11 I establish my covenant with you: Never again will all life be cut off by the waters of a flood; never again will there be a flood to destroy the earth."

12 And the creator said, "This is the sign of the covenant I am making between me and you and every living creature with you, a covenant for all generations to come: 13 I have set my rainbow in the clouds, and it will be the sign of the covenant between me and the earth. 14 Whenever I bring clouds over the earth and the rainbow appears in the clouds, 15 I will remember my covenant between me and you and all living creatures of every kind. Never again will the waters become a flood to destroy all life. 16 Whenever the rainbow appears in the clouds, I will see it and remember the everlasting covenant between [me] and all living creatures of every kind on the earth."

17 So the creator said to Noah, "This is the sign of the covenant I have established between me and all life on the earth."

ອ່ານແລ້ວລອດກໍເວົ້າວ່າ, "ເພິ່ນສັນຍາໄວ້ແນວນັ້ນ ແລ້ວກໍເປັນຕາມສັນຍານັ້ນຈິນຮອດດຽວນີ້ລະ ນໍ້າກໍບໍ່ຖ້ວມໂລກອີກຈັກເທື່ອ ຍາມດໍາຍາມກ່ຽວ ຍາມຮ້ອນ ຍາມໜາວກໍມີມາຕາມປົກກະຕິ ແລ້ວມັນກໍຊິເປັນຢູ່ດັ່ງນັ້ນຕະຫລອດ ແຕ່ວ່າມື້ນີ້ເອົາໄວ້ເທົ່ານີ້ສາກ່ອນ ມື້ໃໝ່ຈຶ່ງເວົ້າຕໍ່ອີກ."

When Laud finished reading he said, "That's what the creator promised, and that's the way it's been ever since then. There has never been another world flood. Every year there's been planting season and harvest, hot season and cold season just like he promised and there always will be. But I think we've covered enough for today. We can continue another day."

## ເພິ່ນຜູ້ແຕ່ງເຮັດໃຫ້ຄົນແຕກພາສາກັນ

ແລ້ວມີມື້ນຶ່ງ ລອດກໍກັບໄປຫລິ້ນບ້ານສີກັບສາອີກ ຄົນໃນບ້ານນັ້ນກໍຢາກໃຫ້ເວົ້າເລື່ອງຂອງເພິ່ນຜູ້ແຕ່ງໃຫ້ຟັງເລື້ອຍໆ ພໍຄ່ຳລົງເຂົາກໍມາໂຮມກັນແລ້ວລອດກໍເວົ້າວ່າ, "ເຄີຍມີຫລາຍຄົນຖາມຂ້ອຍວ່າ ເປັນຫຍັງຄົນຈຶ່ງເວົ້າພາສາບໍ່ຄືກັນ ເປັນພາສາຂອງໃຜຂອງມັນ ຂະເໝນກໍມີ ລາວກໍມີ ໄທກໍມີ ຝະລັ່ງກໍມີ ແລະມີອີກຫລາຍໆ ພາສາ. ມັນມາຈາກໃສ?"

ແລ້ວລອດກໍເວົ້າໃຫ້ເຂົາເຈົ້າຟັງວ່າ, "ຕອນຄອບຄົວຂອງໂນອາອອກຈາກເຮືອນັ້ນ ເຂົາເວົ້າເປັນພາສາດຽວກັນໝົດ ເຂົາເຈົ້າຢູ່ແຖວນັ້ນກໍເຫິງ ມີລູກມີຫລານຫລາຍ ຜູ້ເຊື່ອນຳເພິ່ນຜູ້ແຕ່ງກໍມີ ຜູ້ບໍ່ເຊື່ອບໍ່ນຳທາງຂອງເພິ່ນກໍມີ ແຕ່ທຸກຄົນກໍເວົ້າເປັນພາສາດຽວກັນໝົດ ຟັງເດີ ຂ້ອຍຊິອ່ານບົດທີ 11 ຂໍ້ 4 ຮອດ 9 ໃຫ້ຟັງ." ແລ້ວລອດກໍອ່ານວ່າ,

## *The Creator Makes People Have Different Languages*

The people in Sii and Saas' village wanted Laud to keep coming back to tell them more about the creator, so one day Laud went to visit again. In the evening a group gathered to listen to Laud. "A lot of people have asked me why people don't all speak the same language," Laud began. "There are all sorts of languages: Khmer, Lao, Thai, French and many more besides. Where did all these languages come from?

"Well, way back when Noah and his family came out of the ark, everyone still spoke the same language. They lived in that area a long time and had lots of descendants. Some of them trusted and obeyed the creator and some didn't, but they all spoke the same language. Now let me read you chapter 11:4-9." Laud began to read:

4 ແລ້ວເຂົາກໍຊວນກັນວ່າ,
"ໃຫ້ພວກເຮົາຕັ້ງຫລັກຖານສ້າງ
ເມືອງຂຶ້ນຢູ່ບ່ອນນີ້ ແລ້ວພາກັນ
ສ້າງທາດໃຫຍ່ໃຫ້ສູງຈຸຟ້າ ເພື່ອ
ສ້າງຊື່ສຽງໃນສັງຄົມເປັນແນວ
ຍຶດໝ່ຽວຈິດໃຈເຮົາໄວ້ ຖ້າບໍ່
ເຮັດດັ່ງນັ້ນຢ້ານເຮົາຈະແຕກແຍກ
ກັນອອກໄປທົ່ວທິບທົ່ວແດນ."

4 Then they said, "Come, let us build ourselves a city, with a tower that reaches to the heavens, so that we may make a name for ourselves and not be scattered over the face of the whole earth."



5 ເພິ່ນຜູ້ແຕ່ງກໍລົງມາເບິ່ງເມືອງ
ກັບຫາດທີ່ພວກເຂົາເຮັດຢູ່ 6
ເພິ່ນກໍເລີຍເວົ້າວ່າ, "ບໍ່າ ຄົນ
ພວກນີ້ ຢູ່ນໍາກັນເວົ້າພາສາດຽວ
ກັນ ກໍມີປັນຍາພາກັນເຮັດໄດ້
ຂະໜາດນີ້ແລ້ວ ດີບໍ່ດີຈັກໜ່ອຍ
ເຂົາຈະມີປັນຍາເຮັດໄດ້ໝົດທຸກ
ຢ່າງຕາມໃຈຄຶດຂອງເຂົາ. 7
ສະນັ້ນເຮົາຈະເຮັດໃຫ້ເຂົາແຕກ
ພາສາບໍ່ໃຫ້ເຂົ້າໃຈກັນເຖາະ."

8 ແລ້ວເພິ່ນຜູ້ແຕ່ງກໍເລີຍເຮັດໃຫ້
ຄົນແຕກແຍກກັນໄປຢູ່ທົ່ວໂລກ
ດັ່ງນັ້ນລະເຂົາຈຶ່ງເຊົາສ້າງເມືອງ
ກັບຫາດຂອງເຂົາ. 9 ເມືອງນີ້ລະ
ເອີ້ນວ່າເມືອງ ບາເບັນ ແປວ່າ
ຫຍຸ້ງກັນໃຫຍ່ ຄືຕັ້ງແຕ່ພຸ້ນລະ
ເພິ່ນຜູ້ແຕ່ງໄດ້ເຮັດໃຫ້ຄົນເຮົາ
ແຕກພາສາກັນ ແຍກຍ້າຍອອກ
ໄປຢູ່ບ່ອນໃຜບ່ອນມັນທົ່ວໂລກ.

5 But the creator came
down to see the city and
the tower that the men
were building. 6 The
creator said, "If as one
people speaking the
same language they
have begun to do this,
then nothing they plan
to do will be impossible
for them. 7 Come, let us
go down and confuse
their language so they
will not understand each
other."

8 So the creator
scattered them from
there over all the earth,
and they stopped
building the city. 9 That
is why it was called
Babel–because there the
creator confused the
language of the whole
world. From there the
creator scattered them
over the face of the
whole earth.

ພໍອ່ານແລ້ວລອດກໍເວົ້າຕໍ່ໄປວ່າ, "ແຕ່ພໍ່ແຕ່ແມ່ເຮົາແຕ່ກີ້ພູ້ນບໍ່ຢາກຟັງຄຳຂອງເພິ່ນຜູ້ແຕ່ງ ກໍຍ້ອນບໍ່ຍອມຟັງຄຳຂອງເພິ່ນ ເພິ່ນຈຶ່ງເຮັດໃຫ້ເຂົາປາກພາສາຕ່າງໆ ພໍເພິ່ນເຮັດດັ່ງນັ້ນແລ້ວ ພວກເຂົາເຮັດຫຍັງນຳກັນກໍບໍ່ໄດ້ ເວົ້າບໍ່ຮູ້ຈັກພາສາກັນ ແລ້ວຕັ້ງແຕ່ນັ້ນມາເຂົາເຈົ້າກໍແຕກກັນໄປຢູ່ທົ່ວໂລກ ເວົ້າເປັນພາສາໃຜພາສາມັນຈົນຮອດທຸກມື້ນີ້ ແລ້ວພວກຄົນກໍແຕກກັນອອກຈາກເມືອງບາເບັນນັ້ນໄປຢູ່ທົ່ວໂລກ. ຜູ້ແຕກມາທາງເຮົາກໍມີ ເພິ່ນຜູ້ແຕ່ງຮູ້ຈັກເຂົາເຈົ້າໝົດ, ເຂົາເຈົ້າຫາກບໍ່ເຊື່ອບໍ່ນັບຖືເພິ່ນເມື່ອຮອດຊົ່ວລູກຊົ່ວຫລານມາເຂົາກໍລືມໝົດເລື່ອງເພິ່ນຜູ້ແຕ່ງ ແລ້ວເຂົາເຈົ້າກໍຫລົງຈົນຮອດທຸກມື້ນີ້. ພວກຄົນທົ່ວໂລກທຸກມື້ນີ້ກໍແມ່ນລູກຫລານຂອງພວກນັ້ນລະ ລວມທັງພວກເຮົານຳ."

When Laud finished reading he said, "Even way back then our ancestors didn't want to listen to the creator. And because they wouldn't listen, he mixed up their language. Then they couldn't work together anymore, because they couldn't understand one another. And ever since then people have scattered and spread out all over the world, each group speaking its own language. When people scattered from the city Babel, some of them must have come this direction. The creator knew them of course, but they didn't trust and obey him or respect him. As time went on their descendants forgot all about the creator and have lost the way ever since then. All people in the world nowadays, including us, are descended from those people."

## *ເພິ່ນຜູ້ແຕ່ງເອີ້ນອັບລາມ*

"ພໍຄົນແຕກໜີໄປເປັນພວກໃຜພວກມັນແລ້ວ ມີພວກນຶ່ງໄປຢູ່ແຖວເມໂຊໂປຕາເມຍ ເຂົາກໍເຮັດເມືອງໃຫຍ່ຢູ່ທີ່ນັ້ນ ແຖວນັ້ນດຽວນີ້ເຮົາກໍເອີ້ນວ່າ ປະເທດອີລັກ ພວກເຂົາເຈົ້າກໍເຮັດເມືອງຂຶ້ນຢູ່ນັ້ນ ເຮືອນຊານບ້ານຊ່ອງເຂົາກໍງາມ ຄົນຢູ່ນັ້ນກໍບໍ່ເຊື່ອຟັງເພິ່ນຜູ້ແຕ່ງ ເຂົາເຈົ້າຮູ້ຈັກເພິ່ນຜູ້ແຕ່ງຢູ່ແຕ່ວ່າບໍ່ຟັງຄວາມ ເຮັດນຳແຕ່ຄວາມຄຶດຕົນເອງ ເອົາອັນນັ້ນເອົາອັນນີ້ເຮັດຮູບສັດຮູບຄົນ ແລ້ວກໍຂາບກໍໄຫວ້ແນວມືຕົນເອງເຮັດຂຶ້ນແທນເພິ່ນຜູ້ແຕ່ງ ພາກັນຂາບເດືອນຂາບດາວ ໃຈມືດໃຈມົວໄປໝົດ ແລ້ວຕອນນັ້ນມີຜູ້ນຶ່ງຢູ່ເມືອງອຸເລແຖວເມໂຊໂປຕາເມັຍ ເປັນຜູ້ເຊື່ອເພິ່ງເພິ່ນຜູ້ແຕ່ງ ຊື່ວ່າອັບລາມ ມື້ນຶ່ງເພິ່ນຜູ້ແຕ່ງໄປເວົ້າກັບອັບລາມ."

ແລ້ວສີກໍຖາມຂຶ້ນວ່າ, "ເພິ່ນເວົ້າຫຍັງກັບອັບລາມແດ່?."

## *The Creator Chooses Abraham*

"When people spread out in many different directions, one group of them settled in Mesopotamia and built a large city there named Ur. That region is now known as Iraq. The houses the people built in that city were lovely, but the people there did not obey the creator. They knew about him but didn't follow him. They did whatever they wanted to instead… making idols shaped like people and animals using various materials and bowing down to worship what their own hands had made instead of worshiping the creator. They worshiped the moon and stars; their hearts were completely darkened. In that city in those days there was a man named Abram who trusted in the creator. One day the creator came to talk to Abram."

"What did he say to Abram?" asked Sii.

ແລ້ວລອດກໍຕອບວ່າ, "ໃຫ້ໂຕເປີດເບິ່ງໃນບົດທີ 12 ເດີ."

ແລ້ວສີກໍເວົ້າວ່າ, "ຟັງເດີ ຂ້ອຍຊິອ່ານ." ແລ້ວມັນກໍອ່ານຂໍ້ 1 ຮອດ 3 ວ່າ,

1 ແລ້ວເພິ່ນຜູ້ແຕ່ງກໍໄດ້ບອກ
ອັບລາມວ່າ, "ໃຫ້ເຈົ້າອອກຈາກ
ບ້ານຈາກເມືອງພໍ່ແມ່ພີ່ນ້ອງຂອງ
ເຈົ້າ ຍ້າຍໄປຢູ່ແຜ່ນດິນໃໝ່
ບ່ອນທີ່ເຮົາຈະບອກໃຫ້ເຈົ້າຮູ້. 2
ເຮົາຈະຕັ້ງເຈົ້າເປັນພໍ່ຕະກູນຂອງ
ຊາດສຳຄັນຊາດນຶ່ງ ແລ້ວເຮົາ
ກໍຈະອວຍພອນເຈົ້າຫລາຍ ເຈົ້າ
ຈະມີຊື່ສຽງດັງ ແລ້ວຄົນອື່ນກໍຈະ
ໄດ້ຮັບພອນເປັນສຸກມາທາງເຈົ້າ.
3 ຜູ້ໃດທີ່ເຮັດດີນຳເຈົ້າເຮົາກໍຈະ
ອວຍພອນເຂົາ ແຕ່ວ່າຜູ້ໃດທີ່
ເຮັດບໍ່ດີນຳເຈົ້າເຮົາກໍຈະ
ສາບແຊ່ງໃຫ້ມີເວນມີກຳຫລາຍ
ແລ້ວພວກຄົນທັງໂລກຈະເປັນສຸກ
ໄດ້ຮັບພອນທາງເຊື້ອສາຍຂອງ
ເຈົ້າ."

"Look in chapter 12," replied Laud.

"Ok, everyone listen. I'll read it," said Sii. And he read verses 1-3:

1 The creator had said
to Abram, "Leave your
country, your people and
your father's household
and go to the land I will
show you. 2 I will make
you into a great nation
and I will bless you; I
will make your name
great, and you will be a
blessing. 3 I will bless
those who bless you, and
whoever curses you I will
curse; and all peoples on
earth will be blessed
through you."

ພໍອ່ານແລ້ວສີກໍເວົ້າວ່າ, "ປັດໂທ! ເພິ່ນຜູ້ແຕ່ງບອກໃຫ້ໜີຈາກເຮືອນຊານບ້ານຊ່ອງຈາກໝູ່ຈາກພວກດັ່ງນັ້ນມັນກໍຄືດຍາກໄດ໋ເນາະ ອັບລາມຊິກ້າໜີບໍ່ ຊິໄປຢູ່ແນວໃດກິນແນວໃດ ເພິ່ນໃຫ້ໜີໄປແນວນັ້ນເພື່ອຫຍັງ?"

ແລ້ວລອດກໍຕອບວ່າ, "ເພິ່ນກໍຄືງຈະມີແຜນການຂອງເພິ່ນຈຶ່ງບອກດັ່ງນັ້ນຍ້ອນວ່າແຕ່ທໍາອິດເພິ່ນຜູ້ແຕ່ງກໍໄດ້ສັນຍາໄວ້ກັບພໍ່ແມ່ເດີມເຮົາແຕ່ກີ້ແຕ່ກ່ອນວ່າ ຈະໃຫ້ຜູ້ນຶ່ງເກີດນໍາເຊື້ອສາຍແມ່ຍິງ ຜູ້ນັ້ນຈະຢຽບຫົວງູໃຫ້ແຕກ ແລ້ວເພິ່ນກໍບໍ່ລືມຄໍາທີ່ເພິ່ນເວົ້າ ເພິ່ນເຫັນວ່າອັບລາມເປັນຜູ້ເຊື່ອເພິ່ງເພິ່ນ ເພິ່ນຈຶ່ງເວົ້າວ່າ ຈະໃຫ້ຜູ້ທີ່ລົງມາເກີດນັ້ນເກີດຈາກເຊື້ອສາຍຂອງອັບລາມ ໂຕອັບລາມນີ້ກໍຕົກຢູ່ນໍາຊຸມທີ່ບໍ່ເຊື່ອເພິ່ງເພິ່ນ ແລ້ວເພິ່ນກໍໃຫ້ລາວຍ້າຍອອກຈາກຊຸມນີ້ໄປຢູ່ບ່ອນອື່ນເພື່ອຈະໃຫ້ມີເຊື້ອສາຍທີ່ຮູ້ຈັກເພິ່ນ ດັ່ງນັ້ນເພິ່ນຈຶ່ງໃຫ້ອັບລາມໜີຈາກບ່ອນຢູ່ບ່ອນເຊົາໄປຢູ່ບ່ອນໃໝ່ ແລ້ວເພິ່ນກໍອວຍພອນໃຫ້ອັບລາມວ່າ ຖ້າພວກເຈົ້າເຮັດຫຍັງກໍຈະໄດ້ສົມດັ່ງໃຈ."

"Man alive!" said Sii as soon as he finished reading. "That was sure a hard thing the creator asked Abram to do–to up and leave his home and all his friends like that. Was Abram brave enough to do it? How was he going to make a living if he did? And why did the creator ask him to do it?"

"You can be sure the creator had a plan," replied Laud, "or he wouldn't have asked him to do it. Ever since the beginning the creator had promised our ancestors, Adam and Eve, that someone would be born of the woman's line who would crush the snake's head. The creator never forgot that promise. Seeing that Abram trusted in him, the creator decided that he would have the deliverer come down and be born as a descendant of Abram. The other people where Abram was living weren't believers in the creator. The creator had Abram move away from these people in order that Abram's family line would know him. That's why he had Abram move away from where he was living to a new place. He also blessed Abram, saying that Abram would succeed in whatever he did."

ແລ້ວສາກໍເວົ້າວ່າ, "ຂໍ້ທວ່າງນີ່ງນັ້ນບອກວ່າ ຄົນທຸກຊາດທຸກພາສາທົ່ວໂລກຊິເປັນສຸກມາທາງອັບລາມວ່າຊັ້ນ ຂໍ້ນີ້ໝາຍຄວາມວ່າແນວໃດ? ເຮັດແນວໃດຈຶ່ງເວົ້າວ່າຄົນທົ່ວໂລກຊິມີຄວາມສຸກມາທາງຄົນຜູ້ດຽວ?"

ແລ້ວລອດກໍເວົ້າວ່າ, "ຊິຖາມອີກຈັກແນວນຶ່ງ ແມ່ນໃຜເປັນຜູ້ຕົວະຜູ້ລໍ້ລວງຄົນ ເປັນສັດຕູກັນກັບຄົນ?"

ແລ້ວສາກໍເວົ້າວ່າ, "ເທວະດາຊຸມບໍ່ຈິບບໍ່ດີນັ້ນລະຕົວະຄົນ ເຮັດໃສ່ຄົນ."

ແລ້ວລອດກໍຕອບວ່າ, "ເອີ້ ແມ່ນແລ້ວ ຖ້າຜູ້ໃດຈັດການເທວະດາຊຸມບໍ່ຈິບບໍ່ດີນີ້ໄດ້ ຜູ້ນັ້ນກໍຊິຊ່ອຍຄົນທົ່ວໂລກໄດ້ ແມ່ນບໍ່ລະ? ອັນນີ້ກໍສຳຄັນເດີ ຄົນທົ່ວໂລກຊິໄດ້ພອນທາງອັບລາມ ຍ້ອນວ່າເພິ່ນຜູ້ແຕ່ງໃຫ້ຜູ້ທີ່ຊິຢຽບຫົວງູໃຫ້ແຕກນັ້ນລົງມາເກີດນຳເຊື້ອສາຍຂອງອັບລາມ ຢ່າລືມເດີ ເພິ່ນຜູ້ແຕ່ງເພິ່ນຄຶດທາງເອົາໄວ້ແລ້ວ ເພິ່ນຊິໃຫ້ຜູ້ນັ້ນມາທາງເຊື້ອສາຍອັບລາມນີ້ລະ."

Saa spoke up to ask a question, "One of the verses a moment ago said that people of every nation and language in the world would be blessed through Abram. What does that mean? How could everybody in the world receive happiness through one person?"

"Let me ask you something else first," Laud replied. "Who lies and deceives people and is people's enemy?"

"Those bad angels," replied Saa.

"Right," said Laud. "So if someone could come and put an end to those bad angels he would help everyone in the world, right? This is an important point. The reason that everyone in the world was going to be blessed through Abram, was because the creator was going to have the one who would crush the snake's head come down to be born as Abram's descendant. Don't forget, the creator already had thought of a way to save people. He planned that the one he would send would be a descendant of this man Abram."

ແລ້ວສີກໍເວົ້າວ່າ, "ປະເທດນັ້ນເມືອງນັ້ນມີຢູ່ບໍ່ທຸກມື້ນີ້? ແຕ່ກີ້ແຕ່ກ່ອນຢູ່ໃສເປັນຄົນແບບໃດ?"

"Does that country still exist where the creator told Abram to go?" asked Sii. "What were the people like?"

ລອດກໍຕອບວ່າ, "ປະເທດທີ່ວ່ານີ້ດຽວນີ້ກໍຍັງມີຢູ່ ຊື່ວ່າປະເທດອິດສະລາເອັນ ຫລາຍຄົນກໍຄືຊິເຄີຍໄດ້ຍິນຊື່ປະເທດນີ້."

"Yes, it still exists," answered Laud. "It's called Israel. Probably a lot of you have heard of it."

ແລ້ວສາກໍເວົ້າວ່າ, "ຜູ້ນັ້ນເດ່ ຜູ້ທີ່ເກີດຈາກເຊື້ອສາຍແມ່ຍິງນັ້ນ ເກີດແລ້ວບໍ່ດຽວນີ້?"

"What about that person, the descendant of the woman?" asked Saa. "Has he been born yet?"

ແລ້ວລອດກໍເວົ້າວ່າ, "ເອີ່ ຄຳຖາມຂໍ້ນີ້ສຳຄັນຫລາຍ ຂ້ອຍຫາກບໍ່ຢາກເວົ້າລັດຈັກໜ້ອຍຊິເຫັນວ່າເປັນຄົນໝູ່ໃດ. ຈັກໜ້ອຍຈຶ່ງຈະເວົ້າໃຫ້ຮູ້ວ່າຜູ້ລົງມາເກີດເປັນຄົນນັ້ນ ລົງມາເກີດຢູ່ໃສ ຈັດການເທວະດາຊຸມບໍ່ຈົບແບບໃດ. ເອີ່ ຂ້ອຍຈະກັບມາເວົ້າເລື່ອງອັບລາມອີກກ່ອນ."

"That's an important question," replied Laud, "but I can't jump too far ahead of myself. We'll get to the answer pretty soon. Then you'll know about the people who descended from Abram and you'll learn about where the one who came down and was born as a person was born and about how he dealt with the problem of the bad angels. Ok, let's get back to the story of Abram.

ແລ້ວລອດກໍເວົ້າວ່າ, "ເບິ່ງບົດທີ 12 ຂໍ້ 4 ຮອດ 9 ເດີ ຂ້ອຍຊິອ່ານໃຫ້ຟັງ." ແລ້ວມັນກໍອ່ານວ່າ,

"Look at chapter 12:4-9," said Laud. "I'll read it this time:"

4 ແລ້ວອັບລາມກໍໄດ້ເດີນທາງອອກ
ໄປຈາກເມືອງຮາລານຕາມຄຳບອກ
ຂອງເພິ່ນຜູ້ແຕ່ງ ຕອນນັ້ນອັບລາມ
ອາຍຸໄດ້ເຈັດສິບຫ້າປີແລ້ວ. 5 ລາວ
ກໍໄດ້ພາເມຍຄືນາງຊາລາຍກັບໂລດຜູ້
ເປັນຫລານ ໂຮມທັງຊັບສົມບັດກັບ
ພວກຄົນໃຊ້ທີ່ລາວໄດ້ຫາມາຕອນຢູ່
ໃນເມືອງຮາລານນັ້ນ ແລ້ວກໍຍ້າຍ
ຄົວເຮືອນທັງໝົດໄປຢູ່ແຜ່ນດິນ
ການາອານ.

6 ອັບລາມກໍໄດ້ເຂົ້າໄປໃນແຜ່ນດິນ
ການາອານ ຈົນໄປຮອດກົກໄມ້ໃຫຍ່
ຂອງໂມເລຢູ່ໃນເຂດເມືອງຊີເຄັມ
ຕອນນັ້ນພວກຄົນການາອານກໍໄດ້
ອາໄສຢູ່ໃນແຜ່ນດິນນັ້ນ. 7 ພໍ
ອັບລາມມາຮອດບ່ອນນັ້ນແລ້ວ ເພິ່ນ
ຜູ້ແຕ່ງກໍມາຫາແລະບອກລາວວ່າ,
“ແຜ່ນດິນນີ້ລະທີ່ເຮົາຈະມອບໃຫ້ລູກ
ຫລານຂອງເຈົ້າ.” ແລ້ວອັບລາມກໍ
ເລີຍເອົາກ້ອນຫີນເຮັດແທ່ນບູຊາຂຶ້ນ
ເພື່ອລະລຶກເຖິງເພິ່ນຜູ້ແຕ່ງຢູ່ບ່ອນ
ເພິ່ນໄດ້ມາຫານັ້ນ.

4 So Abram left, as
the creator had told
him; and Lot went
with him. Abram was
seventy-five years old
when he set out from
Haran. 5 He took his
wife Sarai, his
nephew Lot, all the
possessions they had
accumulated and the
people they had
acquired in Haran,
and they set out for
the land of Canaan,
and they arrived there.

6 Abram traveled
through the land as far
as the site of the great
tree of Moreh at
Shechem. At that time
the Canaanites were
in the land. 7 The
creator appeared to
Abram and said, “To
your offspring I will
give this land.” So he
built an altar there to
the creator, who had
appeared to him.

8 ແລ້ວອັບລາມກໍອອກເດີນທາງຕໍ່
ຈົນໄປຮອດພູເຂົາລະຫວ່າງເມືອງ
ອາອີກັບເມືອງເບັດເອັນ ແລ້ວກໍຕັ້ງ
ຕູບຜ້າຢູ່ນັ້ນ ເມືອງເບັດເອັນນີ້ກໍຢູ່
ທາງຕາເວັນຕົກຈາກບ່ອນລາວຢູ່
ແລ້ວເມືອງອາອີນັ້ນກໍຢູ່ທາງ
ຕາເວັນອອກ ແລ້ວລາວກໍເຮັດ
ແທ່ນບູຊາໄຫວ້ວອນເພິ່ນຜູ້ແຕ່ງຢູ່
ນັ້ນ 9 ຈາກນັ້ນອັບລາມກໍຍ້າຍ
ເຮືອນຕູບຜ້າເດີນທາງຕໍ່ໄປເລື້ອຍໆ
ຈົນຮອດຖິ່ນເນເກັບຕອນໃຕ້ຂອງ
ການາອານ.

8 From there he went
on toward the hills east
of Bethel and pitched
his tent, with Bethel on
the west and Ai on the
east. There he built an
altar to the creator and
called on the name of
the creator. 9 Then
Abram set out and
journeyed toward the
Negev.

ແລ້ວສາກໍເວົ້າວ່າ, "ໂອ້! ເຂົາເຈົ້າໄປທັງ
ເມຍທັງຫລານເນາະ."

ແລ້ວລອດກໍຕອບວ່າ, "ແມ່ນລະ ເພິ່ນຜູ້
ແຕ່ງບອກແນວໃດລາວກໍເຮັດນຳແນວນັ້ນ
ເຂົາໄປທາງຕາເວັນຕົກຈົນຮອດການາອານ
ອັບລາມນີ້ກໍເປັນຄົນຮັ່ງຄົນມີແດ່ ໄດ້ເອົາ
ສັດເອົາເຄື່ອງຄົວເອົາທຸກອັນທຸກແນວໄປນຳ
ອາຍຸລາວໄດ້ເຈັດສິບຫ້າປີແລ້ວ ແຕ່ວ່າຍັງ
ບໍ່ທັນມີລູກມີເຕົ້າ

"So they all packed up and went; wife, nephew and all," remarked Saa.

"That's right," said Laud. "Abram did whatever the creator told him to do. He traveled west until he reached the land of Canaan. Abram was quite well off. He took all his livestock and household belongings with him. He was 75 years old at the time, and still had no children.

ລາວເຊື່ອວ່າລາວຊິໄດ້ລູກ ຍ້ອນວ່າເພິ່ນຜູ້ແຕ່ງໄດ້ບອກລາວແລ້ວວ່າ ຊິມີລູກມີຫລານຫລາຍເປັນປະເທດໃຫຍ່ເມືອງໃຫຍ່."

## *ອັບລາມແຍກກັນກັບໂລດ*

ແລ້ວລອດກໍເວົ້າຕໍ່ໄປວ່າ, "ຕອນນັ້ນເພິ່ນຜູ້ແຕ່ງກໍໄດ້ບອກອັບລາມແລ້ວວ່າຄົນທຸກຊາດທົ່ວໂລກຊິໄດ້ຮັບພອນເປັນສຸກທາງເຊື້ອສາຍຂອງລາວ ເພິ່ນເວົ້າແນວນັ້ນກໍຍ້ອນວ່າ ຜູ້ທີ່ຊິຈັດການມານຊິມາເກີດທາງເຊື້ອສາຍຂອງອັບລາມ ແລ້ວອັບລາມກໍເຊື່ອເພິ່ນຟັງເພິ່ນ ເປັນດັ່ງນັ້ນລະອັບລາມຈຶ່ງໄປຢູ່ເມືອງການາອານບ່ອນເພິ່ນຜູ້ແຕ່ງໄດ້ບອກໄວ້ນັ້ນ ການາອານທຸກມື້ນີ້ກໍຄືປະເທດອິດສະລາເອັນນັ້ນລະ ແລ້ວລາວກໍຮັ່ງກໍມີຂຶ້ນເລື້ອຍໆ ຄືເພິ່ນຜູ້ແຕ່ງໄດ້ເວົ້າໄວ້ວ່າ ຖ້າລາວເຮັດອັນໃດກໍຊິໄດ້ສົມດັ່ງໃຈ ແລ້ວລາວກໍໄດ້ສົມໃຈແທ້ ແກະກໍມີ, ງົວກໍມີ, ແບ້ກໍມີ, ມີຢ່າງຫລວງຫລາຍເປັນພັນໆ ໂຕ

But he believed that he would get a son because the creator had told him that he would have so many descendants that they would become a large nation."

## *Abram Separates From Lot*

Laud continued, "The creator had already told Abram that all peoples of the earth would be blessed through his descendants. The reason the creator said this was because the one who would defeat the devil would be Abram's descendant. Abram believed and obeyed the creator. And that's why he moved to the land of Canaan as the creator had told him to do. Canaan is called Israel nowadays. As time went on Abram got richer and richer. The creator had promised that he would succeed in whatever he attempted, and this is just what happened. He had thousands of sheep, cattle, and goats.

ຄົນໃຊ້ນັບແຕ່ຜູ້ຊາຍກໍໄດ້ສາມຮ້ອຍປາຍ ແລ້ວໂລດຜູ້ເປັນຫລານຂອງອັບລາມນັ້ນກໍມີສັດຫລາຍຄືກັນ ຈົນບໍ່ມີບ່ອນຊິລ້ຽງ ຄົນລ້ຽງສັດຂອງອັບລາມກັບຂອງໂລດຍາດບ່ອນລ້ຽງສັດກັນ ບໍ່ຖືກກັນ ພໍລາວເຫັນດັ່ງນັ້ນລາວກໍໜັກໃຈ ລາວເລີຍເວົ້າກັບໂລດຜູ້ເປັນຫລານວ່າດັ່ງນີ້ ເບິ່ງບົດທີ 13 ເດີ ຂ້ອຍຊິອ່ານ." ແລ້ວລອດກໍອ່ານຂໍ້ 8 ຮອດ 13 ວ່າ,

*8* ອັບລາມກໍເລີຍເວົ້າຕົກລົງ
ກັບຫລານຊາຍວ່າ, "ໂລດເອີຍ
ເຈົ້າກັບເຮົາກໍເປັນພີ່ນ້ອງກັນ
ມັນບໍ່ຄັກທີ່ລຸງກັບຫລານຈະບໍ່
ຖືກກັນແນວນີ້ ທັງພວກລ້ຽງ
ສັດຂອງລຸງກັບພວກລ້ຽງສັດ
ຂອງຫລານ. *9* ເບິ່ງດູ
ແຜ່ນດິນນີ້ກໍກວ້າງຫລາຍຢູ່ ໃຫ້
ພວກເຮົາແບ່ງທີ່ກັນສາເປັນຫຍັງ
ເຈົ້າຈະເອົາທາງໃດກໍເລືອກເອົາ
ສາ."

He had lots of servants; just counting the men servants he had over 300. His nephew Lot also had large flocks and herds. After a while they got short of pasture land. Abram's herdsmen and Lot's herdsmen began competing for pasture and getting into arguments. When Abram learned about this problem he was concerned. So he had a talk with his nephew Lot. Let's look together at chapter 13 to see what he said. I'll read it." Laud read verses 8-13:

*8* So Abram said to Lot,
"Let's not have any
quarreling between you
and me, or between your
herdsmen and mine, for we
are brothers. *9* Is not the
whole land before you?
Let's part company. If you
go to the left, I'll go to the
right; if you go to the
right, I'll go to the left."

10 ໂລດກໍເລີຍຫລຽວເຫັນທີ່ຮາບ
ແມ່ນ້ຳຈໍແດນແຖວເມືອງໂຊດົມກັບ
ເມືອງໂກໂມລາທາງຕາເວັນອອກ ວ່າ
ມັນອຸດົມສົມບູນມີນ້ຳມີທ່າຫລາຍ
ປານສວນຂອງເພິ່ນຜູ້ແຕ່ງແຕ່ກີ້ຫລື
ປານແຜ່ນດິນເອຢິບຢູ່ທາງເມືອງ
ໂຊອາ ຄືໃນຕອນນັ້ນເພິ່ນຜູ້ແຕ່ງຍັງ
ບໍ່ທັນທຳລາຍລົບລ້າງເມືອງໂຊດົມ
ກັບເມືອງໂກໂມລາ. 11 ແລ້ວໂລດກໍ
ເລີຍເລືອກເອົາທີ່ຮາບແມ່ນ້ຳຈໍແດນ
ທັງໝົດ ແລ້ວໄປຢູ່ບ່ອນນັ້ນ ຕ່າງ
ຄົນຕ່າງໄປ. 12 ອັບລາມກໍໄດ້ຢູ່ໃນ
ແຜ່ນດິນການາອານນັ້ນ ແຕ່ໂລດກໍ
ຍ້າຍຕູບຜ້າໄປນຳເມືອງຕ່າງໆ ນຳ
ຮາບແມ່ນ້ຳຈໍແດນຈົນໄປໃກ້ເມືອງ
ໂຊດົມ. 13 ພວກຜູ້ຊາຍຊາວເມືອງ
ໂຊດົມກໍເຮັດບາບຫລາຍ ມີແຕ່ເຮັດ
ຄວາມຊົ່ວແນວບໍ່ດີໃນສາຍຕາຂອງ
ເພິ່ນຜູ້ແຕ່ງ.

ແລ້ວລອດກໍເວົ້າຕໍ່ວ່າ, "ອັບລາມກໍໃຫ້ຫລານເລືອກເອົາກ່ອນເນາະ ລາວບໍ່ໄດ້ຂີ້ຖີ່ ເພິ່ນຜູ້ແຕ່ງໃຫ້ຢູ່ບ່ອນໃດລາວກໍຢູ່ບ່ອນນັ້ນ

10 Lot looked up
and saw that the
whole plain of the
Jordan was well
watered, like the
garden of the creator,
like the land of
Egypt, toward Zoar.
(This was before the
creator destroyed
Sodom and
Gomorrah.) 11 So Lot
chose for himself the
whole plain of the
Jordan and set out
toward the east. The
two men parted
company: 12 Abram
lived in the land of
Canaan, while Lot
lived among the
cities of the plain and
pitched his tents near
Sodom. 13 Now the
men of Sodom were
wicked and were
sinning greatly
against the creator.

Then Laud said, "See how Abram let his nephew have first choice? He didn't hog the best for himself. He was content to be wherever the creator wanted him to be.

ໜໍໂລດນັ້ນຕື້ຄຶດໃສ່ແຕ່ໂຕເຈົ້າຂອງ ພໍ
ໂລດເລືອກເອົາບ່ອນດີໆ ແຖວຮາບ
ແມ່ນ້ຳຈໍແດນຈາກລຸງແລ້ວ ລາວກໍໄປ
ຢູ່ນັ້ນ ສ່ວນອັບລາມກໍຍັງຢູ່ບ່ອນເກົ່າ
ພໍແຍກຈາກກັນແລ້ວເພິ່ນຜູ້ແຕ່ງກໍໄດ້
ເວົ້າສັນຍາກັບອັບລາມອີກວ່າ ເບິ່ງຂໍ້
14 ຮອດ 18 ເດີ ຂ້ອຍຊິອ່ານ."

ແລ້ວລອດກໍອ່ານວ່າ,

14 ຫລັງຈາກໂລດແຍກໂຕ
ອອກຈາກລຸງອັບລາມແລ້ວ
ເພິ່ນຜູ້ແຕ່ງກໍບອກກັບອັບລາມ
ວ່າ, "ໃຫ້ເຈົ້າເງີຍໜ້າເບິ່ງໄປ
ທຸກທາງເດີ 15 ແຜ່ນດິນທີ່ເຈົ້າ
ເຫັນນີ້ກໍຈະຕົກເປັນຂອງລູກ
ຂອງຫລານເຈົ້າໝົດຕະຫລອດ
ໄປ 16 ແລ້ວເຈົ້າຈະມີ
ລູກຫລານຫລາຍໆ ຈົນນັບບໍ່ໄດ້
ຈະຫລາຍປານເມັດດິນ
ເມັດຊາຍ ໃຫ້ຄົນນັບລອງເບິ່ງ
ດູຖ້າຈະນັບໄດ້ 17 ລຸກໄປ
ເລາະເບິ່ງໃຫ້ທົ່ວແຜ່ນດິນນີ້ສາ
ຄືເຮົາໄດ້ມອບແຜ່ນດິນນີ້ໃຫ້
ເຈົ້າແລ້ວ."

But Lot thought only of himself, so he chose the nicest place there in the Jordan valley for himself and then moved there to live. But Abram kept living where he had been before. After Abram and Lot separated, the creator repeated his promises to Abram. Look at verses 14-18. I'll read:"

14 The creator said to
Abram after Lot had parted
from him, "Lift up your
eyes from where you are
and look north and south,
east and west. 15 All the
land that you see I will
give to you and your
offspring forever. 16 I will
make your offspring like
the dust of the earth, so
that if anyone could count
the dust, then your
offspring could be counted.
17 Go, walk through the
length and breadth of the
land, for I am giving it to
you."

*18* ອັບລາມເລີຍຍ້າຍຄົວໄປຢູ່ໃກ້ປ່າກົກໄມ້ໃຫຍ່ຂອງນາຍມຳເລ ຢູ່ໃກ້ເມືອງເຮັບໂລນ ແລ້ວລາວກໍເຮັດແທ່ນບູຊາລະລຶກເຖິງເພິ່ນຜູ້ແຕ່ງຢູ່ບ່ອນນັ້ນ.

ອ່ານແລ້ວລອດກໍເວົ້າວ່າ, "ເບິ່ງບົດທີ 15 ຂໍ້ 1 ຮອດ 6 ເດີ ເອົ້າ ສາອ່ານ."

ແລ້ວສາກໍອ່ານວ່າ,

*18* So Abram moved his tents and went to live near the great trees of Mamre at Hebron, where he built an altar to the creator.

"Look at chapter 15:1-6 now," said Laud. "Saa, would you read?"

Saa began reading:



## *ອັບລາມເຊື່ອໃນຄຳສັນຍາຂອງ*
## *ເພິ່ນຜູ້ແຕ່ງ*

1 ຫລັງຈາກນັ້ນ ອັບລາມກໍຝັນວ່າ
ໄດ້ຍິນສຽງເພິ່ນຜູ້ແຕ່ງເວົ້າວ່າ,
"ເຈົ້າຢ່າສູ່ຢ້ານເດີ ອັບລາມເອີຍ ໂຕ
ເຮົາເອງເປັນສິ່ງປ້ອງກັນໃຫ້ເຈົ້າ, ຈະ
ບັງແນວອັນຕະລາຍໄວ້ໃຫ້ເຈົ້າ ແລ້ວ
ເຮົານີ້ເປັນລາງວັນຂອງເຈົ້າ ຈະໃຫ້
ພອນເຈົ້າຫລາຍ."

2 ອັບລາມເລີຍຕອບວ່າ, "ເພິ່ນຜູ້
ແຕ່ງຈະອວຍພອນແນວໃດກໍຕາມ
ຜູ້ຂ້າກໍຍັງໜັກໃຈຢູ່ວ່າຍັງບໍ່ມີລູກມີ
ເຕົ້າ ທີ່ຈະເປັນຜູ້ຮັບເອົາມໍລະດົກສືບ
ຕໍ່ໄປອີກ ມີແຕ່ເອລີເອເຊຊາວເມືອງ
ດາມາເຊຜູ້ເປັນຄົນໃຊ້ທີ່ນັ້ນທີ່ຈະໄດ້
ມູນມັ່ງນັ້ນ. 3 ຖ້າເພິ່ນຜູ້ແຕ່ງບໍ່
ອວຍພອນໃຫ້ຜູ້ຂ້າມີລູກ ຜູ້ຂ້າກໍຕ້ອງ
ຍົກມູນມັ່ງຜູ້ຂ້າໃຫ້ຄົນໃຊ້ ມັນກໍບໍ່ຄື
ໃຫ້ກັບລູກຜູ້ຂ້າ."

## *Abram Believes the Creator's Promise*

1 After this, the
word of the creator
came to Abram in a
vision: "Do not be
afraid, Abram. I am
your shield, your very
great reward."

2 But Abram said,
"O sovereign creator,
what can you give me
since I remain
childless and the one
who will inherit my
estate is Eliezer of
Damascus?" 3 And
Abram said, "You
have given me no
children; so a servant
in my household will
be my heir."

4 ເພິ່ນຜູ້ແຕ່ງກໍເລີຍບອກອັບລາມ
ວ່າ, "ມູນມັ່ງຂອງເຈົ້າຈະບໍ່ຕົກເປັນ
ຂອງຄົນໃຊ້ຜູ້ນັ້ນດອກ ເຈົ້າຈະມີ
ລູກຢູ່ ແລ້ວລູກຂອງເຈົ້ານັ້ນຈະ
ເປັນຜູ້ຮັບມູນມັ່ງຂອງເຈົ້າຕໍ່ໄປ."

4 Then the word of
the creator came to
him: "This man will not
be your heir, but a son
coming from your own
body will be your heir."

5 ພໍເວົ້າແລ້ວເພິ່ນຜູ້ແຕ່ງກໍເລີຍ
ພາອັບລາມອອກໄປທາງນອກເຮືອນ
ຕູບຜ້າໃຫ້ລາວຫລຽວເບິ່ງພວກດາວ
ຢູ່ເທິງຟ້າ ແລ້ວກໍເວົ້າກັບລາວວ່າ,
"ນັບເບິ່ງດູ ເຮົາຈະໃຫ້ເຈົ້າມີລູກມີ
ຫລານຫລາຍຊໍ່ານັ້ນລະ."

5 He took him outside
and said, "Look up at
the heavens and count
the stars; if indeed you
can count them." Then
he said to him, "So
shall your offspring
be."

6 ອັບລາມກໍເລີຍເຊື່ອໝັ້ນໃຈໃນ
ຄວາມເວົ້າຂອງເພິ່ນຜູ້ແຕ່ງ ແລ້ວ
ເພິ່ນຜູ້ແຕ່ງກໍພໍໃຈ ຈຶ່ງນັບວ່າ
ອັບລາມເປັນຜູ້ຊອບທຳຍ້ອນລາວ
ເຊື່ອເພິ່ນ.

6 Abram believed the
creator, and he credited
it to him as
righteousness.

ພໍສາອ່ານແລ້ວ ເຂົາເຈົ້າກໍເວົ້າວ່າ, "ໂອ້! ອັບລາມກໍຢ້ານບໍ່ໄດ້ລູກສືບຕະກຸນເນາະ."

When Saa finished reading, people said, "Look at that! Abram was worried he wouldn't have a son to carry on the family line, wasn't he?"

ແລ້ວລອດກໍເວົ້າວ່າ, "ເບິ່ງດູ ລາວອາຍຸເກືອບຈະຮອດຮ້ອຍປີກໍຕາມ ພໍໄດ້ຍິນເພິ່ນຜູ້ແຕ່ງເວົ້າດັ່ງນັ້ນ ລາວກໍເຊື່ອເພິ່ນແລ້ວຄວາມເຊື່ອນັ້ນລະຖືກໃຈເພິ່ນພໍໃຈເພິ່ນ ເພິ່ນຈຶ່ງນັບວ່າລາວເປັນຄົນດີເປັນຄົນບໍລິສຸດ. ແຕ່ທຳອິດ ທີ່ປູ່ສັງກະສາຍ່າສັງກະສີພໍ່ແມ່ເດີມຂອງເຮົາບໍ່ເຊື່ອກໍຕັດເຂົາເຈົ້າຂາດຈາກເພິ່ນຜູ້ແຕ່ງຍ້ອນເຂົາບໍ່ເຊື່ອນັ້ນລະເຮັດໃຫ້ເຂົາມີຄວາມບາບ ບາດນີ້ອັບລາມຟັງເພິ່ນຜູ້ແຕ່ງ ເຊື່ອເພິ່ນ ແລ້ວຄວາມເຊື່ອນັ້ນເຮັດໃຫ້ເປັນອັນນຶ່ງອັນດຽວກັບເພິ່ນອີກແລ້ວພໍເພິ່ນເຫັນຄວາມເຊື່ອຂອງລາວເພິ່ນກໍປ່ຽນຊື່ໃໝ່ໃຫ້ລາວວ່າ ອັບລາຮາມແປວ່າພໍ່ຂອງຄົນຫລາຍຊາດ ອ່ານເບິ່ງດູສີ ບົດທີ 17 ຂໍ້ 4 ຮອດ 6."

"But just think," answered Laud, "he was almost a hundred years old! Even so, he believed it when the creator said that he was going to have a son. His faith pleased the creator very much. As a result he considered Abram to be a good, innocent person. Back in the beginning Adam and Eve, our first ancestors, didn't believe. This caused them to be cut off from the creator. Because of their unbelief they became sinners. But because Abram listened to the creator and believed him, by his faith he was able to be reunited to the creator. And seeing his faith, the creator gave him a new name: 'Abraham,' which means 'father of many nations.' Sii, would you read chapter 17:4-6?"

ແລ້ວສີກໍອ່ານວ່າ,

*4-6* "ເຮົາໃຫ້ຄຳໝັ້ນສັນຍາຂອງເຮົານີ້ໄວ້ນຳເຈົ້າ ແລ້ວເຈົ້າຈະເປັນພໍ່ຕະກູນຂອງຄົນຫລາຍຊາດແລ້ວກໍຈະມີກະສັດຫລາຍອົງເກີດ

Sii read:

*4* "As for me, this is my covenant with you: You will be the father of many nations. *5* No longer will you be called Abram; your name will be

ມາຕາມເຊື້ອສາຍຂອງເຈົ້າ ແລ້ວເຮົາກໍ
ຈະໃສ່ຊື່ໃໝ່ໃຫ້ເຈົ້າ ແຕ່ນີ້ຕໍ່ໄປເຈົ້າຈະມີ
ຊື່ວ່າ ອັບລາຮາມ (ແປວ່າພໍ່ຂອງຫລາຍໆ
ຄົນ) ບໍ່ແມ່ນພໍ່ໃຫຍ່ອັບລາມຊື່ໆ ຍ້ອນ
ວ່າເຮົາຈະໃຫ້ເຈົ້າເປັນພໍ່ຂອງຄົນຫລາຍ
ຊາດ."

Abraham, for I have made you a father of
many nations.
6 I will
make you very fruitful; I will make nations of you, and kings will come from you."

ແລ້ວລອດກໍເວົ້າວ່າ, "ຕອນນັ້ນເພິ່ນຜູ້ແຕ່ງ ສັນຍາວ່າຈະເປັນພະເປັນເຈົ້າຂອງພວກເຂົາ ອ່ານອີກເບິ່ງດູສີ ຂໍ້ 7 ຮອດ 8."

Laud pointed out, "At that time the creator also promised to be their God. Read verses 7 and 8 too, Sii."

ແລ້ວສີກໍອ່ານວ່າ,

Sii read on:

7 "ຄຳໝັ້ນສັນຍາຂອງເຮົານີ້ເຮົາສັນຍາ
ໄວ້ໃຫ້ເຈົ້າກັບລູກຫລານຕະຫລອດ
ເຊື້ອສາຍຂອງເຈົ້າ ເປັນຄຳໝັ້ນສັນຍາ
ແນ່ນອນໝັ້ນຢືນຕະຫລອດໄປ ສັນຍາວ່າ
ເຮົາເພິ່ນຜູ້ແຕ່ງນີ້ ຈະເປັນພະເປັນເຈົ້າ
ຂອງເຈົ້າ ກັບຂອງພວກລູກຫລານຂອງ
ເຈົ້າຢູ່ຕະຫລອດໄປ.
8 ແຜ່ນດິນ
ການາອານບ່ອນເຈົ້າມາອາໄສຢູ່ນີ້ ຕໍ່ໄປ
ນີ້ເຮົາຈະມອບໃຫ້ເປັນສິດຂອງເຈົ້າທັງ
ໝົດ ເປັນສິດຂອງພວກລູກຫລານຂອງ
ເຈົ້າໄປຕະຫລອດ ແລ້ວເຮົາກໍຈະເປັນ
ພະຜູ້ເປັນເຈົ້າຂອງພວກເຂົາ."

7 "I will establish my covenant as an everlasting covenant between me and you and your descendants after you for the generations to come, to be your God and the God of your descendants after you.
8 The whole land of Canaan, where you are now an alien, I will give as an everlasting possession to you and your descendants after you; and I will be their God."

ອ່ານແລ້ວລອດກໍໃຫ້ສີອ່ານຂໍ້ 15 ກັບ 16 ຕໍ່ອີກ ແລ້ວສີກໍອ່ານວ່າ,

*15* ແລ້ວພະເຈົ້າກໍບອກອັບລາຮາມ
ວ່າ, "ສຳຫລັບເມຍຂອງເຈົ້ານັ້ນ
ເຮົາບໍ່ໃຫ້ເອີ້ນວ່າຊາລາຍອີກຕໍ່ໄປ
ແຕ່ໃຫ້ໃສ່ຊື່ວ່າຊາລາ (ແປວ່າລູກສາວ
ກະສັດ) *16* ເຮົາຈະອວຍພອນໃຫ້
ເຂົາມີລູກຊາຍໃຫ້ເຈົ້າແນ່ນອນ ຈະ
ໃຫ້ເຂົາໄດ້ຮັບພອນຫລາຍ ເປັນແມ່
ຕະກູນຂອງຄົນຫລາຍຊາດ ແລ້ວກໍ
ຈະມີກະສັດຫລາຍອົງເກີດມາຕາມ
ເຊື້ອສາຍຂອງເຂົາ."

Then Laud had Sii read verses 15 and 16 too:

*15* God also said to
Abraham, "As for
Sarai your wife, you
are no longer to call
her Sarai; her name
will be Sarah. *16* I
will bless her and
will surely give you a
son by her. I will
bless her so that she
will be the mother of
nations; kings of
peoples will come
from her."

ອ່ານແລ້ວພວກຄົນຢູ່ທີ່ນັ້ນກໍທ້ວງວ່າ, "ເອີ! ໃນຂໍ້ນີ້ຄືບອກວ່າພະເຈົ້າ ແຕ່ກໍ້ພັດຄືວ່າເພິ່ນຜູ້ແຕ່ງ ມັນແນວໃດແທ້?"

"Hey!" people asked when he finished reading, "in those verses it said 'God.' Before he was called 'the creator.' Which name is the right one?"

ແລ້ວລອດກໍຖາມເຂົາວ່າ, "ຄຳວ່າພະເຈົ້ານີ້ຄືໃຜພວກເຈົ້າວ່າ ເຂົ້າໃຈວ່າແນວໃດ ແລະເປັນຜູ້ແນວໃດ?"

In response Laud asked them, "Who do you think the word 'God' refers to? What does it mean to you? If someone is called 'God', what is he like?"

ເຂົາກໍຕອບວ່າ, "ກໍເຂົ້າໃຈວ່າເປັນຜູ້ທີ່ມີລິດມີອຳນາດ ແລ້ວກໍເປັນໃຫຍ່ກວ່າທຸກສິ່ງທຸກຢ່າງ ບໍ່ເຄີຍເຫັນເພິ່ນ ແຕ່ເຂົ້າໃຈວ່າເປັນເຊັ່ນນັ້ນ."

ລອດກໍເວົ້າວ່າ, "ເອີ່ ຖ້າວ່າແນວນັ້ນ ກໍເພິ່ນຜູ້ແຕ່ງນັ້ນແຫລະເປັນພະເຈົ້າ ຖ້າເວົ້າເຖິງລິດເຖິງອຳນາດກັບຄວາມເປັນໃຫຍ່ກວ່າໝົດທຸກສິ່ງທຸກຢ່າງ ມັນກໍແມ່ນຂອງເພິ່ນຢູ່ແລ້ວ ຕໍ່ໄປນີ້ເຮົາຊິເອີ້ນວ່າພະເຈົ້າເດີ."

ແລ້ວລອດກໍເວົ້າອີກວ່າ, "ຖ້າຄົນເຮົາຟັງພະເຈົ້າເຊື່ອເພິ່ນກໍສຳຄັນໄດ໋ ຄືກັນກັບອາເບັນລູກຂອງປູ່ສັງກະສານັ້ນລະ ເຂົາຟັງເພິ່ນເຊື່ອເພິ່ນ ແລ້ວຄວາມເຊື່ອນັ້ນກໍຖືກໃຈເພິ່ນ, ຕອນນ້ຳຖ້ວມໂລກກໍຄືກັນ ໂນອາກໍເຊື່ອເພິ່ນຟັງເພິ່ນ ຍ້ອນຄວາມເຊື່ອນັ້ນເຂົາຈຶ່ງຫວິດຈາກນ້ຳຖ້ວມ ທັງລູກທັງເມຍທັງລູກໄພ້. ຍາມໃດກໍຢ່າຖ້າຄົນເຮົາເຊື່ອເພິ່ນຟັງເພິ່ນ ເຮົາກໍຊິຫວິດຈາກໂທດຈາກອຳນາດຂອງຄວາມບາບ

"The way I understand it," replied one man, "is that the word 'God' refers to one who has great power and authority and is greater than everything. I've never seen him, but that is what I understand."

"Well then the creator must be God," said Laud, "in terms of his power, authority and surpassing greatness. He possesses all these qualities. So from now on we will call him 'God.' "

Laud continued, "It's very important for us to believe and obey God, just like Abel, Adam's son did. Abel believed and obeyed God, so God was pleased with him. It was just the same with Noah at the time of the flood. Because of Noah's faith and obedience, he was saved from the flood, along with his wife, his sons and daughters-in-law. It's always been true that if we trust and obey God we are completely safe from punishment and from the control of sin, because God

ໝົດ ຍ້ອນວ່າພະເຈົ້າໄດ້ສ້າງທາງໄວ້ໃຫ້ເຮົາແລ້ວ ມັນຂຶ້ນຢູ່ກັບເຮົາທີ່ນັ້ນວ່າຊິເຊື່ອເພິ່ນຫລືບໍ່ເຊື່ອ."

ແລ້ວລຸງທາກໍເວົ້າວ່າ, "ແມ່ນແລ້ວທີ່ເຈົ້າເວົ້າມານີ້ ຍ້ອນວ່າຜູ້ສ້າງຄົນຜູ້ເປັນເຈົ້າຂອງຄົນບອກໄວ້ແນວໃດກໍຕ້ອງເປັນແນວນັ້ນ ເພິ່ນຄິດເຮັດທາງໄວ້ໃຫ້ຄົນ ເພື່ອບໍ່ໃຫ້ຄົນອາຍເພິ່ນໃຫ້ເປັນອັນນຶ່ງອັນດຽວກັນກັບເພິ່ນ ຄົນເຮົາຊິຄິດໄປທາງອື່ນກໍບໍ່ຖືກຕ້ອງ ເພາະເພິ່ນບອກແນວໃດກໍເປັນຄືຄຳເພິ່ນເວົ້າທຸກຄຳ."

has provided a way for us to be safe. It's up to us: it depends on whether or not we will believe God."

"What you're saying is right on," said Uncle Thaa. "Since he's the one who created people and owns people, then whatever he says has got to be true. He's made a way for people, so we don't have to be ashamed in front of him and so we can be reunited to him. It's wrong for us to attempt to go any other way than his way, because he's already told us the way and every word he says is true."

24/VII
ຫ້າມຈຳໜ່າຍ

## ເມຍອັບລາຮາມໄດ້ລູກ

ແລ້ວລອດກໍເວົ້າວ່າ, "ບາດນີ້ຈະເວົ້າເລື່ອງເມຍອັບລາຮາມໄດ້ລູກ ອັບລາຮາມກໍໄດ້ໄປຢູ່ເມືອງການາອານບ່ອນພະເຈົ້າບອກໃຫ້ໄປຢູ່ ລາວຢູ່ນັ້ນຊາວປີ ລາວກໍເຖົ້າຫລາຍແລ້ວ ແຕ່ຍັງບໍ່ທັນມີລູກເທື່ອ ເພິ່ນຜູ້ແຕ່ງກໍໄດ້ເວົ້າສັນຍາກັບລາວອີກວ່າ ປີໜ້າເຈົ້າຈະໄດ້ລູກ

"ພໍ່ອັບລາຮາມອາຍຸຮ້ອຍປີກໍໄດ້ລູກຄືຄຳພະເຈົ້າໄດ້ເວົ້ານັ້ນ ແລ້ວລາວກໍຕັ້ງຊື່ໃຫ້ລູກວ່າ ອີຊາກ ເຮົາຊິອ່ານເບິ່ງເລື່ອງນີ້ຕໍ່ເດີ ໃນບົດທີ 21ຂໍ້ 1 ຮອດ 3." ແລ້ວລອດກໍອ່ານວ່າ,

1 ພະເຈົ້າໄດ້ຊ່ອຍຊາລາຕາມທີ່ເພິ່ນໄດ້ສັນຍາໄວ້ 2 ຄືຊາລາໄດ້ຖືພາມີທ້ອງອອກລູກເປັນຜູ້ຊາຍໃຫ້ອັບລາຮາມຕອນອັບລາຮາມເຖົ້າແລ້ວ ພໍດີກັບ

## *Abraham's Wife Gives Birth*

Laud resumed his story, "Now I'll tell you about when Abraham's wife had a child. Abraham moved to the land of Canaan, the place God had told him to move. After he had lived there twenty years and was getting very old he still did not have a son. Then the creator spoke to him again and promised him that he would have a child the following year.

"The following year, when Abraham was a hundred years old, he did have a son just as God had promised. He named his son, Isaac. I'll read the story to you, from chapter 21:1-3:"

*1* Now God was gracious to Sarah as he had said, and he did for Sarah what he had promised. *2* Sarah became pregnant and bore a son to Abraham in his old age, at the very time

ເວລາທີ່ພະເຈົ້າບອກລາວໄວ້ນັ້ນ
3 ອັບລາຮາມກໍໃສ່ຊື່ລູກຊາຍວ່າ ອີຊາກ.

ແລ້ວລອດກໍເວົ້າວ່າ, "ເບິ່ງດູ ພະເຈົ້າໄດ້ແຕ່ງທຸກອັນທຸກແນວໃນໂລກນີ້ ຍ້ອນລິດອຳນາດຂອງເພິ່ນ ເພິ່ນເຮັດຫຍັງກໍໄດ້ ແມ່ນນາງຊາລາຊິເຖົ້າປານໃດກໍຢ່າເພິ່ນຊິໃຫ້ມີລູກກໍບໍ່ຍາກ."

ແລ້ວສີກໍຖາມວ່າ, "ອີຊາກນີ້ບໍທີ່ພະເຈົ້າເວົ້າວ່າ ຈະຊະນະພະຍາມານ?"

ແລ້ວລອດກໍເວົ້າວ່າ, "ບໍ່ແມ່ນ ອັບລາຮາມຫາກໍໄດ້ລູກຜູ້ດຽວທໍ່ນີ້ ເຂົາຕ້ອງໄດ້ລູກໄດ້ຫລານຫລາຍໆເປັນປະເທດໃຫຍ່ເມືອງໃຫຍ່ສາກ່ອນ ຜູ້ນັ້ນຈຶ່ງຈະລົງມາເກີດ ພໍອັບລາຮາມໄດ້ລູກແລ້ວ ເຂົາກໍຢູ່ແຖວການາອານບ່ອນພະເຈົ້າບອກ ຢູ່ດິນສິມຄວນຈົນວ່າອີຊາກໃຫຍ່ເປັນບ່າວ.

God had promised him.
3 Abraham gave the name Isaac to the son Sarah bore him.

"See," said Laud, "God, who made everything in the world by his own great power, is able to do anything. It didn't matter how old Sarah was. It was no problem for him to make her able to have a child."

"Is this Isaac the one that God said would defeat the devil?" asked Sii.

"No," answered Laud. "At the time we're reading about, Abraham only had this one son. It wouldn't be until much later, after Abraham's descendants had become a large nation, that the promised one would come down and be born. After Isaac was born, Abraham kept living in Canaan, where God had told him to live. Meanwhile Isaac was growing up into a young man.

ແລ້ວມີມື້ນຶ່ງພະເຈົ້າບອກອັບລາຮາມໃຫ້ເຮັດແນວຍາກສົມຄວນ ເພິ່ນບໍ່ເຄີຍບອກໃຜເຮັດດັ່ງນີ້ມາກ່ອນ ເບິ່ງບົດທີ 22 ເດີ ເອົ້າສ່ຽວສີ ໂຕອ່ານ."

ແລ້ວສີກໍອ່ານຂໍ້ 1 ຮອດ 3 ວ່າ,

## *ພະເຈົ້າລອງໃຈອັບລາຮາມ*

*1* ຫລັງຈາກນັ້ນຕໍ່ມາ ພະເຈົ້າກໍ
ໄດ້ລອງໃຈອັບລາຮາມເບິ່ງ ເພິ່ນ
ກໍເອີ້ນວ່າ, "ອັບລາຮາມເອີຍ."

ລາວກໍຕອບວ່າ, "ເຮີຍ."

*2* ພະເຈົ້າກໍບອກວ່າ, "ພາ
ອີຊາກລູກຮັກລູກແພງຂອງເຈົ້າ
ໄປພູເຂົາໜ່ວຍນຶ່ງທີ່ເຮົາຈະບອກ
ໃຫ້ເຈົ້າຮູ້ ຢູ່ໃນເຂດດິນແດນ
ໂມລິຢາ ໃຫ້ເຈົ້າຂ້າລູກເຜົາ
ຖະຫວາຍເປັນເຄື່ອງບູຊາຢູ່ນັ້ນ
ເດີ."

"One day God commanded Abraham to do something very hard, something he'd never asked anyone else to do. Look at chapter 22. Sii, would you read verses 1-3?"

Sii began to read:

## *God Tests Abraham*

*1* Some time later God
tested Abraham. He said
to him, "Abraham!"

"Here I am," he
replied.

*2* Then God said, "Take
your son, your only son,
Isaac, whom you love,
and go to the region of
Moriah. Sacrifice him
there as a burnt offering
on one of the mountains I
will tell you about."

3 ອັບລາຮາມກໍໄດ້ຕື່ນແຕ່ເຊົ້າ ເອົາ
ອານມາຜູກໃສ່ຫລັງລາ ແລ້ວກໍໄດ້ພາ
ຊາຍໜຸ່ມຄົນໃຊ້ສອງຄົນພ້ອມກັບ
ອີຊາກລູກຊາຍລາວ ອອກໄປຕັດຟືນ
ໄວ້ເພື່ອຊິໄປເຜົາບູຊາ ແລ້ວກໍໄດ້
ເດີນທາງອອກໄປດິນແດນໂມລິຢາບ່ອນ
ທີ່ພະເຈົ້າໄດ້ບອກໄວ້ນັ້ນ

3 Early the next morning Abraham got up and saddled his donkey. He took with him two of his servants and his son Isaac. When he had cut enough wood for the burnt offering, he set out for the place God had told him about.

ພໍສີອ່ານແລ້ວ ພໍ່ມັນກໍເວົ້າວ່າ, "ໂອ້! ອັບລາຮາມກໍເຊື່ອເພິ່ນຂະໜາດເນາະ ລາວຈຶ່ງກ້າເຮັດແນວນັ້ນ."

After Sii read, his father spoke up, "Wow! Abraham sure had a lot of faith in God to do that!"

ແລ້ວລອດກໍເວົ້າວ່າ, "ເພິ່ນບອກລາວໃຫ້ໄປ ລາວກໍເກັບເຄື່ອງຂອງໄປໂລດ ເບິ່ງເດ໊ ເຮົາຊິອ່ານຕໍ່ ຂໍ້ 4 ເຖິງ 6." ແລ້ວມັນກໍອ່ານວ່າ,

"That's right," said Laud. "Notice how he got ready to go right away after God spoke to him. I'll read on from verse 4 to 6:"

4 ພໍເດີນທາງໄປຮອດມື້ທີສາມ
ອັບລາຮາມກໍໄດ້ຫລຽວເຫັນບ່ອນທີ່
ພະເຈົ້າບອກໄວ້ຢູ່ທາງໜ້າພຸ້ນ 5
ອັບລາຮາມກໍເລີຍບອກຊາຍໜຸ່ມຄົນໃຊ້
ສອງຄົນນັ້ນວ່າ, "ໃຫ້ພວກເຈົ້າເຝົ້າລາ
ຢູ່ນີ້ເດີ ຈົນກວ່າເຮົາກັບມາ ເຮົາກັບ
ລູກຈະພາກັນຂຶ້ນໄປບູຊາພະເຈົ້າຢູ່ເທິງ
ພຸ້ນ ແລ້ວກໍຈະກັບລົງມາດອກ."

4 On the third day
Abraham looked up
and saw the place in
the distance. 5 He
said to his servants,
"Stay here with the donkey while I and the boy go over there. We will worship and then we will come back to you."

6 ແລ້ວອັບລາຮາມກໍເອົາມັດຟືນ
ໃຫ້ອີຊາກແບກ ລາວກໍຖືເອົາໄຟ
ກັບມີດ ແລ້ວສອງພໍ່ລູກກໍພາກັນ
ຂຶ້ນໄປ.

6 Abraham took the wood for the burnt offering and placed it on his son Isaac, and he himself carried the fire and the knife. As the two of them went on together . . .

ພໍອ່ານແລ້ວລອດກໍເວົ້າວ່າ, "ອັບລາຮາມບອກຄົນໃຊ້ຂອງລາວວ່າແນວໃດ? ລາວບອກວ່າໃຫ້ພວກເຈົ້າຢູ່ນີ້ເດີ ເຮົາກັບລູກຈະໄປຖະຫວາຍບູຊາພະເຈົ້າ ແລ້ວຈຶ່ງຈະກັບຄືນມາຫາພວກເຈົ້າ ລາວກໍເຊື່ອວ່າຈະໄດ້ລູກລົງມານຳ. ແລ້ວລາວກໍພາລູກໄປ."

Then Laud said, "Notice what Abraham said to his servants: 'You wait here. I'm going with my son to offer a sacrifice to God, then we'll come back to you.' He believed that his son would come back down with him. So off Abraham went with his son."

ແລ້ວສີກໍຖາມລອດວ່າ, "ອີຊາກລູກຂອງອັບລາຮາມນັ້ນເດ່ ມັນຄິດແນວໃດ ມັນເວົ້າວ່າແນວໃດ ມັນບໍ່ຢ້ານຕາຍບໍ່?"

Sii asked Laud, "What about Isaac, his son? What did he think? What did he say? Wasn't he afraid to die?"

ແລ້ວລອດກໍເວົ້າວ່າ, "ອ່ານຕໍ່ຂໍ້ 7 ຮອດ 8."

"Read verses 7 and 8," Laud said in reply.

ແລ້ວສີກໍອ່ານວ່າ,

So Sii read on:

7 ອີຊາກກໍໄດ້ຖາມພໍ່ວ່າ, "ພໍ່
ເອີຍ."

7 Isaac spoke up and said to his father Abraham, "Father?"

ອັບລາຮາມກໍຕອບລູກວ່າ, "ແມ່ນຫຍັງລະລູກ."

"Yes, my son?" Abraham replied.



ອີຊາກກໍເວົ້າຕໍ່ໄປວ່າ, "ໄຟກັບ
ຟືນເຮົາກໍມີແລ້ວ ແຕ່ວ່າລູກແກະ
ທີ່ຈະເອົາມາເຜົາບູຊານັ້ນຢູ່ໃສ
ພໍ່?"

*8* ອັບລາຮາມກໍເວົ້າວ່າ, "ລູກ
ເອີຍ ພະເຈົ້າຈະຈັດຫາໄວ້ໃຫ້ຢູ່
ດອກ ແນວເຜົາບູຊາເພີ່ນນັ້ນ."
ແລ້ວສອງພໍ່ລູກກໍຍ່າງຕໍ່ໄປນຳກັນ.

"The fire and wood are here," Isaac said, "but where is the lamb for the burnt offering?"

*8* Abraham answered, "God himself will provide the lamb for the burnt offering, my son." And the two of them went on together.

ແລ້ວລອດກໍເວົ້າວ່າ, "ອິຊາກກໍຍັງບໍ່ທັນ
ຮູ້ວ່າພະເຈົ້າໃຫ້ພໍ່ຂ້າຕົນເອງຖະຫວາຍ
ເພິ່ນ ອິຊາກບໍ່ຮູ້ໂຕວ່າຕົນເອງຊິຕາຍໃນມື້
ນັ້ນ ທາງຜູ້ເປັນພໍ່ກໍເຊື່ອຟັງພະເຈົ້າຢູ່
ອັບລາຮາມບໍ່ຮູ້ວ່າເປັນຫຍັງເພິ່ນຈຶ່ງໃຫ້
ລາວເຮັດດັ່ງນັ້ນ ເປັນແນວໃດກໍຢ່າລາວກໍ
ຍັງບໍ່ເຊົາ ເມື່ອລູກຖາມເຖິງລູກແກະທີ່ຈະ
ຂ້າຖະຫວາຍນັ້ນ ລາວກໍຕອບວ່າ
ພະເຈົ້າຈະຈັດຕຽມໄວ້ໃຫ້ ເພິ່ນຫາກ
ທານໃຫ້ດອກລູກແກະນັ້ນ."

ແລ້ວສີກໍເວົ້າວ່າ, "ຖ້າອັບລາຮາມກ້າ
ເຮັດດັ່ງນັ້ນກໍແມ່ນຄືຄວາມໂຕເວົ້ານັ້ນ
ລາວບໍ່ລືມວ່າໂຕລາວກັບເມຍກໍເຖົ້າ
ຫລາຍແລ້ວຕອນໄດ້ອິຊາກນັ້ນ ພະເຈົ້າ
ກໍຍັງໃຫ້ມີລູກໄດ້ ແລ້ວເມື່ອພະເຈົ້າບອກ
ໃຫ້ຂ້າອິຊາກຖະຫວາຍເພິ່ນ ລາວຈຶ່ງກ້າ
ເຮັດເນາະ."

ແລ້ວລອດກໍເວົ້າວ່າ, "ຟັງເດີ ຂ້ອຍຊິ
ອ່ານຕໍ່ ຂໍ້ 9 ຮອດ 12." ແລ້ວມັນກໍ
ອ່ານວ່າ,

Then Laud said, "Isaac didn't know yet that God had told his father to sacrifice him. He didn't know that he was going to die that very day. Meanwhile his father just went ahead with what God had told him to do, even though he didn't know why God had told him to do it. When his son asked where the lamb for the sacrifice was, he just said that God had one prepared for them, that God would provide them a lamb."

Sii said, "The fact that Abraham had the courage to do this proves that what you said is right. He hadn't forgotten that even though he and his wife were very old, God had still been able to give them a child. And that's why, when God told him to kill Isaac as an offering, he had the courage to do it, right?"

"Listen," said Laud, "as I read on in verses 9-12:"

9 ພໍມາຮອດບ່ອນພະເຈົ້າໄດ້
ບອກລາວໄວ້ນັ້ນ ອັບລາຮາມກໍ
ເລີຍເຮັດແທ່ນບູຊາຂຶ້ນ ແລ້ວກໍ
ເອົາຟືນນັ້ນມາຮຽງໄວ້ເທິງແທ່ນ
ແລ້ວກໍມັດອີຊາກລູກຊາຍລາວຂຶ້ນ
ວາງໄວ້ຢູ່ທາງເທິງ 10 ແລ້ວກໍຈັບ
ເອົາມີດຂຶ້ນມາຈະຂ້າລູກຊາຍ
ຕົນເອງ. 11 ພໍດີພະເຈົ້າກໍຮ້ອງ
ລົງມາຈາກຟ້າສະຫວັນວ່າ,
"ອັບລາຮາມ ອັບລາຮາມ!"

ອັບລາຮາມກໍຕອບວ່າ, "ໂດຍ
ຂ້ານ້ອຍ."

12 ພະເຈົ້າກໍເວົ້າວ່າ, "ຢ່າສູ່ຂ້າ
ລູກເຈົ້າເດີ ເຮົາຮູ້ແລ້ວວ່າເຈົ້າ
ນັບຖືເຮົາແທ້ ຍ້ອນວ່າເຈົ້າຍອມ
ເສຍລູກຊາຍຄົນດຽວຂອງເຈົ້າໃຫ້
ເຮົາ."

9 When they reached
the place God had told
him about, Abraham
built an altar there and
arranged the wood on it.
He bound his son Isaac
and laid him on the altar,
on top of the wood. 10
Then he reached out his
hand and took the knife
to slay his son. 11 But
the angel of God called
out to him from heaven,
"Abraham! Abraham!"

"Here I am," he
replied.

12 "Do not lay a hand on
the boy," he said. "Do not
do anything to him. Now I
know that you fear

ລອດກໍເວົ້າວ່າ, "ເລື່ອງນີ້ບໍ່ສຸດທີ່ນີ້ໄດ໋
ໃຫ້ອ່ານຕໍ່ ຂໍ້ 13 ຮອດ 19 ເດີ ວ່າ
ເລື່ອງມັນຊິເປັນໄປແນວໃດ."

ແລ້ວສີກໍອ່ານຕໍ່ໄປວ່າ.

13 ແລ້ວອັບລາຮາມຫລຽວຫລັງ
ໄປກໍເຫັນແກະຜູ້ໂຕນຶ່ງ ເຂົາມັນ
ຂັດຄາຢູ່ກັບພຸ່ມໄມ້ ລາວກໍເລີຍ
ໄປຈັບເອົາມາຂ້າເຜົາບູຊາແທນ
ລູກຊາຍລາວ. 14 ດັ່ງນັ້ນລະ
ອັບລາຮາມຈຶ່ງໄດ້ເອີ້ນບ່ອນນັ້ນ
ວ່າ, "ຜູ້ເປັນຢູ່ຈະຈັດຫາໄວ້ໃຫ້."
ຄົນທຸກມື້ນີ້ກໍຍັງເວົ້າກັນຢູ່ວ່າ,
"ເພິ່ນຜູ້ເປັນຢູ່ຈະຈັດຫາໄວ້ໃຫ້
ເທິງພູເຂົາຂອງເພິ່ນ."

15 ພະເຈົ້າໄດ້ເອີ້ນອັບລາຮາມ
ຈາກຟ້າສະຫວັນອີກວ່າ, 16
"ຍ້ອນເຈົ້າບໍ່ໄດ້ຫວງລູກຊາຍໄວ້
ແຕ່ໄດ້ມີໃຈມອບໃຫ້ເຮົາ ເຮົາຈຶ່ງ
ໄດ້ສາບານໄວ້ໃນຊື່ຂອງເຮົາເອງ
ວ່າ 17 ເຮົາຈະອວຍພອນໃຫ້ເຈົ້າ
ຢ່າງມະຫາສານ ເຮົາຈະໃຫ້
ເຊື້ອສາຍຂອງເຈົ້າມີລູກມີ

"But the story doesn't end here," Laud went on. "Read verses 13-19 to see how it turned out."

Sii read this time:

13 Abraham looked up
and there in a thicket he
saw a ram caught by its
horns. He went over and
took the ram and
sacrificed it as a burnt
offering instead of his
son. 14 So Abraham
called that place The
Eternal One Will Provide.
And to this day it is said,
"On the mountain of the
Eternal One it will be
provided."

15 The angel of God
called to Abraham from
heaven a second time 16
and said, "I swear by
myself, declares the
Eternal One, that because
you have done this and
have not withheld your
son, your only son, 17 I
will surely bless you and
make your descendants as

ຫລາຍຫລາຍໆ ສຶບຕໍ່ກັນໄປຈົນ
ນັບບໍ່ໄດ້ ພໍປານດາວຢູ່ເທິງຟ້າ
ຫລືເມັດຊາຍຢູ່ຣິມທະເລ, ແລ້ວ
ເຊື້ອສາຍຂອງເຈົ້ານີ້ຈະເອົາ
ຊະນະສັດຕູໄດ້ໝົດ, 18 ແລ້ວ
ຄົນໝົດທຸກຊາດຈະເປັນສຸກໄດ້
ຮັບພອນທາງເຊື້ອສາຍຂອງເຈົ້າ
ຍ້ອນວ່າເຈົ້າໄດ້ຟັງຄຳຂອງເຮົາ."

numerous as the stars in
the sky and as the sand on
the seashore. Your
descendants will take
possession of the cities of
their enemies, 18 and
through your offspring all
nations on earth will be
blessed, because you have
obeyed me."

19 ແລ້ວອັບລາຮາມກັບລູກກໍ
ໄດ້ກັບລົງມາຫາຊາຍໜຸ່ມຄົນໃຊ້
ນັ້ນ ແລ້ວກໍພາກັນກັບຄືນເມືອ
ບ້ານຢູ່ເບເອັນເຊບານັ້ນ ແລ້ວກໍ
ຢູ່ທີ່ນັ້ນຕໍ່ໄປ.

19 Then Abraham
returned to his servants,
and they set off together
for Beersheba. And
Abraham stayed in
Beersheba.

ອ່ານແລ້ວລຸງທາກໍຖາມລອດວ່າ, "ເຮົາໄດ້ຍິນໂຕວ່າ ຜູ້ເປັນຢູ່ ແມ່ນໃຜເປັນຜູ້ເປັນຢູ່ ໂຕຮູ້ຈັກບໍ່?"

After Sii finished reading, Uncle Thaa asked Laud, "Who's 'The Eternal One' that the book talked about in this passage? Do you know?"

ລອດກໍຕອບວ່າ, "ຜູ້ເປັນຢູ່ນັ້ນກໍຄືຜູ້ບໍ່ມີມື້ເກີດມື້ຕາຍ ເປັນຢູ່ຕະຫລອດ ເພິ່ນເຄີຍບອກວ່າ ຜູ້ເປັນຢູ່ນີ້ລະເປັນຊື່ຂອງເພິ່ນ ກໍຜູ້ດຽວກັນນັ້ນລະກັບພະເຈົ້າ ແຕ່ວ່າມີຫລາຍຊື່."

Laud answered, " 'The Eternal One' means the one who was never born and will never die, who's alive forever. God said that his name is 'The Eternal One.' It's one and the same person as God, just another name."

ແລ້ວລອດກໍເວົ້າວ່າ, “ອັນນີ້ເຮົາກໍເຫັນແລ້ວວ່າເລື່ອງນີ້ກໍສຳຄັນຫລາຍ ຕັ້ງແຕ່ທຳອິດພຸ້ນພະເຈົ້າກໍໄດ້ບອກພໍ່ແມ່ເດີມຂອງເຮົາວ່າ ຊິມີຜູ້ນຶ່ງລົງມາເກີດທາງເຊື້ອສາຍແມ່ຍິງ ຜູ້ນັ້ນຊິເຮັດໃຫ້ຫົວງູແຕກ ຊິຊະນະມານ ແລ້ວພະເຈົ້າກໍໄດ້ບອກພໍ່ແມ່ເດີມແຕ່ກີ້ວ່າ ຖ້າເຮັດບາບກໍຕ້ອງຕາຍ ແຕ່ເພິ່ນໃຫ້ຂ້າສັດຖະຫວາຍເພິ່ນແທນຕົນເອງ ອັນນີ້ກໍເຮັດໃຫ້ເຂົາຮູ້ຈັກວ່າ ຖ້າເຮັດບາບກໍຕ້ອງຕາຍ ອາເບັນກໍຂ້າສັດຖະຫວາຍຄືດັ່ງພະເຈົ້າບອກ ໂນອາຂ້າສັດຖະຫວາຍໃຫ້ເພິ່ນຄືກັນ ເຂົາເຮັດດັ່ງນັ້ນຍ້ອນເຂົາເຊື່ອຟັງຄຳຂອງເພິ່ນ ເຂົາກໍເຊື່ອວ່າແນວຖະຫວາຍໃຫ້ເພິ່ນນັ້ນຕ້ອງເປັນແນວທີ່ມີລົມຫັນໃຈ ມີເລືອດ ແຕ່ສັດຊິຮັບຜິດແທນຄົນບໍ່ໄດ້ດອກ ພະເຈົ້າໃຫ້ເຂົາເຮັດແນວນີ້ ກໍຍ້ອນວ່າເພິ່ນຊິໃຫ້ຜູ້ນັ້ນລົງມາເກີດທາງເຊື້ອສາຍແມ່ຍິງ ຕາຍແທນຄົນໝົດໂລກ ແລະແກະໂຕຕິດຢູ່ກັບພຸ່ມໄມ້ນັ້ນໂຕອັບລາຮາມຂ້າແທນລູກລາວນັ້ນກໍໝາຍເຖິງຜູ້ນັ້ນ.”

Then Laud continued, “Here we see something really important. Back in the beginning God told our ancestors that a descendant of the woman would be born who would crush the snake's head, that is, defeat the devil. God also told people that if they sin they would die, but that they were to sacrifice animals instead of having to die themselves. This was to remind them that if they sinned they must die. Abel sacrificed animals to God as God had commanded and so did Noah. They did it in obedience to God's word. They believed that what they offered to him must be living; something that breathed and had blood. But animals couldn't actually die in place of people to pay for their sin. God had them offer animal sacrifices like this because he was going to have the one who would be the descendant of woman die in place of all people in the world. And the sheep that was caught in the bush that Abraham killed in place of his son, is a picture of this one who was going to come.”

ແລ້ວລຸງທາກໍເວົ້າກັບລອດວ່າ, "ໂຕ ລຳເລື່ອງນີ້ໃຫ້ເຮົາຟັງໄດ້ບໍ່?"

ລອດກໍເວົ້າວ່າ, "ໄດ້!" ແລ້ວລອດກໍ ລຳຂຶ້ນວ່າ,

"Say, Laud, can you tell this story in song for us?" asked Uncle Thaa.

"Sure," said Laud. He stood up and began to sing:

*(Sorry, there is no English translation of this Lao ballad, which retells the account of Cain and Abel, Noah and the Deluge, and God's test of Abraham's faith. Laud sings the story in a traditional poetic and musical form loved by Lao audiences.)*



"ຟັງເດີເຈົ້າທຸກເລົ່າມາຊົມ
ບ້ານຢູ່ຂອກແຄມປ່າແຄມດອນ
ຂໍບອກເປັນຂໍ້ໆ ໄປເປັນແບບໆ
ພະເຈົ້າຜູ້ປະທານຄໍ້າຈຸນໜູນສິ່ງ
ແປອອກເປັນຄຳສອນ
ແບບທີ່ນຶ່ງເດີທ່ານ
ເບິ່ງຄຳພີກໍເຫັນປະຖົມມະການບົດສີ່

ຕົວຂອງຂ້ອຍເປັນຄົນບ້ານນອກ
ຂ້ອຍຊິມາວ່າກອນໃຫ້ຟັງເດີພີ່
ເອົາບຸກຄົນມາແນບປຽບອ້າງເປັນຫລັກຖານ
ພະຄຳພີຊີ້ບີ່ງບອກໄວ້ຫລາຍຕອນ
ພວກເຮົາໄດ້ອ່ານ
ຄືແບບອາເບັນ
ເປັນເລື່ອງນ້ອງກັບພີ່

ຖະຫວາຍເຄື່ອງບູຊາ ການອິນມີໜ້າທີ່ທຳນາ
ຄືເຮົາເຈົ້າຂ້ອຍ ນຳໝາກຜົນເລັກນ້ອຍ
ຈາກໄຮ່ຈາກນາ
ຖະຫວາຍພະເຈົ້ານຳກັນກັບນ້ອງ ພະເຈົ້າບໍ່ກ່ຽວຂ້ອງກັບເຄື່ອງບູຊາ
ຜິດຄວາມປາດຖະໜາພະອົງຫລາຍໂພດ ເຮັດໃຫ້ການອິນໂກດຄຽດຊັງພະເຈົ້າ
ອາເບັນກໍເລີຍເຂົ້າ ຖະຫວາຍເຄື່ອງບູຊາ
ເອົາແກະຫົວປີມາ ຂາບລົງຕົງແທ່ນ
ເຄື່ອງຖະຫວາຍນີ້ແມ່ນ ຖືກກັບນ້ຳພະໄທ
ພະເຈົ້າຮັບເອົາໄປ ອວຍພອນຫລາຍຢ່າງ
ເຄື່ອງບູຊານີ້ຕ່າງ ກັບຂອງການອິນ
ປາດສະຈາກມິນທິນ ທັງມີຊີວິດ
ເລັງເຖິງພະຜູ້ນັ້ນ ທີ່ຊີໄຖ່ກຳໜີ
ເພາະເຫດນີ້ລະຕີ້ ພະພອນມັນຕ່າງ
ເສັດທຳການກ່ຽວຂ້ອງ ກັນຢູ່ທີ່ງນາ
ການອິນເລີຍອິດສາ ຫຸນຫັນທັນດ່ວນ
ລຸກຂຶ້ນຂ້ານ້ອງອ່ອນ ຕາຍຈາກພາກໜີ
ເລືອດຢູ່ດິນນັ້ນຕີ້ ຂຶ້ນຟ້ອງພະເຈົ້າ
ພະສະເດັດມາເວົ້າ ຖາມດູຕົ້ນເຫດ
ອ້າຍການອິນໃຈເຜດ ເຈົ້າຊົ່ວຊາຕານ
ເຈົ້ານີ້ເປັນຄົນພານ ຊາຕານເປັນພໍ່
ອາເບັນນ້ອຍໜໍ່ ເຈົ້າຢູ່ທີ່ໃດ
ການອິນເລີຍຕອບໄປ ວ່າຂ້ອຍບໍ່ຊາບ
ພະເຈົ້າເລີຍສາບແຊ່ງ ຕໍ່ເຈົ້າການອິນ

ເລືອດນ້ອງຕົກເຖິງດິນ ຟຸ້ງມາເຖິງແທ່ນ
ສ່ວນອາເບັນແກ້ວແກ່ນ ຕາຍແລ້ວຈິງໆ
ບາດນີ້ເຈົ້າກາອິນ ເລີຍຖືກສາບແຊ່ງ
ເຮັດແມ່ນຫຍັງກໍຊ່າງ ບໍ່ຄ່ອຍໄດ້ຜົນ
ຍ້ອນເຂົາເປັນຄົນ ຖືກເນລະເທດ
ຫລົບຫລີກຢູ່ໃນເຂດ ພື້ນໂລກຂອງເຮົາ
ເພາະວ່າພະເຈົ້າ ຂັບໜີຕີສິ່ງ
ນີ້ລະແບບທີ່ນຶ່ງ ຄືແບບອາເບັນ
ຊີ້ໃຫ້ພວກເຮົາເຫັນ ພໍເປັນສັງເຂບ
ອາເບັນຕາຍເພາະເຫດ ຢູ່ຝ່າຍຄວາມຈິງ
ຍາດພີ່ນ້ອງຊາຍຍິງ ຟັງເອົາໃຫ້ແນ່
ແບບທີ່ສອງເດີແມ່ ຄືແບບໂນອາ
ເບິ່ງຄຳພີກໍເຫັນ ປະຖົມມະການໄຂກ່າວ
ບົດທີ່ແຈ້ງຂ່າວ ຂໍ້ໃຫຍ່ໃຈຄວາມ
ບົດທີ່ເຈັດບອກຮວມ ຈົນເຖິງບົດເກົ້າ
ປະຖົມມະການເຫລັ້ມເກົ່າ ເປີດເບິ່ງເດືອາວ
ຕອນນີ້ລະເຖິງຄາວ ຕາມປະວັດສາດ
ກ່າວເຖິງອົງພະບາດ ຜູ້ເປັນພະເຈົ້າ
ຂີ່ຜານໂລກຂອງເຮົາ ໂດຍທາງລິດເດດ
ທຳໃຫ້ນ້ຳຖ້ວມໂລກ ຮ້ອຍຫ້າສິບວັນ
ເພາະມະນຸດພາກັນ ທຳຄວາມຜິດບາບ
ອົງພະເຈົ້າສາບແຊ່ງ ບໍ່ໃຫ້ເຂົາເຫລືອ
ຕາຍໝົດຈຸ້ມໝົດເຄືອ ບໍ່ມີໃຜລອດ

ແຕ່ພະອົງຊົງຖອດ ເລືອກໄວ້ເປັນພັນ
ຮວມກັນມີແປດຄົນ ຄືວດຽວລ້ວນໆ
ໂນອາເຊົາພັກຜ່ອນ ເຂົ້າຢູ່ໃນເຮືອ
ສຽງພະເຈົ້າ ຮຽກເຂົາຕັດສັ່ງ
ຂໍໃຫ້ຕາມຄຳສັ່ງ ຈຳໄວ້ໃຫ້ດີ
ເຖົ້າໂນອາກໍຕຽມທັນທີ ຈົດຈຳຄຳບອກ
ພະເຈົ້າເພິ່ນບອກ ໃຫ້ສ້າງນາວາ
ໃຫ້ຍາວເຈັດສິບຫ້າວາ ບໍ່ເຫລືອບໍ່ເສດ
ທາງກວ້າງເອົາສິບສອງວາເສດ ສອງສອກພໍດີ
ສ່ວນທາງສູງນັ້ນຕື້ ເຈັດວາສອງສອກ
ໂນອາຕາມພະບອກ ທຸກສິ່ງທຸກອັນ
ຕຽມພ້ອມຢ່າງສັບພັນ ບໍ່ຂືນຈັກທ່າ
ຕື່ນເຊົ້າມາແລ້ວວ່າ ບອກລູກບອກເມຍ
ຕຽມຕົວໄປຕໍ່ເຮືອ ເອົາຕົວເຮົາລອດ
ພະເພິ່ນຊິລ້າງໂລກ ໃຫ້ນ້ຳຖ້ວມຕາຍ
ມາໄປເດີລູກຊາຍ ທຸກຄົນຂອງພໍ່
ລູກສະໃພ້ນ້ອຍໜໍ່ ທັງແມ່ສູເອີຍ
ຮີບມາໄປເທາະເຫວີຍ ໄວໆ ຢ່າຊ້າ
ພ້ອມກັນໝົດທຸກທ່າ ພ້ອມພິບຕິບມື
ຟ້າວບໍ່ມີທາງຄື ຕາມຄວາມພະສັ່ງ
ແລ້ວຈຶ່ງພາກັນຍ່າງ ຂຶ້ນສູ່ພູເຂົາ
ຈຶ່ງພາກັນພັກເຊົາ ມີແຮງເລັກນ້ອຍ
ມີແຮງແລ້ວຈຶ່ງຄ່ອຍ ເດີນຕໍ່ກັນໄປ

ມີແຮງແລ້ວຈຶ່ງຄ່ອຍ ເດີນຕໍ່ກັນໄປ
ພໍໄປເຖິງເຂດໄພ ໄມ້ໃຫຍ່ມີມາກ
ພາກັນປ້ຳກັນຖາກ ສ້າງຕໍ່ນາວາ
ສ້າງຈົນເສຍເວລາ ຫລາຍປີຂ້າມລ່ວງ
ຕັ້ງທັບຢູ່ໃນຊ່ວງ ສ້າງຕໍ່ນາວາ
ໃນຂະນະບາງເວລາ ສ້າງເຮືອຢູ່ນັ້ນ
ໂນອາເດີນດຸ່ມດັ້ນ ປ່າວຫາເດີນໄປ
ທ່ຽວໄປຫາບອກຄົນ ໃຫ້ກັບໃຈສາໃໝ່
ໃຫ້ມາສ້າງເຮືອໃຫຍ່ ບໍ່ເຊື່ອຈັກຄົນ
ມີແຕ່ຄົນໃຈແຂງທຳບາບ ໂນອາບອກໃຫ້ຊາບ
ບໍ່ເຊື່ອເສຍເລີຍ ເຂົາພາກັນເສີຍເມີຍ
ປານເປັດເຫັນລູກ ເຂົາພາກັນດູຖູກ
ດູໝິ່ນນິນທາ ເຂົາວ່າບັກໂນອາ
ເສຍຈິດຜິດພາດ ເຂົາວ່າໂນອາຂາດບ້າໆ ບໍໆ
ເປັນບ້າຫລາຍແທ້ນໍ ໂນອາໜ້າໂງ່
ເຖົ້າຫລັງຄິດໂກ່ໂຈ່ ເຊື່ອແດດເຊື່ອລົມ
ອອກຈົນວ່າໝົດລົມ ຈົນເຂົາຊິວ່າ
ຮອດບໍ່ມີໃຜເຊື່ອ ນຳເຖົ້າໂນອາ
ຈົນກວ່າໝົດເວລາ ຄວາມຕາຍມາຮອດ
ສຳເລັດຈົນຕະຫລອດ ທຸກສິ່ງທຸກອັນ
ສຳເລັດແລ້ວພ້ອມກັນ ຕາມຄຳພະເຈົ້າ
ພາກັນຕຽມກັນເຂົ້າ ພັກຢູ່ນາວາ
ພ້ອມທັງຝູງສັດສາ ຕາມຄຳພະສັ່ງ

ຄອຍເຈັດວັນຝົນຫລັ່ງ ຕົກທົ່ວໂລກາ
ພໍເມື່ອຝົນຕົກມາ ຝູງຄົນແຕກຕື່ນ
ເວົ້າກັນດັ່ງວື່ນໆ ຄືຊິແມ່ນຄວາມຈິງ
ຝົນແຮ່ງຕົກແຮ່ງລົນ ບໍ່ມີບ່ອນຢູ່
ແມ່ນອິຫລິເດີໝູ່ ຝົນໃຫຍ່ຫລັ່ງມາ
ພະເຈົ້າຊົງບັນຊາ ໃຫ້ດິນຫລຸຫລົ່ມ
ຟ້າຟາດເຫລື້ອມ ເໝືອນດັ່ງແສງໄຟ
ບໍ່ມີບ່ອນອາໄສ ເຮືອນຊານບ້ານຊ່ອງ
ນໍ້າຖ້ວມໝົດຄູ່ປ່ອງ ພູເຂົາເລົາກາ
ເຮືອຂອງເຖົ້າໂນອາ ລອຍໄປອ່ອງລ່ອງ
ບໍ່ເຫັນຫ້ວຍເຫັນຮ່ອງ ບ້ານປ່າຄາເມ
ຮອດບໍ່ມີໃຜເຫລືອ ຈັກຄົນເດີໝູ່
ບາງພວກມາເກາະຢູ່ ນໍາທ່ານໂນອາ
ມາຂໍຄວາມເມດຕາ ເປີດປະຕູໃຫ້ແດ່
ໂນອາເປີດບໍ່ໄດ້ ຍາກຊ່ອຍພໍແຮງ
ປະຕູນັ້ແຂງແຮງ ພະອົງປິດໄວ້
ເປີດຮັບທ່ານບໍ່ໄດ້ ເດີໝູ່ທັງຫລາຍ
ຄົນພວກນັ້ນເລີຍຕາຍ ຈົນໝົດຕະຫລອດ
ນໍ້າຖ້ວມໂລກໄປຮອດ ຮ້ອຍຫ້າສິບວັນ
ຈຶ່ງຄ່ອຍລົດຄ່ອຍລັ່ນ ລົດລົງມາອີກ
ນໍ້າລົດລົງເຖິງຂີດ ຄືເກົ່າຄືຫລັງ
ເຮືອຂອງທ່ານໂນອານັ້ນຍັງ ຄ້າງຢູ່ເຂົາອາລາລັດ
ພໍນໍ້ານັ້ນຂາດເຫີຍແຫ້ງພໍດີ ພະເຈົ້າຕັດທັນທີ

ຟ້າວພັນທັນດ່ວນ
ໃຫ້ຮີບມາທັນດ່ວນ
ຮີບອອກມາຈາກເຮືອ
ເຈົ້າທຳຕາມໃຈພໍ່
ໂນອາເລີຍທະຍານ
ທີ່ພູເຂົາອາລາລັດ
ສອນໃຫ້ພວກບຸດຕາ
ໂນອາສອນທຸກເລື່ອງ
ຢ່າສູ່ພາກັນໜີ
ຢ່າພາກັນດູຖູກ
ພາກັນຈົດຈຳເອົາ
ຢ່າພາກັນປະມາດ
ຖືພະເຈົ້ານີ້ເອງ
ພະເຈົ້າເປັນທີ່ເພິ່ງ
ພະເຈົ້າເລີຍສັນຍາ
ປົກຄອງແຜ່ນດິນໃໝ່
ພະມີເຄື່ອງສັນຍາ
ເຄື່ອງໝາຍນັ້ນຄືນ້ຳ
ການທາງໜ້າຍັງມີ
ໃຜຢາກຮູ້ເຊີນອ່ານ
ຊິຮູ້ເປັນຕອນໆ ບົດໆ ບາດໆ
ຄືແບບໂນອາ
ຈິງຈັ່ງແນ່ແນ່

ໂນອາເອີຍ
ທັງລູກທັງເມຍ
ຄືນດີລູກພໍ່
ບໍ່ຂືນຈັກອັນ
ອອກມາພ້ອມບາດ
ກອງແທ່ນບູຊາ
ບຸດຕີຮູ້ເລື່ອງ
ກຳຊັບດັບດີ
ຫລົງທາງເດີລູກ
ພະເຈົ້າຂອງເຮົາ
ດີໆ ຢ່າພາດ
ໃຫ້ເຄົາລົບຍຳເກງ
ໄວ້ເປັນທີ່ນຶ່ງ
ພິທັກຮັກສາ
ອວຍພອນຢ່າງໃຫຍ່
ສືບຕໍ່ກັນມາ
ຄືຮຸ້ງກິນນ້ຳ
ບໍ່ຖ້ວມອີກເທື່ອ
ຄືໄຟເດີທ່ານ
ໜັງສືວິວອນ(ພະນິມິດ)
ແບບທີ່ສອງນີ້ດອກ
ທຳຕາມຄຳສັນຍາ

ແບບທີສາມເດີແມ່ ແບບອັບລາຮາມ
ຄື ແບບຕິດຕາມ ບໍ່ຂືນຈັກທ່າ
ຮອດບໍ່ສົງໄສວ່າຊິໄປທາງໃດ ບອກໃຫ້ໄປກໍໄປ
ຕາມຄຳພະສັ່ງ ເລື່ອງນີ້ຢູ່ໃນຫວ່າງ
ບົດທີ່ສິບສອງ ເປັນຫລັກຖານຮັບຮອງ
ເຫດການເຫລົ່ານີ້ ແລະມີຫລາຍບົດຊີ້
ບອກກັນຕໍ່ໄປ ເລື່ອງນີ້ຮວມຢູ່ໃນ
ປະຖົມມະການເຫລັ້ມເກົ່າ ບົດທີ່ຊາວສອງ ກໍເລົ່າ
ເລື່ອງອັບລາຮາມ ຂຶ້ນໃໝ່ສອນລອນ
ສ່ວນວ່ານາມກອນຊື່ອິຊາກ ທ່ານກໍອຸປະຖາກ
ແພງດັ່ງດວງຕາ ອີງພະເຈົ້າເພິ່ນມາ
ລອງໃຈອີກຄັ້ງ ພະເຈົ້າຕັດສັ່ງ
ໃຫ້ເອົາລູກໄປເຜົາ ອັບລາຮາມກໍເອົາ
ຕາມຄຳພະສັ່ງ ຍອມເຮັດແມ່ນກະທັ່ງ
ຄູ່ກີຄູ່ກີ ອັບລາຮາມເຊື່ອດີ
ເປັນປະວັດສາດ ພະບອກຫຍັງກໍຟາດ
ບໍ່ລັ້ງບໍ່ລໍ ບໍ່ຕ້ອງຮ້ອງຕ້ອງຂໍ
ຊັດຊືນຈັກເທື່ອ ອັບລາຮາມກໍເຊື່ອ
ບໍ່ຕ້ອງສົງໄສ ເຖິງເວລາກໍໄປ
ຕຽມຕົວຮຽບຮ້ອຍ ທັງລູກນ້ອຍໆ
ແກ້ວແກ່ນບຸດຕີ ເລີຍພາກັນຈອດເຊົາ
ມີແຮງພັກຜ່ອນ ອັບລາຮາມກັບທັງລູກນ້ອຍອ່ອນ
ເດີນຕໍ່ກັນໄປ ພໍ່ກໍຖືເອົາໄຟ

24/VII ຫ້າມຈຳໜ່າຍ

ທັງມີດອີໂຕ້
ທີ່ທັບອາໄສ
ແບກຟືນຕາມພໍ່
ທຳແທ່ນບູຊາ
ອິຊາກສັງເກດ
ກໍເລີຍຖາມບິດາ
ວ່າພໍ່ເອີຍ
ທຸກແນວຄົບເຄື່ອງ
ເຮົານັ້ນຢູ່ໃສ
ວ່າພະຊີທາໃຫ້
ພະອົງບໍ່ຍາກແຄ້ນດອກ
ບໍລິບູນທຸກສິ່ງ
ຊິຍໍຂຶ້ນໃສ່ໄຟ
ຢ່າຂ້າລູກຂອງຕົນ
ທ່ຽງທຳຂອງເຈົ້າ
ແສນດີທຸກຢ່າງ
ການບ້ານຮຸ່ງເຮືອງ
ຄວາມເຊື່ອອັນຖາວອນ
ໃຫ້ຈື່ຈຳເອົາໄວ້
ອັບລາຮາມຊ້ຳຕໍ່
ຕົວຢູ່ໃຕ້ພຸ່ມໄມ້
ອັບລາຮາມ
ແກ້ປ່ອຍບຸດຕີ

ຄືນໃຊ້ນັ້ນຄອຍຢູ່
ອິຊາກກໍໄປ
ໄປຮອດແລ້ວເລີຍກໍ່
ອິຊາກບຸດຕາຖາມເບິ່ງຕົ້ນເຫດ
ວ່າຂາດເຄື່ອງບູຊາ
ຟ້າວພັນທັນດ່ວນ
ຟືນໄຟກໍມີແລ້ວ
ແກະບູຊາພະເຈົ້າ
ພໍ່ເລີຍຄິດຕອບໄປ
ສິ່ງຂອງຖະຫວາຍ
ພໍຮອດຍາມມັນແລ້ວ
ອັບລາຮາມກໍເລີຍຜູກລູກເຕົ້າ
ພະເຈົ້າເລີຍບອກໄວ້
ເຮົາໄດ້ເຫັນຄວາມດີ
ການກະທຳຂອງເຈົ້າ
ຊິຂໍໃຫ້ສຸກຊ້ຳສ້າງ
ອັນນີ້ລະເປັນເລື່ອງ
ລາດຊະດອນຊາວເຮົາ
ພໍຕໍ່ມາພະກໍເລີຍບອກໃຫ້
ຈົ່ງເອົາແກະ
ຖະຫວາຍໃຫ້ແກ່ພະອົງ
ກໍເລີຍກັບຕ່າວໂຕ້ງ
ນຳເອົາແກະມາແທນ

ໄຖ່ບຸດຕີເອົາໄວ້
ລາວໄຫໃຕ້ໂລກລຸ່ມ
ໃຫ້ເຫັນຫ້ອງແຫ່ງສະຫວັນ
ຂ້ອຍຂໍສະລຸບເລື່ອງ
ຕອນຖະຫວາຍບຸດຕາ
ແກະບູຊາແທນໄວ້
ເລັງເຖິງພະຖ່ອນໄທ້
ພະໂລຫິດແຈ່ມເຈົ້າ
ຕາຍຢູ່ແນວພູເຂົາ
ຂໍໂຈະໄວ້ໄທເຮົານ້ອງພີ່
ຄາວໜ້າຕໍ່ໄປ."

ພະຄຳພີສອນໃຫ້
ສອນໃຫ້ຊຸມພີ່ນ້ອງ

ໄວ້ສາກ່ອນຕອນຊິຈົບ
ເທດມີຫລາຍເລື່ອງ
ບຸດຕີເລີຍລອດ
ແທນໄວ້ໄຖ່ເຮົາ
ໄຫລອອກເປັນແຖວ
ພວກຢິວມັນຂ້າ
ຕອນໜ້າມີຈຶ່ງເວົ້າ

ລໍາຈົບແລ້ວບາງຄົນກໍເວົ້າວ່າ, "ໂອ້! ອັບລາຮາມນີ້ລາວເຊື່ອໝັ້ນແທ້ໆ ເພາະຍອມເສຍຣອດລູກຕົນເອງ."

ແລ້ວລອດກໍເວົ້າວ່າ, "ແມ່ນແທ້ໆ ລາວເຊື່ອຈິນສຸດຈິດສຸດໃຈ ຍ້ອນຄວາມເຊື່ອຂອງລາວ ພະຄຳພີກໍບອກໄວ້ວ່າ ພະເຈົ້າຈຶ່ງນັບວ່າອັບລາຮາມເປັນຄົນຊອບທຳ ຄວາມເຊື່ອຂອງລາວກໍເຮັດໃຫ້ລາວເປັນອັນນຶ່ງອັນດຽວກັນກັບພະເຈົ້າ ບາບກຳຂອງລາວພະເຈົ້າກໍເອົາຖິ້ມໝົດ ລາວຈຶ່ງຫວິດຈາກໂທດຈາກຄວາມບາບທຸກຢ່າງ."

When Laud finished singing, some of the people remarked, "Abraham sure had a lot of faith to even be willing to give up his son!"

"He sure did," said Laud. "He believed with all his heart, and because of his faith the Bible records that God considered Abraham to be a righteous person. By his faith he was made right with God. God did away with all his sin and so he was free from any punishment for his sins."

ພໍລອດເວົ້າແລ້ວ ລຸງທາກໍເວົ້າວ່າ, "ຢ່າຟ້າວຕໍ່ເລື່ອງເດີ ໃຫ້ຂ້ອຍຖາມສາກ່ອນ ອັບລາຮາມເປັນຄົນບາບຄືພວກເຮົາທຸກຄົນນີ້ແມ່ນບໍ່?"

ແລ້ວລອດກໍຕອບວ່າ, "ແມ່ນ ຍ້ອນວ່າເກີດນຳພໍ່ແມ່ທີ່ເຮັດບາບມາກ່ອນແລ້ວ."

ແລ້ວລຸງທາກໍເວົ້າວ່າ, "ເອົ້າ ຫວ່າງກີ້ໂຕຄືວ່າອັບລາຮາມຫວິດຈາກບາບຈາກກຳ ຍ້ອນເຊື່ອພະເຈົ້າຊື່ໆ ຂ້ອຍວ່າບໍ່ແມ່ນ ຍ້ອນວ່າແຕ່ໃດມາໃຜກໍວ່າເຮັດບຸນຫລາຍຈຶ່ງຄ່ອຍຫວິດ."

ແລ້ວລອດກໍເວົ້າວ່າ, "ລຸງທາ ແນວເຈົ້າເວົ້ານີ້ສຳຄັນຫລາຍ ຍ້ອນທຸກມື້ນີ້ມີແຕ່ຄົນຄຶດວ່າຜູ້ເຮັດບຸນຫລາຍຈຶ່ງຈະຫວິດຈາກໝໍ້ນາລົກໄດ້ ຮູ້ຈັກມາແຕ່ໃສວ່າຈະເຮັດຫລາຍຊ່ຳໃດຈຶ່ງຈະໄປໄດ້? ຮູ້ຈັກແນວໃດວ່າຜູ້ເປັນເຈົ້າຂອງສະຫວັນຕ້ອງການແບບນັ້ນ?

When Laud said this, Uncle Thaa spoke up, "Wait a second. Before you go on with the story, I have a question to ask you. Wasn't Abraham a sinner just the same as us?"

"Yes," replied Laud, "he was, because his parents had sinned."

"Then why," asked Uncle Thaa, "did you say a moment ago that Abraham escaped from the consequences of his sin by simply believing God? That doesn't sound right to me, because I've always heard that the way to be free from sin's effect is by making a lot of merit."

"Uncle Thaa," said Laud, "you've brought up a very important point. Almost everyone nowadays thinks that the only way to keep from going to hell is by making lots of merit. But let me ask you: How much merit-making is enough to get to heaven? If someone says he knows how much is enough, how does he know? And do we know if that's what the ruler of heaven wants?

"ຕັ້ງແຕ່ກ່ອນພະເຈົ້າກໍບອກໃຫ້ຄົນເອົາຂອງໄປຖະຫວາຍໃຫ້ເພິ່ນ ແຕ່ແນວນັ້ນຕ້ອງເປັນແນວມີຊີວິດມີເລືອດ ແລ້ວກໍໝາຍເຖິງແນວທີ່ພະເຈົ້າຄຶດເອົາໄວ້ ຖ້າຄົນເອົາແນວອື່ນຖະຫວາຍເພິ່ນ ເພິ່ນບໍ່ຮັບແນວນັ້ນ ຄືດັ່ງກາອິນລູກຂອງປູ່ສັງກະສາເອົາໝາກໄມ້ຖະຫວາຍເພິ່ນ ເພິ່ນບໍ່ຮັບຍ້ອນວ່າມັນເປັນແນວບໍ່ມີເລືອດ ບໍ່ມີຊີວິດ ມັນຈຶ່ງໄຖ່ເອົາຊີວິດຕົນເອງບໍ່ໄດ້."

ແລ້ວລຸງທາກໍເວົ້າວ່າ, "ໂອ້! ແມ່ນແລ້ວ ຜູ້ທີ່ຟັງເພິ່ນເຊື່ອເພິ່ນກໍຕ້ອງເຮັດນຳແນວທີ່ເພິ່ນບອກ ກາອິນນັ້ນບໍ່ຖະຫວາຍແນວທີ່ເພິ່ນບອກ ກໍໝາຍຄວາມວ່າ ໃຈເຂົາກໍຢູ່ໄກຈາກເພິ່ນ."

ແລ້ວລຸງທາກໍເວົ້າອີກວ່າ, "ຖ້າຈ້າງໄປສະຫວັນບໍໄດ້ ເຮັດແນວໃດຈຶ່ງຈະຫລຸດຈາກຄວາມຜິດຄວາມບາບໄດ້?"

ແລ້ວລອດກໍເວົ້າວ່າ, "ມັນເປັນແນວນີ້ ຄືເຮົາທຸກຄົນກໍເປັນຄົນຜິດຄົນບາບໝົດ ແລ້ວໂທດທີ່ເຮົາເຮັດກໍຕ້ອງຕົກໝໍ້ນາລົກ ເຮົາຊິເອົາເງິນຈ້າງຫລາຍ

"Long ago God told people to make sacrifices to him, but the sacrifices had to be living things with blood, and these sacrifices were pictures of something which God had planned. So if people offered him other things, like when Cain, Adam and Eve's son, offered fruit, he didn't accept their offerings because these other things didn't have blood. They were lifeless, so they couldn't be given in exchange for the life of the one who offered them."

"That makes sense," said Uncle Thaa. "People who listen to and believe God have to do as he tells them. Cain didn't offer what God told him to, which showed that his heart was far away from God."

Uncle Thaa then asked, "If you can't pay your way to heaven, then how can you be free from your sins?"

"It's like this," said Laud. "We're all sinners, everyone of us, and the punishment for our sins is that we must go to hell. It doesn't matter how much money we spend on merit- making, the

ປານໃດກໍ່ຢ່າ ບາບນັ້ນກໍຍັງຢູ່ໃນຈິດ ໃນໃຈເຮົາຢູ່ ຜູ້ຈ້າງນັ້ນກໍໝົດເງິນໝົດທອງຖິ້ມຊື່ໆ ບາບນັ້ນກໍຍັງຢູ່ຄືເກົ່າ."

ແລ້ວລຸງທາກໍເວົ້າວ່າ, "ຖ້າເປັນແນວນັ້ນເຮົາກໍໝົດຄວາມເວົ້າລະ ໃຜກໍ່ຢ່າ ຖ້າຈ້າງໄປບໍ່ໄດ້ກໍຄ້າງຢູ່ນີ້ລະ ໃຜກໍຄືກັນ."

ແລ້ວລຸງທາກໍຖາມອີກວ່າ, "ແລ້ວບໍ່ມີບໍ້ທາງຊິຫວິດຈາກບາບຈາກໂທດຂອງເຮົາ? ພະເຈົ້າຊ່ອຍບໍ່ໄດ້ບໍ້? ເພິ່ນໃຫຍ່ກວ່າໝົດທຸກສິ່ງທຸກຢ່າງ ມີສິດອຳນາດຫລາຍ ຄືຊິຊ່ອຍໄດ້ ຖ້າຂໍນຳເພິ່ນຢ່າງຈິງໃຈຄືງຊ່ອຍໄດ້ເນາະ!"

ແລ້ວລອດກໍຕອບລຸງທາວ່າ, "ເພິ່ນຊ່ອຍໄດ້ແນ່ນອນ ເພິ່ນຄືດຫາທາງໄວ້ໃຫ້ເຮົາແລ້ວ ເພື່ອຊິໃຫ້ເຮົາເປັນອັນນຶ່ງອັນດຽວກັນກັບເພິ່ນ."

ພໍລຸງທາໄດ້ຍິນລອດບອກແນວນັ້ນ ລາວກໍຍົກມືຂຶ້ນ ແລ້ວເວົ້າວ່າ, "ພະເຈົ້າເອີຍ ຊ່ອຍແດ່ທ້ອນ ຜູ້ຂ້າສຸດປັນຍາແລ້ວ ຢາກຫວິດຈາກໝໍ້ນາລົກ ຢາກໄປຢູ່ນຳເຈົ້າ ແຕ່ວ່າບໍ່ຮູ້ຈັກທາງໄປ ສາທຸ ຊ່ອຍຜູ້ຂ້າແດ່ທ້ອນ."

sin in our hearts is still there. We'll just waste all our money trying to get rid of our sins that way."

"In that case then there's nothing any of us can do," said Uncle Thaa. "If we can't pay our way then we're all stuck."

Then Uncle Thaa asked again, "Isn't there some way for us to be freed from our sins? Can't God help us, since he's greater than all and has so much power? He probably could help us if we sincerely asked him to."

"He sure can," answered Laud. "And he's made a way for us already so we can be restored to him."

Uncle Thaa, hearing this, raised his hands in prayer and cried, "O God, please help me! I can't help myself. I don't want to go to hell. I want to go to be with you, but I don't know the way. Please, God, save me!"

ພໍລຸງທາເວົ້າດັ່ງນັ້ນແລ້ວ ລອດກໍເວົ້າວ່າ, "ເອີ້ ຂ້ອຍກໍຂອບຄຸນພະເຈົ້າ ຍ້ອນວ່າເພິ່ນໄດ້ບອກແລ້ວ ທາງຫວິດຈາກໂທດຈາກຄວາມບາບ ບໍ່ແມ່ນວ່າເພິ່ງບຸນເພິ່ງຄຸນຂອງຕົນເອງ ທາງຂອງເພິ່ນກໍຄື ຕ້ອງເພິ່ງບຸນເພິ່ງຄຸນຜູ້ເພິ່ນຊິໃຊ້ມາຊະນະມານ."

ແລ້ວລຸງທາກໍເວົ້າວ່າ, "ຂ້ອຍແຮ່ງຢາກຮູ້ຈັກຜູ້ນັ້ນດຽວນີ້ ຢາກເພິ່ງບຸນເພິ່ງຄຸນຂອງເພິ່ນ ຢາກໄປຢູ່ສະຫວັນນຳເພິ່ນ ຢາກຖາມແນວນຶ່ງດຽວນີ້ ແກະໂຕທີ່ອັບລາຮາມຂ້າຖະຫວາຍແທນອິຊາກຫວ່າງເຈົ້າເວົ້າກໍນີ້ ຄືວ່າໝາຍເຖິງຜູ້ຊິລົງມາຊະນະມານ. ອະທິບາຍໃຫ້ເຮົາຟັງຄັກໆ ເບິ່ງດູວ່າມັນເປັນແນວໃດ?"

ແລ້ວລອດກໍເວົ້າວ່າ, "ແກະໂຕນັ້ນກໍໝາຍເຖິງຜູ້ທີ່ເກີດຈາກເຊື້ອສາຍແມ່ຍິງ ຜູ້ນັ້ນກໍແມ່ນລູກຄົນດຽວຂອງພະເຈົ້າ ທີ່ເພິ່ນສິ່ງລົງມາເກີດເປັນຄົນ ຮັບໂທດໄຖ່ຄວາມບາບຂອງຄົນ ຕາຍແທນຄົນ."

"Uncle Thaa," Laud said, "I'm grateful that God has told us the way to be saved from the penalty of our sins already. We don't need to rely on our own merit. God's way is for us to rely on the merit of the one he sent to defeat the devil."

"I'd like to know who that is right now," responded Uncle Thaa, "so I can trust in his merit and go to heaven with him. But I have another question for you too. That sheep that Abraham sacrificed in place of Isaac… didn't you say that it was a picture of the one who would come down and defeat the devil? Could you explain this to us more clearly?"

Laud answered, "That sheep was a picture of the one who would be the woman's descendant, God's only son, that God was going to send to earth to be born as a human and take the punishment for people's sin, dying in our place."

ແລ້ວລຸງທາກໍຖາມວ່າ, "ລູກຂອງເພິ່ນນັ້ນລົງມາເກີດຢູ່ໃສ?"

ແລ້ວລອດກໍເວົ້າວ່າ, "ເອີ່ ຂ້ອຍຊິໄລ່ເຊື້ອສາຍຂອງອັບລາຮາມຈົນຮູ້ຈົນເຫັນບ່ອນຜູ້ນັ້ນມາເກີດ."

## ເລື່ອງຂອງຢາໂຄບຫລານ ຂອງອັບລາຮາມ

ພໍຊາວບ້ານຊາວເມືອງຮູ້ຈັກເລື່ອງພະເຈົ້າກັບລູກຂອງເພິ່ນ ເຂົາກໍແຮ່ງຢາກຮູ້ຈັກວ່າລູກຂອງພະເຈົ້າລົງມາເກີດຢູ່ໃສ ແລ້ວພວກເຂົາກໍຖາມວ່າ, "ເຮັດແນວໃດຈຶ່ງຈະຮູ້ຈັກເພິ່ນ?"

ແລ້ວເຂົາເຈົ້າກໍໃຫ້ລອດມາເລື້ອຍໆ ມາສອນເລື່ອງພະເຈົ້າ ເບິ່ງພະຄຳພີນຳກັນ ເຂົາກໍຮູ້ຈັກແລ້ວວ່າ ມີແຕ່ພະຄຳຂອງພະເຈົ້າທີ່ນັ້ນທີ່ຈະບອກເຖິງທາງຂອງເພິ່ນໄດ້ ທາງອື່ນກໍມີຫລາຍທາງຢູ່ ແຕ່ວ່າບໍ່ແມ່ນທາງຂອງພະເຈົ້າ ທາງອື່ນຈະເຮັດໃຫ້ຄືນກັບມາຫາເພິ່ນກໍບໍ່ໄດ້ ຍ້ອນວ່າມັນເປັນເລື່ອງຜູ້ອື່ນ ບໍ່ແມ່ນ

"Where was he born?" asked Uncle Thaa.

"As I continue my explanation, I'll be tracing the line of Abraham's descendants," said Laud, "until we get to him."

## *Jacob, Abraham's Grandson*

After the villagers heard Laud mention God's son they were very eager to hear about his birth. And they asked, "How can we get to know him?"

At the villagers' request Laud came back again and again to teach them about God by reading out of the Bible together with them. They now understood that the only way they could learn God's way was from his written word. Even though there are many other ways taught, the other ways are not God's way. These other ways aren't ways by which one can get back to God, because they teach about others, not about

ເລື່ອງພະເຈົ້າກັບລູກຂອງເພິ່ນ ໜັງສືຂອງພະເຈົ້ານີ້ເປັນເລື່ອງພະເຈົ້າ ເປັນເລື່ອງທາງໃຫ້ຫວິດຈາກໂທດຈາກບາບ.

ແລງມື້ນຶ່ງມີຄົນໄປເຮືອນລຸງທາຈົນບໍ່ມີບ່ອນຊິນັ່ງ ແລ້ວກໍພາກັນເບິ່ງພະຄຳພີນຳກັນ ແລ້ວລອດກໍເວົ້າວ່າ, "ເລື່ອງລູກຊາຍຄົນດຽວຂອງພະເຈົ້າກໍເປັນແນວນີ້ ພະເຈົ້າໄດ້ສັນຍາໄວ້ກັບປູ່ສັງກະສາຍ່າສັງກະສີຕັ້ງແຕ່ທຳອິດພຸ້ນວ່າ ຊິມີຜູ້ນຶ່ງເກີດຈາກເຊື້ອສາຍແມ່ຍິງ ຜູ້ນັ້ນລະຊິຊ່ອຍໃຫ້ຄົນຫວິດຈາກຄວາມຜິດຄວາມບາບໄດ້ ແລ້ວເພິ່ນບໍ່ລືມຄຳສັນຍາຂອງເພິ່ນ ທີ່ເພິ່ນເວົ້າວ່າ ຊິແຍກຄົນພວກນຶ່ງໄວ້ໃຫ້ເປັນຊາດພິເສດຂອງເພິ່ນ ຍ້ອນວ່າຊິໃຫ້ລູກຊາຍຂອງເພິ່ນລົງມາເກີດກັບຊຸມນັ້ນ ອັບລາຮາມນັ້ນລະເປັນຜູ້ທີ່ອອກຈາກພໍ່ຈາກແມ່ໄປຢູ່ບ່ອນເພິ່ນບອກ ອັບລາຮາມເປັນຜູ້ເຊື່ອເພິ່ງເພິ່ນ ເປັນດັ່ງນັ້ນລະເພິ່ນຈຶ່ງເວົ້າກັບອັບລາຮາມວ່າ ຄົນໝົດໂລກຊິໄດ້ພອນເປັນສຸກມາທາງເຈົ້າ ເພິ່ນເວົ້າແນວນັ້ນກໍຍ້ອນເພິ່ນຊິໃຫ້ລູກຂອງເພິ່ນລົງມາເກີດນຳເຊື້ອສາຍຂອງອັບລາຮາມ."

God and his Son. God's book tells about God. It tells the way to be free from sin and punishment.

One evening so many people gathered in Uncle Thaa's house that there wasn't room for anyone else to sit down. They began studying the Bible together. Laud began to speak. "Let me tell you about God's only son. God promised Adam and Eve back in the beginning that there would be someone born as a descendant of the woman who would save people from sin. And God never forgot his promise that he would set apart a group of people to be his special nation so he could have his son come down and be born in that nation. Abraham [was the ancestor of that nation]. He left his parents and moved to the place God told him to go. Because Abraham trusted God, God said to him that all people in the world would be blessed through him. He said this because his son was going to come down and be born as a descendant of Abraham."

ແລ້ວລຸງທາກໍເວົ້າວ່າ, "ໂອ້! ເປັນແນວນັ້ນເພິ່ນຈຶ່ງສັນຍາກັບອັບລາຮາມວ່າຄົນທຸກຊາດຊິໄດ້ຮັບຄວາມສຸກມາທາງເຊື້ອສາຍຂອງລາວເນາະ."

ແລ້ວລອດກໍເວົ້າວ່າ, "ແມ່ນລະ ແລ້ວເພິ່ນກໍບອກຫລາຍອັນຫລາຍແນວໄວ້ກັບອັບລາຮາມກັບລູກຫລານຂອງລາວກ່ອນແນວນັ້ນຊິເກີດຂຶ້ນ ເພິ່ນບອກໄວ້ກ່ອນແນວນັ້ນກໍເພື່ອວ່າ ເມື່ອແນວນັ້ນເກີດເຂົາຊິຮູ້ຈັກແນ່ນອນວ່າ ເປັນແນວທີ່ພະເຈົ້າຄຶດໄວ້ກ່ອນແລ້ວ ພະເຈົ້າບອກເຂົາແນວໃດເຂົາກໍຂຽນໄວ້ບໍ່ໃຫ້ລືມ."

ແລ້ວລອດກໍເວົ້າວ່າ, "ພະຄໍາພີທີ່ເຮົາເບິ່ງຢູ່ດຽວນີ້ກໍມາຈາກພວກເຂົາເຈົ້ານັ້ນລະ ຍ້ອນເຂົາເຈົ້າເປັນຜູ້ຂຽນ ເມື່ອອັບລາຮາມເຖົ້າແລ້ວ ພະເຈົ້າກໍໃຫ້ລາວມີລູກຊື່ວ່າອີຊາກ ຕໍ່ມາອີຊາກກໍໄດ້ລູກຊາຍສອງຄົນ ລາວກໍຕັ້ງຊື່ຜູ້ອ້າຍວ່າເອຊາວ ຜູ້ນ້ອງວ່າຢາໂຄບ ເມື່ອຢາໂຄບຫລານຂອງອັບລາຮາມໃຫຍ່ຂຶ້ນ ພະເຈົ້າກໍໄດ້ມອບຄໍາສັນຍາທີ່ເຄີຍສັນຍາກັບປູ່ຍ່າຕາຍາຍຂອງຢາໂຄບ

"Oh," said Uncle Thaa, "so that's why he promised Abraham that people of every nation would be blessed through his descendant!"

"That's right," replied Laud. "And he told Abraham and his descendants many things that were going to happen in the future. He did this so that when the things he told them came true they would be sure that what was happening was all part of what God had planned. They wrote down what God told them so his words wouldn't be forgotten.

"This Bible which we're using right now came from what they wrote down long ago. When Abraham was old God gave him a son named Isaac. Later Isaac had two sons. Isaac named the older son Esau and the younger one Jacob. When Jacob, Abraham's grandson, grew up, God gave him the same promises he had given to his grandfather.

ໃຫ້ຢາໂຄບເປັນຜູ້ສືບຕໍ່ໄປ ທີ່ວ່າຊິໃຫ້ລາວມີລູກມີເຕົ້າເປັນປະເທດໃຫຍ່ເມືອງໃຫຍ່ຈົນນັບບໍ່ໄດ້."

ແລ້ວພໍ່ສີກໍເວົ້າວ່າ, "ເຂົາເຈົ້າແມ່ນຄົນພວກໃດແທ້ ເຂົາຢູ່ເມືອງໃດປະເທດໃດ?"

ແລ້ວລອດກໍເວົ້າວ່າ, "ຟັງເດີ ຂ້ອຍຊິອ່ານໃນບົດທີ 35 ຂໍ້ 1 ຮອດ 12." ແລ້ວລອດກໍອ່ານວ່າ,

*1* ແລ້ວພະເຈົ້າກໍໄດ້ບອກກັບ
ຢາໂຄບວ່າ, "ໃຫ້ຍ້າຍຄົວໄປຢູ່
ເມືອງເບັດເອັນໂລດເດີ ແລ້ວໃຫ້
ເຮັດແທ່ນບູຊາເຮົາ ເຮົານີ້ລະແມ່ນ
ພະເຈົ້າທີ່ມາຫາເຈົ້າຢູ່ທີ່ນັ້ນ ຕອນ
ເຈົ້າພວມໜີເອຊາວອ້າຍເຈົ້າມາ."

*2* ແລ້ວຢາໂຄບກໍບອກຄົນໃນ
ຄອບຄົວລາວກັບບອກພວກຄົນທີ່ຢູ່
ນຳວ່າ, "ໃຫ້ທຸກຄົນຖິ້ມພະທີ່ເອົາ
ມາຈາກພວກຄົນຕ່າງຊາດ ກັບ
ອາບນ້ຳອາບທ່າໃຫ້ສະອາດ ແລ້ວ

So the promises were inherited by Jacob for him to pass on to his descendants: that his descendants would become such a large nation that they couldn't be counted."

Sii's father interrupted to ask, "What people are they? What country are they in?"

In reply Laud had people listen to him as he read from Genesis 35:1-12:

*1* Then God said to
Jacob, "Go up to Bethel
and settle there, and
build an altar there to
God, who appeared to
you when you were
fleeing from your
brother Esau."

*2* So Jacob said to his
household and to all
who were with him,
"Get rid of the foreign
gods you have with you,
and purify yourselves
and change your
clothes. *3* Then come,
let us go up to

ໃສ່ເສື້ອຜ້າໃໝ່ 3 ແລ້ວໃຫ້ເຮົາພາກັນ
ຍ້າຍໄປຢູ່ເມືອງເບັດເອັນ ພໍ່ຈະເຮັດ
ແທ່ນບູຊາພະເຈົ້າຢູ່ນັ້ນ ຍ້ອນເພິ່ນ
ເປັນຜູ້ຊ່ອຍພໍ່ຍາມທຸກຍາມຍາກ ບໍ່
ວ່າພໍ່ຈະຢູ່ໃສກໍຕາມ ເພິ່ນບໍ່ເຄີຍປະບໍ່
ເຄີຍຖິ້ມ."

4 ແລ້ວໝົດທຸກຄົນກໍໄດ້ເອົາພະທັງ
ຫລາຍທີ່ເອົາມານັ້ນ ໂຮມທັງຕຸ້ມຫູຂອງ
ເຂົາ (ທີ່ເປັນພະຂອງເຂົາແນວນຶ່ງ) ມາ
ມອບໃຫ້ຢາໂຄບ ລາວກໍໄດ້ເອົາໄປຝັງ
ຖິ້ມໝົດ ລາວຝັງໄວ້ໃຕ້ກົກໄມ້ໃຫຍ່ໃກ້
ກັບເມືອງຊີເຄັມ.

5 ແລ້ວເຂົາກໍພາກັນຂົນຄົວອອກ
ເດີນທາງໄປ ແລ້ວພະເຈົ້າເຮັດໃຫ້ພວກ
ຊາວເມືອງທັງຫລາຍແຖວນັ້ນເກີດຢ້ານ
ຢ່າງໃຫຍ່ ບໍ່ມີໃຜຈະກ້າໄລ່ຕາມໂຈມຕີ
ພວກຢາໂຄບ. 6 ຢາໂຄບກັບຄອບຄົວ
ໂຮມທັງພວກຄົນທີ່ມານຳກໍໄດ້ເດີນທາງ
ມາຮອດເມືອງລູເຊ (ຄືເບັດເອັນ) ເມືອງ
ນີ້ກໍຢູ່ໃນແຜ່ນດິນການາອານຄືກັນ 7
ແລ້ວລາວກໍເຮັດແທ່ນບູຊາຢູ່ນັ້ນ ເອີ້ນ
ບ່ອນນັ້ນວ່າ ເອນເບັດເອນ (ແປວ່າ

Bethel, where I will
build an altar to
God, who answered
me in the day of my
distress and who
has been with me
wherever I have
gone."

4 So they gave
Jacob all the
foreign gods they
had and the rings in
their ears, and
Jacob buried them
under the oak at
Shechem.

5 Then they set
out, and the terror
of God fell upon
the towns all
around them so that
no one pursued
them. 6 Jacob and
all the people with
him came to Luz
(that is, Bethel) in
the land of Canaan.
7 There he built an
altar, and he called
the place El Bethel,
because it was
there that God

ບ່ອນຢູ່ຂອງພະເຈົ້າ ຜູ້ຍິ່ງໃຫຍ່) ຄື
ຕອນຢາໂຄບໜີອ້າຍເອຊາວມາແຕ່ທຳ
ອິດນັ້ນ ພະເຈົ້າໄດ້ມາຫາລາວຢູ່
ບ່ອນນີ້ລະ

8 ບາດນີ້ແມ່ໃຫຍ່ເດໂບລາຜູ້ທີ່ເຄີຍ
ມີໜ້າທີ່ເບິ່ງແຍງນາງເລເບກາມາແຕ່
ນ້ອຍ ລາວກໍຕາຍຢູ່ນັ້ນ ພວກເຂົາ
ໄດ້ຝັງສົບລາວໄວ້ໃຕ້ກົກໄມ້ໃຫຍ່ຢູ່
ຫລຸບເມືອງເບັດເອັນ ກົກໄມ້ນີ້ເຂົາ
ຈຶ່ງເອີ້ນວ່າ ອານໂລນບາຄູດ (ແປວ່າ
ບ່ອນຮ້ອງໄຫ້).

9 ຕອນຢາໂຄບເດີນທາງຈະໄປ
ແຜ່ນດິນປັດດານອາລຳນັ້ນ ພະເຈົ້າ
ໄດ້ມາຫາລາວຢູ່ນີ້ ລາວກັບມາຮອດ
ນີ້ພະເຈົ້າກໍມາຫາລາວອີກ 10 ແລ້ວ
ພະເຈົ້າໄດ້ເວົ້າກັບລາວວ່າ, "ເຈົ້າຊື່
ຢາໂຄບແຕ່ຈະບໍ່ຊື່ແນວນີ້ອີກຕໍ່ໄປ
ເຈົ້າຈະໄດ້ຊື່ໃໝ່ວ່າ ອິດສະລາເອັນ."

11 ແລ້ວພະເຈົ້າກໍອວຍພອນຢາໂຄບ
ວ່າ, "ເຮົາເປັນພະເຈົ້າຜູ້ມີລິດສູງສຸດ
ໃຫ້ເຊື້ອສາຍຂອງເຈົ້າແຜ່ອອກ

revealed himself to
him when he was
fleeing from his
brother.

*8* Now Deborah,
Rebekah's nurse, died
and was buried under
the oak below Bethel.
So it was named
Allon Bacuth.

*9* After Jacob
returned from Paddan
Aram, God appeared
to him again and
blessed him. *10* God
said to him, "Your
name is Jacob, but
you will no longer be
called Jacob; your
name will be Israel."
So he named him
Israel.

*11* And God said to
him, "I am God
Almighty; be fruitful
and increase in
number. A nation

ຫລາຍໆ ເດີ ເຈົ້າຈະໄດ້ເປັນພໍ່ຂອງ
ຕະກູນໃຫຍ່ຫລາຍຕະກູນ ຈົນກາຍ
ເປັນຊາດໃຫຍ່, ແລ້ວຈະມີກະສັດ
ຫລາຍອົງເກີດມາຈາກເຊື້ອສາຍເຈົ້າ,
12 ແຜ່ນດິນທີ່ເຮົາໄດ້ໃຫ້ອັບລາຮາມ
ແລະອີຊາກນັ້ນ ເຮົາຈະມອບໃຫ້
ເຈົ້າກັບເຊື້ອສາຍຂອງເຈົ້າເປັນຜູ້ສືບ
ຕໍ່ໄປ."

and a community of nations will come from you, and kings will come from your body.
12 The land I gave to Abraham and Isaac I also give to you, and I will give this land to your descendants after you."

ແລ້ວພໍ່ສີກໍເວົ້າວ່າ, "ເອີ້ ຮູ້ຈັກແລ້ວບາດນີ້ ພວກອິດສະລາເອັນນີ້ເນາະເປັນພວກທີ່ພະເຈົ້າເລືອກໄວ້ ຄືດັ່ງເຄີຍໄດ້ຍິນຢູ່ ອິດສະລາເອັນ ຢູ່ທາງຕາເວັນຕົກເອເຊຍເຮົາແມ່ນບໍ?"

"Now I know," said Sii's father. "The Israelis are the people God chose. I think I've heard of them before. Israel is west of where we live in Asia, right?"

ແລ້ວລອດກໍເວົ້າວ່າ, "ແມ່ນລະ ພວກນັ້ນລະລູກຫລານຂອງອັບລາຮາມ ຊຶ່ເອີ້ນວ່າພວກຢິວກໍໄດ້ ແຕ່ວ່າຜູ້ນັ້ນຍັງບໍ່ທັນລົງມາເກີດໄດ໊ສະໄໝຢາໂຄບ. ຫລັງຈາກສະໄໝຂອງຢາໂຄບມາປະມານພັນຫ້າຮ້ອຍປີ ພະເຈົ້າຈຶ່ງໃຫ້ລູກຊາຍຂອງເພິ່ນມາເກີດ ເພິ່ນກໍບໍ່ລືມຄຳສັນຍາຂອງເພິ່ນ ເພິ່ນກໍໄດ້ບອກໄດ້ສອນຫລາຍອັນຫລາຍແນວໃຫ້ພວກອິດສະລາເອັນຮູ້ເຖິງເລື່ອງເພິ່ນ ກັບ

"Right," said Laud, "And they're Abraham's descendants. Another name for the Israelis is the Jews. In the time of Jacob, however, the one who was going to come down and be born in the world hadn't come yet. It was about 1500 years later before God sent down his son. But during that long time God never forgot his promise. He taught the Israelis many, many

ທາງທີ່ເພິ່ນຄຶດໄວ້ໃຫ້ຄົນກັບໄປເປັນອັນນຶ່ງອັນດຽວກັນກັບເພິ່ນ."

## *ອິດສະລາເອັນໄປຢູ່ແຖວເອຢິບ*

ມື້ນຶ່ງລອດກໍໄດ້ໄປເຮືອນສາ ແລ້ວລຸງທາກໍເວົ້າວ່າ, "ບອກແດ່ນໍາເລື່ອງປະເທດອິດສະລາເອັນນັ້ນ ຕັ້ງແຕ່ເພິ່ນຕັ້ງຊື່ຢາໂຄບວ່າອິດສະລາເອັນເຂົາເຮັດແນວໃດ? ເຂົາຢູ່ແນວໃດ? ດິນນໍາໝູ່ນັ້ນເພິ່ນໃຫ້ເຂົາໝົດບໍ່ຫລືແນວໃດ? ແລ້ວພວກອິດສະລາເອັນທຸກມື້ນີ້ແມ່ນດິນບ່ອນນັ້ນຕີ້? ແລ້ວພວກເຂົາກໍເປັນຜູ້ນໍາຜູ້ຟັງເພິ່ນທຸກຄົນບໍ? ເປັນແນວໃດເລື່ອງນີ້?"

ແລ້ວລອດກໍເວົ້າວ່າ, "ເລື່ອງທີ່ຖາມມາກໍຢູ່ໃນພະຄໍາພີນີ້ໝົດ ຍ້ອນວ່າເພິ່ນກໍໃຫ້ເຂົາຂຽນໄວ້ໝົດ ຂ້ອຍຊິເວົ້າເລື່ອງນີ້ໃຫ້ຟັງເດີ ຕັ້ງແຕ່ພະເຈົ້າສັນຍາໄວ້ກັບຢາໂຄບວ່າຊິມອບດິນບ່ອນນັ້ນໃຫ້ພວກເຂົາກໍມີລູກມີເຕົ້າແຜ່ຂຶ້ນເຕັມ

things about himself and about the way he had planned for people to return to him."

## *Israel Moves to Egypt*

One day Laud went to Saa's house and talked to the villagers about God again. Uncle Thaa said, "Would you tell us about the country of Israel? After God gave Jacob the name Israel what happened to him? Did he become owner of all the land around there? And is it the same place as the Israelis live today? And do they all follow and believe in God? I'd like to know about these things."

"The answers to your questions are right here in the Bible," Laud replied. "God had people write them down. I'm going to tell you what the Bible says. After God promised Jacob that he would give that land to him, Jacob and his family grew rapidly

ຢາໂຄບມີລູກຊາຍສິບສອງຄົນ ໃນສິບສອງຄົນນັ້ນລາວຮັກແພງໂຢເຊັບຫລາຍກວ່າໝູ່ ຍ້ອນເລື່ອງນີ້ລະພວກອ້າຍຈຶ່ງເອົາໂຢເຊັບຂາຍໃຫ້ພວກພໍ່ຄ້າແລ້ວພວກທີ່ຊື້ໂຢເຊັບນັ້ນກໍພາໂຢເຊັບໄປເອຢິບ ແລ້ວກໍຂາຍໃຫ້ຊາວເອຢິບນັ້ນ ພວກອ້າຍຂອງໂຢເຊັບກໍຕົວະພໍ່ວ່າ ສັດຮ້າຍກັດນ້ອງຕາຍແລ້ວ.

ໂຢເຊັບກໍຮັບຄວາມທຸກຄວາມຍາກຫລາຍອັນຫລາຍແນວຢູ່ເມືອງເອຢິບ ຕໍ່ມາໂຢເຊັບກໍເປັນທີ່ຖືກອົກຖືກໃຈກະສັດ ກະສັດກໍໃຫ້ເຂົາເປັນຜູ້ປົກຄອງປະເທດເອຢິບ ຢູ່ມາບ້ານເມືອງພໍ່ແມ່ຂອງໂຢເຊັບກໍເກີດອຶດຢາກໝາກຫິວ ບໍ່ມີແນວຊິກິນ ແລ້ວພໍ່ຂອງໂຢເຊັບກໍໃຊ້ພວກອ້າຍຂອງໂຢເຊັບໄປເມືອງເອຢິບ ໄປຂໍຊື້ເຂົ້າຊື້ນ້ຳມາກິນພໍເຂົາໄປຮອດກໍໄປຂໍຊື້ກັບໂຢເຊັບແຕ່ເຂົາບໍ່ຮູ້ວ່າເປັນໂຢເຊັບຊໍ້າ ແຕ່ໂຢເຊັບຍັງຈື່ພວກອ້າຍໄດ້ຢູ່ ໂຢເຊັບກໍຂັງພວກອ້າຍໄວ້ໃນຄຸກຄາວນຶ່ງ ເພິ່ນລອງໃຈພວກອ້າຍ ຈົນພວກເຂົາຮູ້

in number. Jacob had twelve sons. But he loved one son named Joseph more than the others. This angered Joseph's older brothers, so they sold Joseph to some travelling merchants. The merchants took Joseph to Egypt where they sold him to an Egyptian. Meanwhile Joseph's brothers tricked their father into thinking that Joseph had been devoured by some wild animal.

"Joseph had all kinds of hardships in Egypt, but eventually he gained favor with the king of Egypt. The king put him in authority over all Egypt. A while later the country where Joseph's parents lived had a severe famine. Joseph's father sent Joseph's older brothers to Egypt to try to buy food. When they got there they went to the ruler to buy grain, without realizing that the ruler was their brother Joseph. But Joseph recognized his brothers. He put them in prison for a few days to see if they were still the same as before. Before long they remembered how bad they had

ເມື່ອວ່າພວກເຂົາເຄີຍເຮັດແນວບໍ່ຈິບບໍ່ດີໃສ່ນ້ອງ ແລ້ວໂຢເຊັບຈຶ່ງບອກພວກອ້າຍວ່າ ໂຕເອງຄືນ້ອງຂອງພວກອ້າຍ ແລ້ວກໍບອກກັບເຂົາວ່າ ນ້ອງບໍ່ຖືໂທດທີ່ພວກອ້າຍຂາຍນ້ອງມາພີ້ ຖືວ່າພະເຈົ້າເປັນຜູ້ສົ່ງມາ ເພື່ອຊິບໍ່ໃຫ້ພວກເຮົາອຶດແນວຢູ່ແນວກິນ

ພໍກະສັດເມືອງເອຢິບຮູ້ຂ່າວວ່າພວກອ້າຍນ້ອງໂຢເຊັບມາຫາ ເພິ່ນກໍບອກໃຫ້ພວກເຂົາຍ້າຍຄົວມາຢູ່ເອຢິບນຳ ເພື່ອຊິລ້ຽງເຂົາຈົນຫວິດຊ່ວງແຫ້ງແລ້ງ ແລ້ວຄອບຄົວຂອງຢາໂຄບກໍພາກັນຍ້າຍມາຢູ່ເອຢິບໝົດ ໂຮມຜູ້ຊາຍທັງໝົດເຈັດສິບຄົນພໍດີ

ພວກອິດສະລາເອັນກໍຢູ່ເອຢິບດົນສົມຄວນ ຈົນຄົນລຸ້ນໂຢເຊັບກັບພວກອ້າຍນ້ອງຕາຍໝົດ ແຕ່ວ່າພວກລູກຫລານຂອງອິດສະລາເອັນກໍໄດ້ແຜ່ຂື້ນຢ່າງຫລາຍໃນເອຢິບ ຕໍ່ມາພວກເອຢິບກໍເກີດຄວາມຕົກໃຈຢ້ານວ່າພວກອິດສະລາເອັນຊິກືນກິນຊາດເຂົາ ເຂົາກໍເລີຍບັງຄັບໃຫ້ເປັນທາດຢູ່ເອຢິບ

been to their younger brother Joseph. Then Joseph told them who he was, that he was their younger brother. But he told them that he carried no grudge against them for selling him as a slave into Egypt, because he believed that it was God who had sent him there in order to save all of them from starvation.

"When the king of Egypt heard that Joseph's brothers had come, he told them to move their families to Egypt so he could provide for their needs until the drought was over. So Jacob and his whole family moved to Egypt. By that time the number of men and boys in the family totaled 70 people.

"The Israeli people lived in Egypt a long time. Eventually all the people of Joseph's generation died. Meanwhile the number of Israelis continued to grow rapidly. The Egyptians became alarmed. They began to fear that their country would be taken over by the Israelis, so they forced the Israelis to become their slaves. The Israelis were slaves there in Egypt for about

ຮ້ອຍສອງຮ້ອຍປີ ພວກອິດສະລາເອັນ ກໍຮ້ອງຫາພະເຈົ້າໃຫ້ເພິ່ນຊ່ອຍອອກຈາກ ການເປັນທາດ ພະເຈົ້າໃຫ້ມີຜູ້ນຶ່ງຊື່ ໂມເຊ ພາເຂົາອອກຈາກການເປັນທາດ ໃນເອຢິບ ແລ້ວກໍພາພວກ ອິດສະລາເອັນອອກໄປບ່ອນທີ່ ອັບລາຮາມປູ່ຍ່າຕາຍາຍຂອງພວກ ອິດສະລາເອັນເຄີຍຢູ່ ເຂົາຈຶ່ງໄດ້ ແຜ່ນດິນຕາມຄໍາສັນຍາຂອງພະເຈົ້າທີ່ ເພິ່ນບອກກັບອັບລາຮາມວ່າ ຈະມອບ ໃຫ້ລູກຫລານຂອງເຈົ້າ."

ພໍເວົ້າແລ້ວລຸງທາກໍເວົ້າວ່າ, "ພວກປູ່ ຍ່າຕາຍາຍຂອງເຮົາເດໄປຢູ່ໃສຕອນນັ້ນ ແລ້ວເປັນຫຍັງພວກເຮົາຈຶ່ງລືມພະເຈົ້າ?"

ແລ້ວລອດກໍຕອບວ່າ, "ເອີ້ ແຕ່ກີ້ແຕ່ ກ່ອນພະເຈົ້າໃຫ້ຄົນແຕກພາສາກັນຢູ່ຫໍ ບາເບັນບ່ອນທາດໃຫຍ່ໆ ແຕ່ວ່າພວກ ຄົນເຮົາກໍເວົ້າເປັນພາສາໃຜພາສາມັນ ຍ້າຍໄປຢູ່ທາງຕາເວັນອອກ ຍ້າຍໄປ ເລື້ອຍຈົນຮອດບ່ອນເຮົາຢູ່ທຸກມື້ນີ້

two hundred years. They cried out to God to save them. Finally God had a man named Moses lead them out of slavery. He led them back to the land where their ancestor Abraham had lived. So they finally did get the land that God had promised to Abraham, saying, 'I will give it to your descendants.' "

When Laud finished speaking, Uncle Thaa asked, "What about our ancestors? Where were they in those days? And why did our people forget about God?"

"Well," replied Laud, "when God divided people's language at the tower of Babel, people all started speaking different languages. Our ancestors' language was different from the others. They traveled east and kept moving farther and farther until they reached the place where we live nowadays.

ແຕ່ທຳອິດເຂົາກໍຮູ້ຈັກພະເຈົ້າ ເຂົາຫາກບໍ່ຟັງບໍ່ໄປນຳເພິ່ນ ແລ້ວດົນໄປກໍຫລົງເພິ່ນ ໄປນຳຜີນຳສາງ ບໍ່ໄດ້ຈື່ໄດ້ຈຳເກັບຄຳບອກຄຳເວົ້າຂອງເພິ່ນໄວ້ ຜູ້ຢາກຮູ້ເລື່ອງພະເຈົ້າກໍບໍ່ມີທາງເລີຍ."

ແລ້ວລອດກໍເວົ້າອີກວ່າ, "ພໍ່ແມ່ພີ່ນ້ອງເອີຍ ດຽວນີ້ຄົນກໍຫລົງກໍລືມພະເຈົ້າ ພວກເຮົາຫລົງທາງພະເຈົ້າມາແຕ່ເຫິງນານແລ້ວ."

ແລ້ວລອດກໍຍົກພະຄຳພີຂຶ້ນ ແລ້ວເວົ້າວ່າ, "ນີ້ລະໜັງສືຂອງເພິ່ນ ແນວຈະບອກທາງໃຫ້ ຖ້າຜູ້ໃດຈະກັບເປັນອັນນຶ່ງອັນດຽວກັບພະເຈົ້າ ກໍໃຫ້ຟັງຄຳເວົ້າຂອງເພິ່ນນີ້ເດີ ມີສອງທາງ ພວກເຈົ້າຈະໄປທາງໃດ? ຈະຢູ່ນຳເທວະດາຊຸມໃດ? ຢາກຢູ່ກັບພະເຈົ້າຫລືວ່າຢາກຢູ່ກັບໂຕຂີ້ຕົວະນັ້ນ ໃຫ້ພໍ່ແມ່ພີ່ນ້ອງເລືອກເອົາເດີ."

At first they knew about God, but they didn't pay any attention to him. Eventually after a long time they forgot about him and began following evil spirits. They didn't remember or preserve his words and commands. If anyone wanted to learn about God they had no way to do so.

"Friends and relatives," said Laud, "people nowadays have forgotten God. We've strayed away from him. We've left his way and been lost for a very long time."

Holding up his Bible, Laud said, "This book is God's word. It can tell us the way. Whoever wants to be reunited to God needs to listen to God's word in this book. There are only two ways for you to choose. Which way will you take? Which group of angels are you going to side with? Do you want be with God or do you want to go be with those lying spirits? You have to make your choice!"

## *ຈົບເຫລັ້ມສາມ*

## *(ອ່ານຕໍ່ເຫລັ້ມ 4)*

ຖ້າທ່ານອ່ານແລ້ວມີຄວາມສົນໃຈຂໍ ໃຫ້ທ່ານຕິດຕໍ່ໄດ້ທີ່...

## ***END OF BOOK THREE***

***Be sure to read Book 4 as well!***

For more information, contact:

# ເລື່ອງສ່ຽວສີກັບສ່ຽວສາ ເຫຼັ້ມ 1,2,3,4





780895 25632

LSBN : 0 - 89955 - 2672 - 1

The Story of Two Friends, Book 3

**1st Edition**


| | |
|---|---|
| **Australia** | **$ 0.49 RRP** |
| **USA** | **$ 0.25** |
| **UK** | **£ 0.20** |
| **France** | **1.89 FF** |
| **Thailand** | **ß 10** |
| **Laos** | **Kip 2000** |

**For bulk orders of 10,000 or more, please visit our website at:**
**www.geocities.com/asiabrochures**
**You can also email us at: asiabrochures@hotmail.com**